# ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628 ໜ່ວຍ 19 ບ້ານ ໂພນພະເນົາ ນາມ. 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6


ເລກທີ 0105/22- /ມຫທຊ
ນະຄອງຫຼວງວຽງຈັນ, ວັນທີ 08 ເມສາ 2022

**ໜັງສືເຊີນປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021**

**ຮຽນ:** ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
**ເລື່ອງ:** ຂໍເຊີນເຂົ້າຮ່ວມກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2021

ຕາມມະຕິປະຊຸມສະພາບໍລິຫານ ວັນທີ 18 ມີນາ 2022 ທີ່ກຳນົດໃຫ້ບໍລິສັດຮຽກປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ເພື່ອພິຈາລະນາວາລະຕ່າງໆ ທີ່ກົດໝາຍກຳນົດໄວ້ ບໍລິສັດຈຶ່ງຂໍເຊີນທ່ານໃນຖານະຜູ້ຖືຮຸ້ນຂອງບໍລິສັດຈາກການປິດທະບຽນຜູ້ຖືຮຸ້ນເມື່ອ **ວັນທີ 01 ເມສາ 2022** ເຂົ້າຮ່ວມປະຊຸມໂດຍມີລາຍລະອຽດດັ່ງຕໍ່ໄປນີ້:

| | | |
|---|---|---|
| ລັກສະນະການປະຊຸມ | : | ປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 |
| ວັນທີປະຊຸມ | : | ວັນທີ 28 ເມສາ 2022 |
| ເວລາ | : | 09:30 ໂມງ ເປັນຕົ້ນໄປ |
| ສະຖານທີ່ປະຊຸມ | : | ທີ່ **ຄອນເວັນຊັນ ເຊັນເຕີ, ຊັ້ນ 4, ຫ້ອງ Pearl Room ໂຮງແຮມແລນມາກ ແມ່ຂອງ ລີເວີໄຊທ໌**, ບ້ານ ທາດຂາວ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ |

**ວາລະການປະຊຸມ ດັ່ງລຸ່ມນີ້:**

**ວາລະທີ 1** **ພິຈາລະນາຮັບຮອງລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020**

**ວາລະທີ 2** **ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021**

**ວາລະທີ 3** **ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ ( ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ ) ປະຈຳປີ 2021**

**ວາລະທີ 4** **ພິຈາລະນາຮັບຮອງການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022**

# ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628 ໜ່ວຍ 19 ບ້ານ ໂພນພະເນົາ ນມ. 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6


ວາລະທີ 5 ພິຈາລະນາອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2021 ແລະ ວິທີການແບ່ງປັນເງິນປັນຜົນ

ວາລະທີ 6 ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດປະຈຳປີ 2022

ວາລະທີ 7 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃໝ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ

ວາລະທີ 8 ພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການບໍລິສັດ

ວາລະທີ 9 ພິຈາລະນາອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2022

ວາລະທີ 10 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີປະຈຳປີ 2022

ວາລະທີ 11 ເລື່ອງອື່ນໆ ( ຖ້າມີ )

ຈຶ່ງຮຽນມາເພື່ອເຂົ້າຮ່ວມປະຊຸມໃນວັນ ແລະ ເວລາດັ່ງກ່າວ ຫາກບໍ່ສາມາດເຂົ້າປະຊຸມໄດ້ດ້ວຍຕົວເອງ ສາມາດມອບສິດໃຫ້ຜູ້ອື່ນເຂົ້າຮ່ວມປະຊຸມ ໂດຍຈັດເຮັດໜັງສືມອບສິດ ແລະ ແຈ້ງໃຫ້ບໍລິສັດຊາບກ່ອນລ່ວງໜ້າກ່ອນການປະຊຸມ

ແຍ່ງ ຂໍສະແດງຄວາມນັບຖື

ທ່ານ ຊາຄຣິດ ນັກສອນ
ປະທານສະພາບໍລິຫານ

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

# ເອກະສານຄັດຕິດ ກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2021

1. ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2021
2. ໃບມອບສິດ
3. <u>ເອກະສານປະກອບວາລະທີ 1</u>: ລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020
4. <u>ເອກະສານປະກອບວາລະທີ 2 ແລະ 6</u>: ບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ, ລາຍງານປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2022
5. <u>ເອກະສານປະກອບວາລະທີ 3:</u> ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2021
6. ຄຳແນະນຳກ່ຽວກັບການລົງຄະແນນສຽງ
7. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
8. ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ
9. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ

**ໝາຍເຫດ**

1. ຜູ້ຖືຮຸ້ນທຸກທ່ານຕ້ອງໄດ້ນຳເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 8 ເມສາ 2022 ຢູ່ ອາຄານ ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: (856-20) 454361-4, ແຟັກ: (856-21) 454361-4
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນຄົນຕ່າງປະເທດ) ມາສະເໜີຕົວເພື່ອເຂົ້າຮ່ວມກອງປະຊຸມ
3. ຖ້າຫາກທ່ານບໍ່ສະດວກທີ່ໄປຮ່ວມກອງປະຊຸມດ້ວຍຕົນເອງ ຈະມອບສິດໃຫ້ບຸກຄົນອື່ນໄປເຂົ້າຮ່ວມແທນກໍ່ໄດ້ ໂດຍມອບສິດໃຫ້ຕາມແບບທີ່ຄັດຕິດມາພ້ອມໜັງສືສະບັບນີ້ ແລະ ນຳມາມອບໃຫ້ປະທານກອງປະຊຸມ ຫຼື ຜູ້ທີ່ປະທານກອງປະຊຸມມອບໝາຍ ຊຶ່ງຜູ້ໄດ້ຮັບມອບສິດຕ້ອງໄດ້ນຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນຄົນຕ່າງປະເທດ) ມາສະເໜີຕົວເພື່ອເຂົ້າຮ່ວມກອງປະຊຸມ
4. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດ ເຂົ້າຮ່ວມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດດັ່ງກ່າວ ແລະ ໝາຍ (✔) ເພື່ອເລືອກເອົາສະພາບໍລິຫານອິດສະຫຼະຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານຄັດຕິດນັ້ນ ສົ່ງເຖິງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ, ຖະໜົນ ໄກສອນພົມວິຫານ, ບ້ານ ໂພນພະເນົາ ກມ5, ເມືອງ ໄຊເສດຖາ,ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນ ວັນທີ 21 ເມສາ 2022
5. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານ ສາມາດສອບຖາມ ທ່ານ ນາງ ກູ່ ທຳມະວົງ , ໂທ: (856-20) 58049885

**MAHATHUEN LEASING PUBLIC COMPANY**
628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR
TEL 021 418062 - 418066

**ວາລະທີ 1 ພິຈາລະນາຮັບຮອງ ລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ເພື່ອໃຫ້ຜູ້ຖືຮຸ້ນພິຈາລະນາຮັບຮອງລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ເມື່ອວັນທີ 27 ເມສາ 2021 ຕາມເອກະສານຄັດຕິດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນ ຄວນຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ເມື່ອວັນທີ 27 ເມສາ 2021 ທີ່ຜ່ານມາ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິທົ່ວໄປ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ ” ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ” ໂດຍລາຍງານຜົນບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021 ແມ່ນມີລາຍລະອຽດໃນເອກະສານຄັດຕິດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ແລະ ລາຍງານປະຈຳປີ 2021 ເຊິ່ງໄດ້ຜ່ານການພິຈາລະນາຂອງສະພາບໍລິຫານ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 3 ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2021**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ ”ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາເອກະສານລາຍງານການເງິນຂອງບໍລິສັດ” ລາຍງານການເງິນຂອງບໍລິສັດ ປະຈຳປີ 2021 ແມ່ນມີລາຍລະອຽດໃນເອກະສານຄັດຕິດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2021 ເຊິ່ງໄດ້ຜ່ານການພິຈາລະນາຂອງສະພາບໍລິຫານ ແລະ ຜ່ານການກວດສອບຈາກຜູ້ກວດສອບບັນຊີພາຍນອກແລ້ວ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**MAHATHUEN LEASING PUBLIC COMPANY**
628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR
TEL 021 418062 - 418066

**ວາລະທີ 4** **ພິຈາລະນາຮັບຮອງການກູ້ຢືມເງິນຈາກສະຖາບັນການເງິນ ແລະ ແນວທາງການຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ ສຳລັບການຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ອີງຕາມແຜນທຸລະກິດຂອງບໍລິສັດ ສຳລັບປີ 2022 ເຊິ່ງບໍລິສັດຕ້ອງຂະຫຍາຍທຸລະກິດ ດັ່ງນັ້ນ ບໍລິສັດຕ້ອງຈຶ່ງ ການສິນເຊື່ອໃຫມ່ ປະມານ 14.000 ລ້ານກີບ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາການກູ້ຢືມເງິນຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງ ເງິນກູ້ຢືມ ເພື່ອໃຊ້ ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022 ເຊິ່ງໄດ້ຜ່ານການພິຈາລະນາ ຂອງສະພາບໍລິຫານແລ້ວ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນ ສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 5** **ພິຈາລະນາອະນຸມັດການຈັດສັນ ກຳໄລສຸດທິປະຈຳປີ 2021 ແລະ ວິທີການແບ່ງປັນເງິນປັນຜົນ**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 155 ກຳນົດໃຫ້ " ການແບ່ງເງິນປັນຜົນໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ "

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 156 ບໍລິສັດຕ້ອງ ຈັດສັນກຳໄລສຸດທິປະຈຳປີ ເປັນເງິນສຳຮອງທຸກປີໃນອັດຕາ 10 ສ່ວນຮ້ອຍ ເມື່ອກອງທຶນສຳຮອງສະສົມເຄິ່ງ ໜຶ່ງຂອງທຶນຈົດທະບຽນ ບໍລິສັດອາດຈະໂຈະການຫັກເງິນດັ່ງກ່າວ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນດີຈັດສັນກຳໄລສຸດທິປະຈຳປີ ໃນອັດຕາ 10 ສ່ວນຮ້ອຍຂອງກຳໄລສຸດທິ ເພື່ອເປັນທຶນສຳຮອງ ແລະ ຕົກລົງ ຈ່າຍເງິນປັນຜົນຈາກການດຳເນີນງານປະຈຳປີ 2021 ຕາມລາຍລະອຽດດັ່ງນີ້:

1. ສຳຮອງຕາມກົດໝາຍຈຳນວນ 759,159,787 ກີບ ເທົ່າກັບຮ້ອຍລະ 10,00 ຂອງກຳໄລສຸດທິປະຈຳປີ
2. ຈັດສັນເປັນເງິນປັນຜົນ ຈຳນວນ 2,280,000,000 ກີບ ເທົ່າກັບຮ້ອຍລະ 30.03 ຂອງກຳໄລສຸດທິປະ ຈຳປີ ເນື່ອງຈາກວ່າບໍລິສັດ ຢູ່ລະຫວ່າງການດຳເນີນການປ່ຽນແປງມູນຄ່າກຳນົດ (Par Value) ຈຶ່ງ ພິຈາລະນາແບ່ງອອກເປັນ 2 ເງື່ອນໄຂດັ່ງນີ້:

   **ກໍລະນີທີ 1** ຫາກບໍລິສັດ ຍັງບໍ່ສາມາດປ່ຽນແປງມູນຄ່າກຳນົດໃຫ້ແລ້ວສຳເລັດ ກ່ອນການຈ່າຍເງິນປັນ ຜົນ ໃຫ້ຈ່າຍເງິນປັນຜົນໃນອັດຕາຮຸ້ນລະ 57 ກີບ (ມູນຄ່າກຳນົດ 1.000 ກີບຕໍ່ຮຸ້ນ)

   **ກໍລະນີທີ 2** ຫາກບໍລິສັດປ່ຽນແປງມູນຄ່າກຳນົດຈາກ 1.000 ກີບ ເປັນ 100 ກີບຕໍ່ຮຸ້ນ ສຽບຮ້ອຍ ກ່ອນການຈ່າຍເງິນປັນຜົນ ໃຫ້ຈ່າຍປັນຜົນໃນອັດຕາຮຸ້ນລະ 5,7 ກີບ (ມູນຄ່າກຳນົດ 100 ກີບຕໍ່ຮຸ້ນ)

3. ສະສົມໄວ້ໃນກຳໄລສະສົມ ຈຳນວນ 4.552.438.082 ກີບ ເທົ່າກັບຮ້ອຍລະ 59,97 ຂອງກຳໄລສຸດທິປະ ຈຳປີ

- ກຳນົດວັນປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອຮັບສິດຮັບເງິນປັນຜົນໃນວັນທີ 01 ເມສາ 2022
- ກຳນົດໃຫ້ຈ່າຍເງິນປັນຜົນພາຍໃນ 30 ວັນນັບຈາກວັນທີ່ໄດ້ຮັບອະນຸມັດຈາກຜູ້ຖືຮຸ້ນ

**MAHATHUEN LEASING PUBLIC COMPANY**
628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR
TEL 021 418062 - 418066

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 6 ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບປະມານການລົງທຶນຂອງບໍລິສັດ ປະຈຳປີ 2022**

**ວັດຖຸປະສົງ ແລະ ເຫດຜົນ:**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ "ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາ ແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ" ແມ່ນມີລາຍລະອຽດໃນເອກະສານຄັດຕິດ

**ຄຳເຫັນຂອງສະພາບໍລິຫານ:**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາ ແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2022

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 7 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ**

**ວັດຖຸປະສົງ ແລະ ເຫດຜົນ:**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 123, 124 ແລະ 125 ທີ່ກ່ຽວຂ້ອງ "ການແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ອຳນວຍການ, ວິທີການລົງຄະແນນສຽງສຳລັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຂອງຜູ້ອຳນວຍການ ແລະ ວາລະການລົງຕຳແໜ່ງຂອງກຳມະການ" ກອງປະຊຸມແມ່ນເປັນຜູ້ແຕ່ງຕັ້ງຜູ້ອຳນວຍການບໍລິສັດ

**ຄຳເຫັນຂອງສະພາບໍລິຫານ:**

ເຫັນວ່າຄວນແຕ່ງຕັ້ງໂດຍພິຈາລະນາເລືອກຜູ້ທີ່ມີຄຸນສົມບັດເໝາະສົມຕາມລາຍຊື່ລຸ່ມນີ້ ເປັນຜູ້ອຳນວຍການຂອງບໍລິສັດ ແລະ ຜູ້ອຳນວຍການຂອງບໍລິສັດມີອາຍຸການ 2 ປີ ແລະ ສາມາດແຕ່ງຕັ້ງໃຫມ່ໄດ້

ຄະນະກຳມະການຄັດເລືອກ ໄດ້ຄັດເລືອກຜູ້ທີ່ມີຄຸນສົມບັດເໝາະສົມຈຳນວນທັງໝົດ 14 ທ່ານ ເພື່ອໃຫ້ຜູ້ຖືຮຸ້ນພິຈາລະນາຄັດເລືອກ ແລະ ເຫັນດີແຕ່ງຕັ້ງຈຳນວນ 9 ທ່ານ ໂດຍເລືອກຈາກບຸກຄົນທີ່ໄດ້ຄະແນນສຽງອະນຸມັດລຽງຕາມຄະແນນສູງສຸດຫາຕ່ຳສຸດ ເຊິ່ງແບ່ງເປັນ 3 ກຸ່ມດັ່ງນີ້:

1. ຜູ້ທີ່ມີຄຸນສົມບັດເໝາະສົມ ເພື່ອຄັດເລືອກເປັນສະມາຊິກອິດສະຫຼະ ເລືອກ 3 ທ່ານຈາກຈຳນວນ 4 ທ່ານດັ່ງນີ້:
    a. ທ່ານ ອັນຄຳ ວໍລະວົງ
    b. ທ່ານ ວິນຍູ ຈີລະປະພາການ
    c. ທ່ານ ທິຣະເມດ ວຸດທິພັດພິບູນ
    d. ທ່ານ ນັນທະພັດ ງາມປລັ່ງ

2. ຜູ້ທີ່ມີຄຸນສົມບັດເໝາະສົມເພື່ອຄັດເລືອກເປັນສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ (Non Executive Director) ເລືອກ 5 ທ່ານຈາກຈຳນວນ 9 ທ່ານດັ່ງນີ້:
    a. ທ່ານ ຊາຄຣິດ ນັກສອນ
    b. ທ່ານນາງ ອິນທະວິໄລ ອຸດົມ
    c. ທ່ານນາງ ປຣາດຖະໜາ ນັກສອນ
    d. ທ່ານນາງ ສຸທິດາ ນັກສອນ
    e. ທ່ານ ກຣາໄກ ນິດສະຍັນ
    f. ທ່ານ ທິຣະ ຊຸຕິວະລາພອນ
    g. ທ່ານ ວິຊຸນ ລັກນາທິນ
    h. ທ່ານ ໄວຮຸ່ງ ມີນາກຸນ
    i. ທ່ານ ໂກວິດ ເກີດສິລິລັກ
3. ຜູ້ທີ່ມີຄຸນສົມບັດເໝາະສົມ ເພື່ອຄັດເລືອກເປັນສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ (Executive Director) ພິຈາລະນາຄັດເລືອກ 1 ທ່ານ ດັ່ງນີ້:
    a. ທ່ານ ມານິບ ຕຣີລິດວິໄລ

ການກຳນົດໜ້າທີ່ ແລະ ອຳນາດອະນຸມັດຕະຫຼອດຈົນການລົງນາມອະນຸມັດ (Authority) ມອບໝາຍໃຫ້ສະມາຊິກສະພາບໍລິຫານທີ່ໄດ້ຮັບຄັດເລືອກເຫັນດີນັ້ນ ຮ່ວມກັນກຳນົດ ແລະ ມອບໝາຍເພື່ອໃຫ້ສາມາດເຮັດໜ້າທີ່ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນເປັນປະໂຫຍດຕໍ່ບໍລິສັດເປັນທີ່ສຳຄັນ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 8 ພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງບໍລິສັດ**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ກ່ຽວກັບ ຄ່າຕອບແທນສຳລັບຜູ້ອຳນວຍການ ແລະ ເງິນເດືອນຂອງຜູ້ອຳນວຍການບໍລິຫານຄວນໄດ້ຮັບການແຕ່ງຕັ້ງໂດຍກອງປະຊຸມຜູ້ຖືຮຸ້ນ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນອະນຸມັດໃຫ້ກຳນົດຜົນຕອບແທນ ປະຈຳປີ 2021 (Yearly Bonus) ໃຫ້ແກ່ສະມາຊິກສະພາບໍລິຫານ ໃນວົງເງິນບໍ່ເກີນ 227,0 ລ້ານກີບ ໂດຍກຳນົດໃຫ້ ຄະນະກຳມະການກຳນົດຜົນຕອບແທນເປັນຜູ້ກຳນົດເກນການຈັດສັນໃຫ້ກຳມະການແຕ່ລະທ່ານຕໍ່ໄປ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**MAHATHUEN LEASING PUBLIC COMPANY**
628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR
TEL 021 418062 - 418066

**ວາລະທີ 9 ພິຈາລະນາອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2022**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ ກ່ຽວກັບ ຄ່າຕອບແທນສຳລັບຜູ້ອຳນວຍການ ແລະ ເງິນເດືອນຂອງຜູ້ອຳນວຍການບໍລິຫານຄວນໄດ້ຮັບການ ແຕ່ງຕັ້ງໂດຍກອງປະຊຸມຜູ້ຖືຮຸ້ນ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າຄວນອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2022 ເຊິ່ງໄດ້ຮັບການພິຈາລະນາຈາກສະພາບໍລິຫານ ແລະ ຄະນະກຳມະການກຳນົດຜົນຕອບແທນແລ້ວ ໂດຍ ມີລາຍລະອຽດ ດັ່ງນີ້

1. ໃຫ້ເງິນເດືອນແກ່ຜູ້ອຳນວຍການທັງໝົດ ເພື່ອກຳນົດທິດທາງ ແລະ ນະໂຍບາຍຂອງບໍລິສັດ ແລະ ຕິດຕາມ ການກວດກາການປະຕິບັດງານຂອງບໍລິສັດດັ່ງຕໍ່ໄປນີ້
    a. ຜູ້ອຳນວຍການທີ່ເຮັດໜ້າທີ່ເປັນປະທານສະພາບໍລິຫານ ອັດຕາ 11.250.000 ກີບຕໍ່ເດືອນຕໍ່ທ່ານ
    b. ຜູ້ອຳນວຍການທີ່ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານ ອັດຕາ 6.250.000 ກີບຕໍ່ເດືອນຕໍ່ທ່ານ
2. ຄ່າເບ້ຍປະຊຸມ ເພື່ອເປັນຄ່າຕອບແທນການເດີນທາງເຂົ້າມາຮ່ວມປະຊຸມແຕ່ລະຄັ້ງ
    a. ສຳລັບການປະຊຸມສະພາບໍລິຫານເປັນດັ່ງນີ້
        I. ຜູ້ເຮັດໜ້າທີ່ເປັນປະທານສະພາບໍລິຫານ ອັດຕາ 2.500.000 ກີບຕໍ່ຄັ້ງຕໍ່ທ່ານ
        II. ຜູ້ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານ ອັດຕາ 1.500.000 ກີບຕໍ່ຄັ້ງຕໍ່ທ່ານ
    b. ສຳລັບການປະຊຸມຄະນະກຳມະການຊຸດຍ່ອຍທັງ 5 ຊຸດ
        I. ຜູ້ເຮັດໜ້າທີ່ເປັນປະທານສະພາບໍລິຫານ ອັດຕາ 1.500.000 ກີບຕໍ່ຄັ້ງຕໍ່ທ່ານ
        II. ຜູ້ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານ ອັດຕາ 1.000.000 ກີບຕໍ່ຄັ້ງຕໍ່ທ່ານ
3. ຄ່າເບ້ຍປະຈຳປີ ສຳລັບສະມາຊິກສະພາບໍລິຫານທຸກທ່ານ ກຳນົດນະໂຍບາຍຂອງບໍລິສັດ ແລະ ຕິດຕາມ ການຄຸ້ມຄອງດຳເນີນງານຂອງບໍລິສັດ, ສະນັ້ນເງິນໂບນັດປະຈຳປີຂອງສະພາບໍລິຫານຄວນກຳນົດໃຫ້ ກ່ຽວຂ້ອງກັບການຄາດຄະເນກຳໄລສຸດທິ ປະຈຳປີ 2022 ເຊິ່ງເທົ່າກັບ 3 ສ່ວນຮ້ອຍ ຈາກກຳໄລສຸດທິ ຫຼັງການຈ່າຍພາສີ ເຊິ່ງພິຈາລະນາເພີ່ມຂຶ້ນ ຫຼື ຫຼຸດລົງຕາມຜົນງານຕົວຈິງ

    ຄ່າຕອບແທນທີ່ໄດ້ກ່າວມາຂ້າງເທິງນີ້ບໍ່ໄດ້ລວມເອົາເງິນເດືອນ, ເງິນບຳນານ ແລະ ຜົນປະໂຫຍດອື່ນໆ ຂອງຜູ້ອຳນວຍການບໍລິຫານ, ເຊິ່ງປະຕິບັດໜ້າທີ່ໃນການເຮັດວຽກປະຈຳວັນ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນ ສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 10 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2022**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ "ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບ ແທນສຳລັບການກວດສອບບັນຊີ"

**ຄຳເຫັນຂອງສະພາບໍລິຫານ:**

ເຫັນຄວນແຕ່ງຕັ້ງ ບໍລິສັດ PWC Lao ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີປະຈຳປີ 2022 ແລະ ກຳນົດຄ່າຕອບແທນເປັນເງິນ 30.000 ໂດລາສະຫາລັດ ເພາະວ່າບໍລິສັດ PWC Lao ຈຳກັດຜູ້ດຽວ ເປັນບໍລິສັດທີ່ມີປະສົບການໃນການກວດສອບບັນຊີໃນ ສປປ. ລາວ ແລະ ເປັນຜູ້ກວດສອບບັນຊີຂອງບໍລິສັດໃນປີທີ່ຜ່ານມາ ເຊິ່ງມີຄວາມເຂົ້າໃຈລະບົບ ແລະ ການເຮັດວຽກຂອງບໍລິສັດເປັນຢ່າງດີ

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

## ວາລະທີ 11 ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີມ)

ວາລະກອງປະຊຸມ ແລະ ຄຳເຫັນຂອງສະພາບໍລິຫານດັ່ງກ່າວຂ້າງຕົ້ນນັ້ນ ສະມາຊິກສະພາບໍລິຫານອິດສະຫຼະບໍ່ມີຄຳເຫັນເປັນຢ່າງອື່ນສຳລັບກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ທາງບໍລິສັດຈະເຊີນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຜູ້ກວດສອບບັນຊີພາຍນອກ ແລະ ແຕ່ງຕັ້ງຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເພື່ອເປັນສັກຂີປະຍານ ແລະ ຊ່ວຍດູແລກວດສອບໃຫ້ກອງປະຊຸມເປັນໄປຢ່າງຖືກຕ້ອງ, ໂປ່ງໃສ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ

**MAHATHUEN LEASING PUBLIC COMPANY**

628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR

TEL 021 418062 - 418066

# ໃบມອບສິດ

# Proxy

1. ຂ້າພະເຈົ້າ/(I/we).....ສັນຊາດ/Nationality.....
   ບັດປະຈຳຕົວເລກທີ່/Passport number:.....
   ທີ່ຢູ່ປະຈຸບັນ/Current address.....
   ເບີໂທລະສັບ/Telephone No.: .....ອີເມວ/email.....
   ເປັນຜູ້ຖືຮຸ້ນບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ)
   Being a shareholder of Mahathuen Leasing Public Company (MHTL)
   ມີຮຸ້ນທີ່ຖືຈຳນວນ.....ຮຸ້ນ ຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ
   Holding a total number of …..…..…..…..…..…..…..…..…..…..… shares which are equivalent to the same number of votes
2. ຂໍມອບໝາຍ ທ່ານ/Hereby assign Mr./Ms. .....ອາຍຸ/age.....
   ບັດປະຈຳຕົວເລກທີ່/Passport number:.....
   ທີ່ຢູ່ປະຈຸບັນ/Current address:.....
   ເບີໂທລະສັບ/Telephone No.: .....ອີເມວ/email.....

   ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2021 ຂອງ ມຫທຊ ທີ່ຈະຈັດຂຶ້ນໃນເວລາ 09:30 ໂມງ ຂອງວັນທີ 28 ເມສາ 2022

   To be my/ our proxy to attend and vote on my/ our behalf in the Annual General Shareholders' meeting for the year 2021 of the MHTL which will be held at 09:30 am on 28th April 2022
3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສາມທາງເລືອກລຸ່ມນີ້):

   I/We authorize the proxy to vote on my/our behalf in the Meeting as follows (choose one from the three following options):

☐ **ທາງເລືອກທີ 1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆ ບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື**

**Option 1.** **To grant the proxy to consider and vote in all agendas on my/ our behalf as the proxy may deem appropriate; or**

☐ **ທາງເລືອກທີ 2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ. ຫຼື**

**Option 2.** **To grant the proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects; or**

**ວາລະທີ 1** **ພິຈາລະນາຮັບຮອງລາຍງານການປະຊຸມລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020**

**Agenda 1** **Consider Adopt the Annual General Shareholder's Meeting report for the year 2020**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

**MAHATHUEN LEASING PUBLIC COMPANY**
628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR
TEL 021 418062 - 418066

**ວາລະທີ 2** **ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021**

**Agenda 2** **Consider adopting the Summary Reports about the Operations of the company and the Annual Report for the year 2021.**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ
Approve Disapprove Approve the right of the voter to vote appropriately

**ວາລະທີ 3** **ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ ) ປະຈຳປີ 2021**

**Agenda 3** **Consider adopting and approving for the Financial Statements for the year 2021**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ
Approve Disapprove Approve the right of the voter to vote appropriately

**ວາລະທີ 4** **ພິຈາລະນາຮັບຮອງການກູ້ຢືມເງິນຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022**

**Agenda 4** **Consider approving the Laon and Guidelines for borrowing to be used for business expansion according to the Business Plan for the year 2022.**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ
Approve Disapprove Approve the right of the voter to vote appropriately

**ວາລະທີ 5** **ພິຈາລະນາອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2021 ແລະ ວິທີການແບ່ງເງິນປັນຜົນ**

**Agenda 5** **Consider approving the Allocation of Net Profit for the year 2021 and the Method of the dividend payment.**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ
Approve Disapprove Approve the right of the voter to vote appropriately

**ວາລະທີ 6** **ພິຈາລະນາອະນຸມັດ ແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2022**

**Agenda 6** **Consider approving the Company's Business Plan, Employee Salary, and Investment Budget for the year 2022.**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ
Approve Disapprove Approve the right of the voter to vote appropriately

**ວາລະທີ 7** **ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃໝ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ**

**Agenda 7** **Consider appoint the New Director to replace the Currently Director, who are End of Term**

1. ທ່ານ ຊາຄຣິດ ນັກສອນ / Mr. Chakrit Naksorn

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ
Approve Disapprove Approve the right of the voter to vote appropriately

**MAHATHUEN LEASING PUBLIC COMPANY**

628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR

TEL 021 418062 - 418066

2. ທ່ານນາງ ອິນທະວິໄລ ອຸດົມ / Mrs. Inthavilay Oudom

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

3. ທ່ານ ມານົບ ຕຣີລິດວິໄລ / Mr. Manop Tririthvilai

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

4. ທ່ານນາງ ປຣາດຖະໜາ ນັກສອນ / Mrs. Prathana Naksorn

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

5. ທ່ານນາງ ສຸທິດາ ນັກສອນ / Miss Sutida Naksorn

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

6. ທ່ານ ກຽງໄກ ນິດສະຍັນ / Mr. Kriengkrai Nissyan

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

7. ທ່ານ ນັນທະພັດ ງາມປລັ່ງ / Mr. Nantapat Ngamplung

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

8. ທ່ານ ທີຣະເມດ ວຸດທິພັດພິບູນ / Mr. Theeramate Vuttipadhpibul

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

9. ທ່ານ ວິນຢູ ຈີລະປະພາການ / Mr. Winyou Jeeraprapakan

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

10. ທ່ານ ທີຣະ ຊຸຕິອະລາພອນ / Mr. Teera Chutivarapon

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

11. ທ່ານ ວິຊຽນ ລັກນາທິນ / Mr. Wichien Luknatin

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

12. ທ່ານ ໄວຮຸ່ງ ມີນາກຸນ / Mr. Wairung Minakul

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

13. ທ່ານ ໂກວິດ ເກີດສິລິລັກ / Mr. Kovit Kerdsirirak

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

14. ທ່ານ ວັນຄຳ ວໍລະວົງ / Mr. Vankham Voravong

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ

**Approve** **Disapprove** **Approve the right of the voter to vote appropriately**

**MAHATHUEN LEASING PUBLIC COMPANY**
628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR
TEL 021 418062 - 418066

**ວາລະທີ 8 ພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງບໍລິສັດ**

Agenda 8 **Consider approving to pay the Yearly Bonus for the year 2021 for the Company's Directors.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

**ວາລະທີ 9 ພິຈາລະນາອະນຸມັດ ກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2022**

Agenda 9 **Consider approving the remuneration for the Company's Director and the Salary of the Executive Directors for the year 2022.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

**ວາລະທີ 10 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບ ບັນຊີ ປະຈຳ ປີ 2022**

Agenda 10 **Consider appointing the external Auditor and the Audit Fee for the year 2022.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

**ວາລະທີ 11 ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີມ)**

Agenda 11 **Consider Other Matters (if any)**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

☐ **ທາງເລືອກທີ 3. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາລົງຄະແນນ ເຫັນດີ ຫຼື ບໍ່ເຫັນດີ ໃນທຸກໆ ວາລະລຸ່ມນີ້):**

Option 3. To grant the proxy to vote as per my/ our intention indicated in the followings (if you select this option, please choose to vote either approve or disapprove in ever agenda):

**ວາລະທີ 1 ພິຈາລະນາຮັບຮອງລາຍງານການປະຊຸມລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020**

Agenda 1 **Consider Adopt the Annual General Shareholder's Meeting report for the year 2020**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**MAHATHUEN LEASING PUBLIC COMPANY**
628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR
TEL 021 418062 - 418066

**ວາລະທີ 2** **ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021**

Agenda 2 **Consider adopting the Summary Reports about the Operations of the company and the Annual Report for the year 2021.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**ວາລະທີ 3** **ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ ) ປະຈຳປີ 2021**

Agenda 3 **Consider adopting and approving for the Financial Statements for the year 2021**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**ວາລະທີ 4** **ພິຈາລະນາຮັບຮອງການກູ້ຢືມເງິນຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022**

Agenda 4 **Consider approving the Loan and Guidelines for borrowing to be used for business expansion according to the Business Plan for the year 2022.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**ວາລະທີ 5** **ພິຈາລະນາອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2021 ແລະ ວິທີການແບ່ງປັນເງິນປັນຜົນ**

Agenda 5 **Consider approving the Allocation of Net Profit for the year 2021 and the Method of the dividend payment.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**ວາລະທີ 6** **ພິຈາລະນາອະນຸມັດ ແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2022**

Agenda 6 **Consider approving the Company's Business Plan, Employee Salary, and Investment Budget for the year 2022.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**ວາລະທີ 7** **ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃໝ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ**

Agenda 7 **Consider appoint the New Director to replace the Currently Director, who are End of Term**

1. ທ່ານ ຊາຄຣິດ ນັກສອນ / Mr. Chakrit Naksorn

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**MAHATHUEN LEASING PUBLIC COMPANY**

628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR

TEL 021 418062 - 418066

2. ທ່ານນາງ ອິນທະວິໄລ ອຸດົມ / Mrs. Inthavilay Oudom

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

3. ທ່ານ ມານົບ ຕຣິລິດວິໄລ / Mr. Manop Tririthvilai

☐ ຜູ້ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

4. ທ່ານນາງ ປຣາດຖະໜາ ນັກສອນ / Mrs. Prathana Naksorn

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

5. ທ່ານນາງ ສຸທິດາ ນັກສອນ / Miss Sutida Naksorn

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

6. ທ່ານ ກຽງໄກ ນິດສະຍັນ / Mr. Kriengkrai Nissyan

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

7. ທ່ານ ນັນທະພັດ ງາມປລັ່ງ / Mr. Nantapat Ngamplung

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

8. ທ່ານ ທີຣະເມດ ວຸດທິພັດພິບູນ / Mr. Theeramate Vuttipadhpibul

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

9. ທ່ານ ວິນຢູ ຈີລະປະພາການ / Mr. Winyou Jeeraprapakan

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

10. ທ່ານ ທີຣະ ຊຸຕິວະລາພອນ / Mr. Teera Chutivarapon

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

11. ທ່ານ ວິຊຽນ ລັກນາທິນ / Mr. Wichien Luknatin

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

12. ທ່ານ ໄວຮຸ່ງ ມີນາກຸນ / Mr. Wairung Minakul

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

13. ທ່ານ ໂກວິດ ເກີດສິລິລັກ / Mr. Kovit Kerdsirirak

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

14. ທ່ານ ວັນຄຳ ວໍລະວົງ / Mr. Vankham Voravong

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**MAHATHUEN LEASING PUBLIC COMPANY**
628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR
TEL 021 418062 - 418066

**ວາລະທີ 8 ພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງບໍລິສັດ**

**Agenda 8 Consider approving to pay the Yearly Bonus for the year 2021 for the Company's Directors.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**ວາລະທີ 9 ພິຈາລະນາອະນຸມັດ ກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2022**

**Agenda 9 Consider approving the remuneration for the Company's Director and the Salary of the Executive Directors for the year 2022.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**ວາລະທີ 10 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບ ບັນຊີ ປະຈຳ ປີ 2022**

**Agenda 10 Consider appointing the external Auditor and the Audit Fee for the year 2022.**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

**ວາລະທີ 11 ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີມ)**

**Agenda 11 Consider Other Matters (if any)**

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ Disapprove

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ
   Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.
5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ
   In case I/We have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.
6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກປະການ

**MAHATHUEN LEASING PUBLIC COMPANY**
628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR
TEL 021 418062 - 418066

Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ ourselves in all respects.

ທີ່/ Wrote at.....ວັນທີ/date.....

ເຊັນຜູ້ຖືຮຸ້ນທີ່ມອບໝາຍ / Signed by the shareholder

_____

ເຊັນຜູ້ຕາງໜ້າ / Signed by the proxy

_____

**ໝາຍເຫດ/ Remarks**

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ
   The shareholder is required to assign only one proxy to attend and vote in the meeting on the shareholder's behalf.
2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ມຫທຊ ມີສິດປະຕິເສດໃບມອບສິດໃດໆ ທີ່ບໍ່ໄດ້ຈົດທະບຽນສານ
   This Proxy must be certified by your most convenient Court Notary Office to ensure its legal validity. MHTL may reject any Proxies or proxy authorizations without endorsement of the Court Notary Office.
3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ ( ສຳລັບນັກລົງທຶນຕ່າງປະເທດ ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ
   The proxy must present to the officers at registration desk his/her valid ID Card, or Family book or Passport (in case of foreign investor) together with the copies of the same documents of the shareholder, this Proxy, and the invitation to the Meeting.

**MAHATHUEN LEASING PUBLIC COMPANY**
628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR
TEL 021 418062 - 418066

## ປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ມີສະມາຊິກສະພາບໍລິຫານ (ອິດສະຫຼະ) ຈຳນວນ 3 ທ່ານ ຈາກຈຳນວນສະມາຊິກສະພາບໍລິຫານ 9 ທ່ານ ເຊິ່ງມີລາຍຊື່ດັ່ງນີ້

| | |
|---|---|
| 1. ທ່ານ ນັນທະພັດ ງາມປລັ່ງ | ສະມາຊິກສະພາບໍລິຫານ (ອິດສະຫຼະ), ຄະນະກຳມະການກວດສອບ, ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ |
| 2. ທ່ານ ທີລະເມດ ອຸດທິພັດພິບູນ | ສະມາຊິກສະພາບໍລິຫານ (ອິດສະຫຼະ), ປະທານຄະນະກຳມະການກວດສອບລາຍການທີ່ກ່ຽວພັນ,ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ |
| 3. ທ່ານ ວິນຍູ ຈີລະປະພາການ | ສະມາຊິກສະພາບໍລິຫານ (ອິດສະຫຼະ), ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ |

## CV of Independent directors in order to give the right to Shareholder

Mahathuen Leasing Public Company, there are 3 independent directors from the Board of Directors for 9 persons, which the details are as follow:

| | |
|---|---|
| 1. Mr. Nantapat Ngamplung | Member of the Board of Directors (Independent), Audit Committee, Nominating Committee and Related Party Transaction Committee |
| 2. Mr. Theeramate Vuttipadhpibul | Member of the Board of Directors ( Independent) , Chairman of Related Party Transaction Committee, Risk Management Committee and Remuneration Committee |
| 3. Mr. Winyou Jeeraprapakan | Member of the Board of Directors (Independent), Audit Committee, Risk Management Committee |

**MAHATHUEN LEASING PUBLIC COMPANY**
628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR
TEL 021 418062 - 418066

# ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານອິດສະຫຼະ
# CV of Independent directors



**ຊື່ ແລະ ນາມສະກຸນ :** ທ່ານ ນັນທະພັດ ງາມປລັ່ງ ອາຍຸ: 41 ປີ
**Name and surname :** Mr.Nantapat Ngamplung Age: 41 years old
**ວັນ,ເດືອນ,ປີເກີດ/Date of birth:** 21 July 1981
**ສັນຊາດ/Nationality :** ໄທ/Thai
**ພາສາ/Language :** ໄທ, ອັງກິດ/ Thai, English
**ຕຳແໜ່ງ:** ສະມາຊິກສະພາບໍລິຫານ(ອິດສະຫຼະ), ຄະນະກຳມະການກວດສອບ, ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ
**Position:** Member of the Board of Directors (Independent), Audit Committee, Nominating Committee and Related Party Transaction Committee.
**ວັນທີແຕ່ງຕັ້ງ/Date of Appointed:** 10 August 2017

**ປະຫວັດການສຶກສາ/Education:**

- ປີ 2003 : ປະລິຍາຕຣີ ບັນຊີ, ມະຫາວິທະຍາໄລກະເສດສາດ, ປະເທດໄທ
  Bachelor's Degree of Accounting, Kasetsart University, Thailand

**ປະຫວັດການເຮັດວຽກ/Experience:**

- ປີ 2003 – 2004 : Internal audit, Italian-Thai Development Plc.
- ປີ 2004 – 2011 : Auditor, Assistant manager, BDO limited
- ປີ 2012 - ປະຈຸບັນ : Auditor manager, Professional auditing Service Co.,Ltd

**ການເຂົ້າຮ່ວມປະຊຸມໃນປີ 2021 ທີ່ຜ່ານມາ: (ສິ້ນສຸດເຖິງວັນທີ 31 ທັນວາ 2021)**

- ສະພາບໍລິຫານ/ Board of Directors 4/4 ຄັ້ງ
- ຄະນະກຳມະການກວດສອບ/ Audit Committee 5/5 ຄັ້ງ
- ຄະນະກຳມະການຄັດເລືອກ/ Nomination Committee 2/2 ຄັ້ງ
- ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/ Related Party Transaction Committee 4/4 ຄັ້ງ

**MAHATHUEN LEASING PUBLIC COMPANY**
628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR
TEL 021 418062 - 418066

# ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານອິດສະຫຼະ
# CV of Independent directors



**ຊື່ ແລະ ນາມສະກຸນ** : ທ່ານ ທີລະເມດ ວຸດທິພັດພິບູນ ອາຍຸ: 55 ປີ
**Name and surname:** Mr. Theeramate Vuttipadhpibul Age: 55 years old
**ວັນ,ເດືອນ,ປີເກີດ/Date of birth:** 20 September 1967
**ສັນຊາດ/Nationality** : ໄທ/Thai
**ພາສາ/Language** : ໄທ, ອັງກິດ/ Thai, English
**ຕຳແໜ່ງ:** ສະມາຊິກສະພາບໍລິຫານ(ອິດສະຫຼະ), ປະທານຄະນະກຳມະການກວດສອບ ລາຍການທີ່ກ່ຽວພັນ, ຄະນະກຳມະການກວດສອບ, ຄະນະກຳມະການກຳນົດ ຄ່າຕອບແທນ ແລະ ຄະນະກຳມະການຄຸ້ມຄອງຄວາມສ່ຽງ
**Position:** Member of the Board of Directors (Independent), Chairman of Related Party Transaction Committee, Remuneration Committee, Audit Committee and Risk Management Committee
**ວັນທີແຕ່ງຕັ້ງ/Date of Appointed:** 10 August 2017

**ປະຫວັດການສຶກສາ/Education:**

- ປີ 1989 : ປະລິນຍາຕຣີ ບັນຊີ, ມະຫາວິທະຍາໄລຈຸລາລົງກອນ
  Bachelor's degree of Accounting, Chulalongkorn University
- ປີ 1997 : ປະລິນຍາໂທ ການບໍລິຫານທຸລະກິດ, ມະຫາວິທະຍາໄລທຳມະສາດ
  Master's degree of business administration, Thammasat University

**ປະຫວັດການເຮັດວຽກ / Experience:**

- ปี 1989 – 1992: Senior Auditor, SCG-Na Co.,LTD (Anthur Anderson Group)
- ปี 1992 – 1994: Chief Accountant, Siam Syntech Construction PCL
- ปี 1994 – 1997: Manager, UTV Cable Network PCL ( Television )
- ปี 1997 – 1998: Senior Manager, Cineplex Co.,Ltd
- ปี 1998 – 2003: Financial Controller and Office Manager, Asia Pacific Potash Co.,Ltd
- ปี 2003 – 2007: Manager, Boots Retail Thailand Co.,Ltd
- ปี 2007 – 2012: Senior Manager and Company secretary, California WOW Xperience PCL(CAWOW)
- ปี 2013 – 2014: Senior Manager. WE Fitness Co.,Ltd ( related company of major group PCL )
- ปี 2014 – 2015: Head of Accounting and Finance. Ticon Management Company Limited
- ปี 2015 – 2015: CFO, KIRZ Company Limited ( Former Subsidiary of AIT PCL )
- ปี 2015 - ปะจุบัน: Executive Vice President Business, Advance Information Technology PCL

**ການເຂົ້າຮ່ວມປະຊຸມໃນປີ 2021 ທີ່ຜ່ານມາ: (ສິ້ນສຸດເຖິງວັນທີ 31 ທັນວາ 2021)**

- ສະພາບໍລິຫານ/ Board of Directors 4/4 ຄັ້ງ
- ຄະນະກຳມະການກວດສອບ/ Audit Committee 5/5 ຄັ້ງ
- ຄະນະກຳມະການກຳນົດຄ່າຕອບແທນ / Remuneration Committee 2/2 ຄັ້ງ
- ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/ Related Party Transaction Committee 2/2 ຄັ້ງ
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ/ Risk Management Committee 2/2 ຄັ້ງ

**MAHATHUEN LEASING PUBLIC COMPANY**
628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR
TEL 021 418062 - 418066

# ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານອິດສະຫຼະ
# CV of Independent directors



**ຊື່ ແລະ ນາມສະກຸນ :** ທ່ານ ວິນຢູ ຈີລະປະພາການ ອາຍຸ: 45 ປີ
**Name and surname:** Mr. Winyou Jeeraprapakan Age: 45 years old
**ວັນ,ເດືອນ,ປີເກີດ/Date of birth:** 12 Jan 1977
**ສັນຊາດ/Nationality :** ໄທ/Thai
**ພາສາ/Language :** ລາວ, ອັງກິດ, ຣັດເຊຍ/ Lao, English, Russian
**ຕຳແໜ່ງ :** ສະມາຊິກສະພາບໍລິຫານ (ອິດສະຫຼະ), ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ
**Position :** Member of Board of Directors (Independent), Audit Committee, Risk Management Committee
**ວັນທີແຕ່ງຕັ້ງ/Date of Appointed:** 29 May 2020

**ປະຫວັດການສຶກສາ/Education:**

- Master degree – Economics (NIDA)
- Bachelor degree – Science (Khonkaen University)

**ປະຫວັດການເຮັດວຽກ/Experience:**

- **2018 – Present –** Vice President, Tanakit Infinity Plus Co., Ltd. Asset and Debt management company
- **2003 – Present –** Managing Director, Ubonvibool Part., Ltd. The Authorized Distribution of Maxxis International Co., Ltd.
- **2001 – Present –** Managing Director, Car Clinic Part., Ltd.

**ການເຂົ້າຮ່ວມປະຊຸມໃນປີ 2021 ທີ່ຜ່ານມາ: (ສິ້ນສຸດເຖິງວັນທີ 31 ທັນວາ 2021)**

- ສະພາບໍລິຫານ/ Board of Directors 4/4 ຄັ້ງ
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ/ Risk Management Committee 2/2 ຄັ້ງ
- ຄະນະກຳມະການກວດສອບ/ Audit Committee 5/5 ຄັ້ງ

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

# ເອກະສານປະກອບ ວາລະທີ1:

# ລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020

# ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6


## ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020
## ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (“ບໍລິສັດ”)

**ວັນ, ເວລາ ແລະ ສະຖານທີ່ :**

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 27 ເມສາ 2021 ເວລາ 10:00 ໂມງ ທີ່ ຫ້ອງ Ruby Room ຊັ້ນ4, ຄອນເວັນຊັນ ເຊັນເຕີ້, ໂຮງແຮມ ແລນມາກ ແມ່ຂອງ ລີເວີໄຊທ໌, ບ້ານ ທາດຂາວ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ

**ກ່ອນທີ່ຈະເປີດກອງປະຊຸມ:**

ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານຂອງບໍລິສັດ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ໂດຍຜ່ານວີດີໂອຄອນເຟີເລັນ, ເນື່ອງຈາກມີການແຜ່ລະບາດຂອງພະຍາດໄວຣັດ ໂຄວິດ-19, ລັດຖະບານລາວໄດ້ ອອກຄຳສັ່ງມາດຕະການເພື່ອປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມພະຍາດໄວຣັດ ໂຄວິດ-19 ເຊິ່ງມີມາດຕະການໜຶ່ງ ແມ່ນບໍ່ອະນຸຍາດໃຫ້ເດີນທາງເຂົ້າ-ອອກປະເທດໄດ້, ປະຈຸບັນສະມາຊິກສະພາບໍລິຫານຂອງບໍລິສັດຫຼາຍທ່ານທີ່ຢູ່ ຕ່າງປະເທດບໍ່ສາມາດເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໄດ້ ແຕ່ຈະເຂົ້າຮ່ວມກອງປະຊຸມໂດຍຜ່ານວີດີໂອຄອນເຟີເລັນ ແລະ ສະມາຊິກສະພາບໍລິຫານຜູ້ທີ່ຖືຮຸ້ນຂອງບໍລິສັດໄດ້ກຽມ ແລະ ສົ່ງໃບມອບສິດ ເພື່ອລົງຄະແນນສຽງໃນແຕ່ລະວາ ລະຂອງກອງປະຊຸມໄວ້ລ່ວງໜ້າແລ້ວ

ປະທານສະພາບໍລິຫານ ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020, ປະທານກອງປະຊຸມໄດ້ກ່າວ ຕ້ອນຮັບບັນດາທ່ານຜູ້ຖືຮຸ້ນ ແລະ ຜູ້ເຂົ້າຮ່ວມທັງໝົດພ້ອມທັງແຈ້ງໃຫ້ຊາບວ່າ ມີຜູ້ເຂົ້າຮ່ວມປະຊຸມທັງໝົດ 30 ທ່ານ, 33.037.076 ຮຸ້ນ ຫຼື ເທົ່າກັບ 82,59% ຂອງຈຳນວນຮຸ້ນທັງໝົດ ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍ ແລະ ລະບຽບຂອງບໍລິສັດ, ປະທານໄດ້ເປີດກອງປະຊຸມຢ່າງເປັນທາງການໃນເວລາ 10:00 ໂມງ ແລະ ມອບໝາຍໃຫ້ພິທີ ກອນແນະນຳສະມາຊິກສະພາບໍລິຫານລວມທັງເຈົ້າໜ້າທີ່ ທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມດັ່ງຕໍ່ໄປນີ້:

**ຜູ້ເຂົ້າຮ່ວມ:**

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມກອງປະຊຸມ:**
  1. ທ່ານນາງ ອິນທະວິໄລ ອຸດົມ ຮອງປະທານສະພາບໍລິຫານ
  2. ທ່ານ ມານົບ ຕຣີລິດວິໄລ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່

# ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6


- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມປະຊຸມຜ່ານ ວີດີໂອ ຄອນເຟີເລັນ:**

1. ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານ
2. ທ່ານນາງ ປຣາດຖະໜາ ນັກສອນ ສະມາຊິກສະພາບໍລິຫານ
3. ທ່ານນາງ ສຸທິດາ ນັກສອນ ສະມາຊິກສະພາບໍລິຫານ
4. ທ່ານ ກຽງໄກ ນິດສະຍັນ ສະມາຊິກສະພາບໍລິຫານ
5. ທ່ານ ນັນທະພັດ ງາມປລັ່ງ ສະມາຊິກສະພາບໍລິຫານອິດສະຫຼະ
6. ທ່ານ ທິຣະເມດ ອຸດທິພັດພິບູນ ສະມາຊິກສະພາບໍລິຫານອິດສະຫຼະ
7. ທ່ານ ວິນຍູ ຈີລະປະພາການ ສະມາຊິກສະພາບໍລິຫານອິດສະຫຼະ

- **ຜູ້ບໍລິຫານທີ່ເຂົ້າຮ່ວມກອງປະຊຸມ:**

1. ທ່ານ ຊັດພົນໄຊ ປັນຍາທຳບະດີ ຮອງຜູ້ອຳນວຍການດ້ານດຳເນີນການ
2. ທ່ານນາງ ສຸລິພອນ ສຸວັນໄຊລົບ ຜູ້ຈັດການພະແນກບັນຊີ
3. ທ່ານ ພົງສີລີ ທອງແຖມ ນະ ອະຍຸດທະຍາ ເລຂານຸການບໍລິສັດ

- **ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ:**

1. ທ່ານນາງ ສຸລິພອນ ສຸວັນໄຊລົບ ໃນນາມຄະນະກຳມະການກວດກາການດຳເນີນກອງ ປະຊຸມ ແລະ ລົງຄະແນນສຽງ
2. ທ່ານ ພົງສີລີ ທອງແຖມ ນະ ອະຍຸດທະຍາ ໃນນາມຄະນະກຳມະການກວດກາການດຳເນີນກອງ ປະຊຸມ ແລະ ລົງຄະແນນສຽງ
3. ທ່ານນາງ ບຸນແຕ່ງ ສີວັນທອງ ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະກຳມະການກວດກາການ ດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
4. ທ່ານນາງ ວັນນະພອນ ສຸບັນທາ ຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ
5. ທ່ານ ເອກະໄຊ ມະນີວົງ ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະ ຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ
6. ທ່ານນາງ ອານຸວັນ ທຳມະວົງ ຜູ້ຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະປະເມີນການດຳເນີນກອງປະຊຸມ
7. ທ່ານນາງ ພູວັນ ຈັນທະລັງສີ ຜູ້ຖືຮຸ້ນລາຍຍ່ອຍຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ

ຫລັງຈາກນັ້ນ, ພິທີກອນໄດ້ລາຍງານແຕ່ລະວາລະຂອງກອງປະຊຸມສຳລັບມື້ນັ້ນແລະໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມດັ່ງຕໍ່ໄປນີ້:

1. ວາລະ:

1.1 ພິຈາລະນາຮັບຮອງ ລາຍງານການປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020

1.2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບ ການດຳເນີນການຂອງບໍລິສັດ ແລະ ລາຍງານ ປະຈຳປີ 2020

1.3 ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີ ລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2020

1.4 ພິຈາລະນາຮັບຮອງການກູ້ຢືມເງິນຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2021

1.5 ພິຈາລະນາອະນຸມັດການຈັດສັນ ກຳໄລສຸດທິປະຈຳປີ 2020 ແລະ ວິທີການແບ່ງເງິນປັນຜົນ

1.6 ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງ ບໍລິສັດ ປະຈຳປີ 2021

1.7 ພິຈາລະນາອະນຸມັດ ຈ່າຍຄ່າຕອບແທນລາຍປີ 2020 ສຳລັບຜູ້ອຳນວຍການຂອງບໍລິສັດ

1.8 ພິຈາລະນາອະນຸມັດ ກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງ ຜູ້ອຳນວຍການ ປະຈຳປີ 2021

1.9 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການ ກວດສອບບັນຊີ ປະຈຳປີ 2021

1.10 ເລື່ອງອື່ນໆ (ຖ້າມີ)

2. ວິທີລົງຄະແນນສຽງ

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ
- ໃນການລົງຄະແນນສຽງໃນແຕ່ລະວາລະ ປະທານຈະສອບຖາມຜູ້ຖືຮຸ້ນວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ແມ່ນ ໃຫ້ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າຫ້ອງປະຊຸມ ພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນເພື່ອໄປກວດນັບຄະແນນສຽງ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ

- ສຳລັບຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມ

3. ການນັບຄະແນນສຽງ
- ການນັບຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າໃນວາລະທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ
- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ຫຼັງຈາກລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ. ໃນກໍລະນີຜູ້ຖືຮຸ້ນໄດ້ສົ່ງບັດລົງຄະແນນສຽງບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ໄດ້ນຳເອົາຄະແນນສຽງດັ່ງກ່າວ ມານັບຄະແນນສຽງຕື່ມອີກ

ປະທານກອງປະຊຸມສືບຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ໂດຍລາຍງານແຕ່ລະວາລະດັ່ງຕໍ່ໄປນີ້:

## ວາລະທີ 1 ຮັບຮອງລາຍງານກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງລາຍງານກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020 ທີ່ປະຊຸມເມື່ອວັນທີ 04 ທັນວາ 2020 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020 ເຊິ່ງໄດ້ປະຊຸມໃນວັນທີ 04 ທັນວາ 2020

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳ ປີ 2020 ເຊິ່ງຈັດຂຶ້ນໃນວັນທີ 04 ທັນວາ 2020 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ ເຂົ້າຮ່ວມປະຊຸມ

**ວາລະທີ 2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2020**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳ ເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2020 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງ ຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານີບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2020 ເຊິ່ງມີລາຍລະອຽດດັ່ງນີ້:

- ຜົນດຳເນີນງານທີ່ສຳຄັນຂອງປີ 2020
  - ເປີດຕົວຜະລິດຕະພັນໃຫມ່ ໂດຍເລີ່ມໃຫ້ບໍລິການເຊົ່າສິນເຊື່ອຄືນໃຫມ່ (Refinance) ສຳ ລັບລົດທີ່ໃຊ້ແລ້ວ (Used car)

    ບໍລິສັດໄດ້ເລີ່ມໃຫ້ບໍລິການສິນເຊື່ອສຳລັບລົດທີ່ໃຊ້ແລ້ວ ເພື່ອຊ່ວຍເຫຼືອສະພາບຄ່ອງໃຫ້ ແກ່ລູກຄ້າຂອງບໍລິສັດ ຜູ້ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງໂຄໂລນ່າໄວຣັສ (Covid-19) ເຊິ່ງສິນເຊື່ອໃຫມ່ນີ້ ຈະໃຫ້ລູກຄ້ານຳລົດທີ່ໃຊ້ແລ້ວຂອງຕົນມາຂໍສິນເຊື່ອ ຄືນໃຫມ່ ແລະ ໃນອານາຄົດ ບໍລິສັດຈະຂະຫຍາຍຈຳນວນລູກຄ້າທີ່ໃຊ້ບໍລິການໃຫ້ເພີ່ມ ຫຼາຍຍິ່ງຂຶ້ນ
  - ເປີດຕົວມາດຕະການຊ່ວຍເຫຼືອລູກຄ້າທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງໂຄ ໂລນ່າໄວຣັດ (Covid-19) ເຊິ່ງແບ່ງອອກເປັນມາດຕະການຄື:
    - ຜັກຊຳລະໜີ້ເປັນເວລາ 2 ເດືອນ
    - ແປງສັນຍາໃຫມ່

- ຈຳນວນເງິນກູ້ໃໝ່ຂອງ ປີ 2020 ທຽບໃສ່ ປີ 2019

| | 2019 | 2020 | ຜົນຕ່າງ |
|---|---|---|---|
| ຈຳນວນສັນຍາ (ຄັນ) | 6.030 | 5.046 | -16,3 % |
| ຈຳນວນເງິນໃຫ້ສິນເຊື່ອ (ລ້ານກີບ) | 68.557 | 58.485 | -14,7 % |

- ຜົນການດຳເນີນທຸລະກິດປະຈຳ ປີ 2020 ທຽບໃສ່ ປີ 2019.

| | 2019 | 2020 | ຜົນຕ່າງ |
|---|---|---|---|
| ກຳໄລສຸດທິ (ກ່ອນອາກອນ) | 10.340,2 | 8.869,1 | - 1.471,1 |
| ອາກອນນິຕິບຸກຄົນ | 2.255,6 | 1.124,3 | - 1.131,3 |
| ກຳໄລສຸດທິ (ຫຼັງອາກອນ) | 8.084,6 | 7.744,8 | - 339,8 |

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2020

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2020 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 3 ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2020**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາກ່ຽວກັບງົບສະແດງສະຖານະການເງິນຂອງ ບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2020 ໂດຍ ວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2020 ເຊິ່ງມີລາຍລະອຽດ ດັ່ງນີ້:

- ສະຖານະທາງການເງິນ ວັນທີ 31 ທັນວາ 2020
  - ຊັບສິນລວມ 88.739,4 ລ້ານກີບ
  - ໜີ້ສິນລວມ 17.979,3 ລ້ານກີບ
  - ສ່ວນຂອງຜູ້ຖືຮຸ້ນ 70.760,1 ລ້ານກີບ
  - ລາຍໄດ້ລວມ 25.589,8 ລ້ານກີບ
  - ລາຍຈ່າຍລວມ 16.720,7 ລ້ານກີບ
  - ກຳໄລສຸດທິ 7.744,8 ລ້ານກີບ

| Financial Ratio ທີ່ສຳຄັນ | 2019 | 2020 | ປ່ຽນ (+/-) |
|---|---|---|---|
| Net Profit Margin | 33,3% | 30,0% | -3,3% |
| ROA | 8,6% | 8,7% | +0,1% |
| ROE | 12,1% | 10,9% | -1,2% |
| D/E ratio (Times) | 0,4 | 0,3 | -0,1 times |

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2020

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມພິຈາລະນາງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2020 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 4 ພິຈາລະນາຮັບຮອງການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2021**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2021 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບ ການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2021 ເຊິ່ງມີບົດສະຫຼຸບດັ່ງນີ້:

- ແຜນທຸລະກິດຂອງບໍລິສັດ ສຳລັບປີ 2021
  - ສິນເຊື່ອໃຫມ່ໃນປີ 2021 ແມ່ນເທົ່າກັບ 19.800 ລ້ານກີບ
  - ຍອດເງິນກູ້ທີ່ຄ້າງຈ່າຍໃນທ້າຍປີ 2021 ແມ່ນປະມານ 33.000 ລ້ານກີບ

- ກູ້ຢືມເງິນຈາກທະນາຄານ EXIM ຈາກປະເທດໄທ
  - ເງິນກູ້ທັງໝົດ ເທົ່າກັບ 3.0 ລ້ານໂດລາສະຫະລັດ.
  - ການເຊັນສັນຍາເງິນກູ້ແມ່ນວັນທີ 28 ກຸມພາ 2020.
- ແນວທາງໃນການກູ້ຢືມ.
  - ກູ້ຢືມຈາກສະຖາບັນການເງິນ ທັງທີ່ມີຫຼັກຊັບຄ້ຳປະກັນ ຫຼື ບໍ່ມີຫຼັກຊັບຄ້ຳປະກັນ
  - ກູ້ຢືມໂດຍການອອກ Corporate Bond ທັງແບບມີຜູ້ຄ້ຳປະກັນ ແລະ ບໍ່ມີຜູ້ຄ້ຳປະກັນ
  - ກູ້ຢືມເງິນຈາກບຸກຄົນ, ກຳມະການ ຫຼື ຜູ້ຖືຮຸ້ນ ທັງທີ່ມີຫຼັກປະກັນ ແລະ ບໍ່ມີຫຼັກປະກັນ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການຕາມແຜນງານປະຈຳປີ 2021

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2021 ແລະ ມອບອຳນາດໃຫ້ສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ເປັນຜູ້ດຳເນີນການ ແລະ ລົງນາມໃນເອກະສານຕ່າງໆ ທີ່ກ່ຽວຂ້ອງ ດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 5 ພິຈາລະນາອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2020 ແລະ ວິທີການແບ່ງເງິນປັນຜົນ**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2020 ແລະ ວິທີການແບ່ງເງິນປັນຜົນ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບ ການຈັດສັນຫາກຳໄລສຸດທິ ປະຈຳປີ 2020 ແລະ ວິທີການແບ່ງເງິນປັນຜົນເຊິ່ງມີບົດສະຫຼຸບດັ່ງນີ້:

- ສະຫຼຸບການຈັດສັນຫາກຳໄລສຸດທິປະຈຳປີ 2020 7.744.783.175 ກີບ
  1. ສຳຮອງຕາມກົດໝາຍ 774.478.318 ກີບ 10,00 %
  2. ຈ່າຍເງິນປັນຜົນ 6.200.000.000 ກີບ 80,05 %
  3. ສະສົມໄວ້ໃນກຳໄລສະສົມ 770.304.857 ກີບ 9,95 %
- ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ຂອງບໍລິສັດ ເພື່ອກຳນົດຜູ້ມີສິດໄດ້ຮັບເງິນປັນຜົນປະຈຳປີ ໃນວັນທີ 26 ມີນາ 2021
- ກຳນົດຈ່າຍເງິນປັນຜົນໃນອັດຕາ 155 ກີບຕໍ່ຮຸ້ນ (ມູນຄ່າກຳນົດ 1.000 ກີບຕໍ່ຮຸ້ນ) ພາຍໃນ 30 ວັນ ຫຼັງອະນຸມັດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 (ບໍລິສັດຢູ່ໃນລະຫວ່າງດຳເນີນການປ່ຽນແປງມູນຄ່າກຳນົດຈາກ 1.000 ກີບ ເປັນ 100 ກີບຕໍ່ຮຸ້ນ ເຊິ່ງຖ້າດຳເນີນການປ່ຽນແປງມູນຄ່າກຳນົດເປັນ 100 ກີບຕໍ່ຮຸ້ນ ກ່ອນວັນຈ່າຍເງິນປັນຜົນນັ້ນ ເງິນປັນຜົນຈະເທົ່າກັບ 15.5 ກີບຕໍ່ຮຸ້ນແທນ)

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2020 ແລະ ວິທີການແບ່ງເງິນປັນຜົນ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2020 ແລະວິທີການແບ່ງເງິນປັນຜົນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

| | | | |
|---|---|---|---|
| 1. | ສຳຮອງຕາມກົດໝາຍ | 774.478.318 | ກີບ 10,00 % |
| 2. | ຈ່າຍເງິນປັນຜົນ | 6.200.000.000 | ກີບ 80,05 % |
| 3. | ສະສົມໄວ້ໃນກຳໄລສະສົມ | 770.304.857 | ກີບ 9,95 % |
| | ລວມ | 7.744.783.175 | ກີບ |

- ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ຂອງບໍລິສັດ ເພື່ອກຳນົດຜູ້ມີສິດໄດ້ຮັບເງິນປັນຜົນປະຈຳປີ ໃນວັນທີ 26 ມີນາ 2021
- ກຳນົດຈ່າຍເງິນປັນຜົນໃນອັດຕາ 155 ກີບຕໍ່ຮຸ້ນ (ມູນຄ່າກຳນົດ 1.000 ກີບຕໍ່ຮຸ້ນ) ພາຍໃນ 30 ວັນ ຫຼັງອະນຸມັດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 (ບໍລິສັດຢູ່ໃນລະຫວ່າງດຳເນີນການປ່ຽນແປງ ມູນຄ່າກຳນົດຈາກ 1.000 ກີບ ເປັນ 100 ກີບຕໍ່ຮຸ້ນ ເຊິ່ງຖ້າດຳເນີນການປ່ຽນແປງມູນຄ່າກຳນົດເປັນ 100 ກີບຕໍ່ຮຸ້ນ ກ່ອນວັນຈ່າຍເງິນປັນຜົນນັ້ນ ເງິນປັນຜົນຈະເທົ່າກັບ 15.5 ກີບຕໍ່ຮຸ້ນແທນ)

**ວາລະທີ 6 ພິຈາລະນາອະນຸມັດແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2021**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດແຜນດຳເນີນການ, ເງິນເດືອນຂອງ ພະນັກງານ ແລະ ງົບລົງທຶນຂອງບໍລິສັດປະຈຳປີ 2021 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງ ຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານີ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວ ແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບ ລົງທຶນຂອງບໍລິສັດປະຈຳປີ 2021 ເຊິ່ງມີບົດສະຫຼຸບດັ່ງນີ້:

- ອີງຕາມແຜນທຸລະກິດຂອງບໍລິສັດ ສຳລັບປີ 2021, ບໍລິສັດໄດ້ຄາດຄະເນວ່າຈະເພີ່ມກຳໄລ ສຸດທິ 6-7 ສ່ວນຮ້ອຍຈາກກຳໄລສຸດທິ ( ຫຼັງອາກອນ ) ປະຈຳປີທີ່ຜ່ານມາ.

- ດ້ານການຕະຫຼາດ

  ບໍລິສັດມີແຜນຈະເພີ່ມຈຳນວນສັນຍາໃຫມ່ (ສັນຍາ) ປະມານ 60% ເມື່ອທຽບກັບປີທີ່ຜ່ານມາ ທັ້ງໃນດ້ານຂອງຈຳນວນສັນຍາ ແລະ ຈຳນວນເງິນໃຫ້ສິນເຊື່ອ ເຊິ່ງມີກົນລະຍຸດດັ່ງນີ້:

  - ຮັກສາສ່ວນແບ່ງຕະຫຼາດໃນນະຄອນຫຼວງວຽງຈັນ ແລະ ແຂວງ ສະຫວັນນະເຂດ
  - ພັດທະນາຊ່ອງທາງການຕະຫຼາດໃຫມ່ຜ່ານຊ່ອງທາງສື່ສານອອນໄລນ໌ (Social Media) ແລະ ເທັກໂນໂລຍີໃຫມ່
  - ຂະຫຍາຍພື້ນທີ່ໃຫ້ບໍລິການ ໂດຍສ້າງຕັ້ງສາຂາໃຫມ່ 1-2 ແຫ່ງ

- ເງິນກູ້ຢືມ

  ຈາກແຜນດຳເນີນທຸລະກິດປີ 2021 ບໍລິສັດຕ້ອງການຂະຫຍາຍທຸລະກິດເພີ່ມຂຶ້ນອີກໃນຕະຫຼາດໃຫມ່ໆ ຕາມທີ່ກຳນົດໄວ້ໃນຍຸດທະສາດທີ່ກຳນົດໄວ້ ສະນັ້ນ, ບໍລິສັດຈຶ່ງຕ້ອງການກູ້ຢືມເງິນປະມານ 19.800 ລ້ານກີບເພື່ອເຮັດໃຫ້ບັນລຸຕາມແຜນທີ່ວາງໄວ້.

- ດ້ານດ້ານລົງທຶນ

| ຫົວຂໍ້ການລົງທຶນ | ກີບ |
|---|---|
| ອາຄານ, ສຳນັກງານ ແລະ ຄ່າຕົບແຕ່ງ | 64.000.000 |
| ຍານພາຫະນະ | 520.000.000 |
| ຮາດແວຄອມພິວເຕີ ແລະ ອຸປະກອນອື່ນໆ | 96.000.000 |
| Application Software | 240.000.000 |
| ເຄື່ອງຄອມພິວເຕີ, ອຸປະກອງພ້ວງ | 100.000.000 |
| ອຸປະກອນຫ້ອງການ + ການຫົດແທນ | 160.000.000 |
| ການລົງທຶນສຳລັບສາຂາໃຫມ່ (ສິ່ງອຳນວຍຄວາມສະດວກ+ອຸປະກອນ) | 96.000.000 |
| **ທັງໝົດ** | **1.276.000.000** |

- ດ້ານພະນັກງານ

  ຈຳນວນພະນັກງານທັງໝົດໃນທ້າຍປີ 2021 ແມ່ນ 133 ຄົນ, ເຊິ່ງງົບປະມານເງິນເດືອນຂອງພະນັກງານ ແລະ ຄ່າຕອບແທນສຳລັບແຜນທຸລະກິດຂອງບໍລິສັດສຳລັບປີ 2021 ແມ່ນເທົ່າກັບ 8.228,3 ລ້ານກີບ ສຳລັບພະນັກງານລວມທັງຜູ້ອຳນວຍການໃຫຍ່

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດປະຈຳປີ 2021

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິອະນຸມັດອະນຸມັດແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດປະຈຳປີ 2021 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 7 ພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2020 ສຳລັບຜູ້ອຳນວຍການຂອງບໍລິສັດ**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2020 ສຳລັບຜູ້ອຳນວຍການຂອງບໍລິສັດ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານີບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ເປັນຜູ້ນຳສະເໜີກ່ຽວກັບການຈ່າຍຄ່າຕອບແທນລາຍປີ 2020 ສຳລັບຜູ້ອຳນວຍການຂອງບໍລິສັດ ເຊິ່ງບົດສະຫຼຸບດັ່ງນີ້:

- ສະເໜີຂໍອະນຸມັດຈ່າຍຄ່າຕອບແທນຈາກຜົນດຳເນີນງານປະຈຳປີ 2020 ສູງສຸດ 210.0 ລ້ານກີບ ໃຫ້ແກ່ຜູ້ອຳນວຍການຂອງບໍລິສັດ ແລະ ມອບໝາຍໃຫ້ຄະນະກຳມະການກຳນົດຜົນຕອບແທນເປັນຜູ້ຈັດສັນ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2020 ສຳລັບຜູ້ອຳນວຍການຂອງບໍລິສັດ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິກອງປະຊຸມໄດ້ອະນຸມັດຈ່າຍຄ່າຕອບແທນລາຍປີ 2020 ສຳລັບຜູ້ອຳນວຍການຂອງ ບໍລິສັດ ໂດຍຈຳນວນເງິນໂບນັດສູງສຸດ ບໍ່ໃຫ້ເກີນ 210.0 ລ້ານກີບ ແລະ ມອບອຳນາດໃຫ້ຄະນະອານຸກຳມະການກຳນົດຜົນຕອບແທນ ມີໜ້າທີ່ໃນການຈັດສັນ ແລະ ກຳນົດວັນຈ່າຍຕໍ່ໄປ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 8 ພິຈາລະນາອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2021**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2021 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣິລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ເປັນຜູ້ນຳສະເໜີກ່ຽວກັບ ສະເໜີຂໍອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2021 ເຊິ່ງບົດສະຫຼຸບດັ່ງຕໍ່ໄປນີ້:

ຂໍອະນຸມັດກຳນົດຜົນຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2021

| | ລາຍລະອຽດ | ປະທານ | ກຳມະການ | ໜ່ວຍ |
|---|---|---|---|---|
| 1. | ຜົນຕອບແທນລາຍເດືອນ | 11.250.000 | 6.250.000 | ກີບ/ເດືອນ/ທ່ານ |
| 2. | ເບ້ຍປະຊຸມ:<br>- ສະພາບໍລິຫານ<br>- ຄະນະກຳມະການຊຸດຍ່ອຍ | <br>2.500.000<br>1.500.000 | <br>1.500.000<br>1.000.000 | <br>ກີບ/ຄັ້ງ/ທ່ານ<br>ກີບ/ຄັ້ງ/ທ່ານ |
| 3. | ບຳເນັດປະຈຳປີ | 3% ຈາກການປະມານກຳໄລສຸດທິ ປະຈຳປີ 2021 (ພິຈາລະນາປັບເພີ່ມ ຫຼື ຫຼຸດລົງຕາມຜົນງານຈິງ) | | |

**ໝາຍເຫດ:** ຜົນຕອບແທນຂ້າງເທິງ ຍັງບໍ່ໄດ້ລວມກັບເງິນເດືອນຂອງຜູ້ອຳນວຍການໃຫຍ່ ເຊິ່ງກຳນົດໄວ້ແລ້ວໃນແຜນງານປະຈຳປີ 2021 (ໃນວາລະທີ 6)

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2021

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2021 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 9 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການກວດສອບ ບັນຊີ ປະຈຳປີ 2021**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການ ກວດສອບບັນຊີ ປະຈຳປີ 2021 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມໄດ້ແຕ່ງຕັ້ງສະມາຊິກສະພາບໍລິຫານ ແລະ ປະທານຄະນະກຳມະການກວດສອບ, ທ່ານ ກຽງໄກ ນິດສະຍັນ, ສະເໜີຂໍອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີປະຈຳປີ 2021, ໂດຍຕາມທີ່ບໍລິສັດ Deloitte (Lao) ຈຳກັດຜູ້ດຽວເຊິ່ງເປັນບໍລິສັດຜູ້ກວດສອບບັນຊີພາຍນອກໃຫ້ກັບບໍລິສັດມາຕັ້ງແຕ່ປີ 2017 ເຖິງປະຈຸບັນ ໄດ້ດຳເນີນການກວດສອບຄົບ 4 ປີຕິດຕໍ່ກັນ ໂດຍບໍລິສັດຈະຕ້ອງມີການປ່ຽນແປງຜູ້ກວດສອບພາຍນອກ ຕາມເກນທີ່ກຳນົດໄວ້ ດັ່ງນັ້ນ ບໍລິສັດຈຶ່ງພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກລາຍໃຫມ່ ເຊິ່ງບົດສະຫຼຸບດັ່ງຕໍ່ໄປນີ້:

- ກອງປະຊຸມໄດ້ອະນຸມັດແຕ່ງຕັ້ງ ບໍລິສັດ PWC (Lao) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີ ປະຈຳປີ 2021
- ກຳນົດຄ່າຕອບແທນສຳລັບກວດສອບບັນຊີ ຈຳນວນ 28,700 ໂດລາສະຫະລັດ ຍັງບໍ່ລວມຄ່າອາກອນ ແລະ Out of Pocket

ເຫດຜົນສຳຄັນທີ່ບໍລິສັດແຕ່ງຕັ້ງ ບໍລິສັດ PWC (Lao) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີ ປະຈຳປີ 2021 ດັ່ງນີ້:

- ເປັນບໍລິສັດກວດສອບທີ່ດຳເນີນທຸລະກິດໃນ ສປປ ລາວ ມາເປັນໄລຍະເວລານານຫຼາຍປີ ເຊິ່ງມີປະສົບການ ແລະ ຄວາມເຂົ້າໃຈເປັນຢ່າງດີ
- ເປັນບໍລິສັດທີ່ໄດ້ກວດສອບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວຫຼາຍທີ່ສຸດ
- ສະເໜີຄ່າຕອບແທນສຳລັບການກວດສອບຕ່ຳກວ່າຄ່າຕອບແທນສຳລັບການກວດສອບໃນປີທີ່ຜ່ານມາ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການກວດສອບບັນຊີປະຈຳປີ 2021

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 33.037.076 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ບໍລິສັດ PWC (Lao) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີປະຈຳປີ 2021 ຈຳນວນ 28,700 ໂດລາສະຫະລັດ ຍັງບໍ່ລວມຄ່າອາກອນ ແລະ Out of Pocket ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 10 ເລື່ອງອື່ນໆ (ຖ້າມີ)**

ບໍ່ມີທ່ານໃດສະເໜີ ຫຼື ສອບຖາມເລື່ອງໃດໆເພີ່ມເຕີມ

ບໍ່ມີເລື່ອງອື່ນໆທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາ ທ່ານປະທານກອງປະຊຸມຈຶ່ງສະເໜີໃຫ້ປິດກອງປະຊຸມໃນເວລາ 11:00 ໂມງ

**ປະທານກອງປະຊຸມ**

**(ເຊັນແທນ)**

**(ທ່ານນາງ ອິນທະວິໄລ ອຸດົມ)**

**ຜູ້ອຳນວຍການໃຫຍ່ບໍລິສັດ**

**(ທ່ານ ມານົບ ຕຣິຊິດວິໄລ)**

**ເລຂານຸການບໍລິສັດ**

**(ທ່ານ ພົງສີລີ ທອງແຖມ ນະ ອະຍຸດທະຍາ)**

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

# ເອກະສານປະກອບວາລະທີ 2 ແລະ 6:

# ບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ, ລາຍງານປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2022




ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

Mahathuen Leasing Public Company

# ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳປີ 2021

# Annual Report 2021

ບ້ານ: ໂພນພະເນົາ ກມ5 ເລກທີ: 628

ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ

ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

# ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳປີ 2021

**ຄຳຂວັນ (Slogan)**

“ທຸກເລື່ອງສິນເຊື່ອເປັນໄປໄດ້ທີ່ ມະຫະທຶນ”

“All Financial is possible here”

**ວິໄສທັດ (Vision)**

“ມະຫະທຶນ ຈະເປັນໜຶ່ງບໍລິສັດໃນຕະຫຼາດຫຼັກຊັບລາວທີ່ມີການປົກຄອງທີ່ດີ ແລະ ເປັນຜູ້ນຳໃນທຸລະກິດເຊົ່າສິນເຊື່ອໃນ ສປປ.ລາວ”

“We will be a good governance company on Lao Securities Exchange and the leader of Leasing business in Lao PDR”

**ພາລະກິດ (Mission)**

“ທຸກເລື່ອງສິນເຊື່ອເປັນໄປໄດ້ທີ່ ມະຫະທຶນ” ຄືຄຳໝັ້ນສັນຍາໃນການດຳເນີນທຸລະກິດຂອງເຮົາທີ່ໃຫ້ກັບຜູ້ທີ່ມີສ່ວນໄດ້ສ່ວນເສຍ ໂດຍມີພາລະກິດດັ່ງນີ້:

**ຕໍ່ລູກຄ້າ** : ເປັນໜຶ່ງໃນໃຈລູກຄ້າດ້ວຍທີມງານມືອາຊີບໃຫ້ບໍລິການທີ່ປະທັບໃຈ ຍຸດຕິທຳ ແລະ ນະວັດຕະກຳທາງການເງິນທີທັນສະໄໝ

**ຕໍ່ພະນັກງານ** : ພັດທະນາບຸກຄະລາກອນໃຫ້ເປັນມືອາຊີບ ແລະ ສ້າງຄວາມໝັ້ນຄົງໃນຊີວິດການເຮັດວຽກງານ ແລະ ຊີວິດຄອບຄົວ

**ຕໍ່ຜູ່ຖືຮຸ້ນ** : ເປັນໜຶ່ງບໍລິສັດໃນຕະຫຼາດຫຼັກຊັບລາວທີ່ມີການປົກຄອງທີ່ດີ ແລະ ໃຫ້ຜົນຕອບແທນໃນລະດັບທີ່ໜ້າລົງທຶນ

**ຕໍ່ຄູ່ຄ້າ** : ສ້າງຄວາມໄວ້ວາງໃຈຕໍ່ພັນທະມິດທາງທຸລະກິດທີ່ພ້ອມຈະເຕີບໂຕ ແລະ ປະສົບຄວາມສຳເລັດໄປນຳກັນ

**ຕໍ່ສັງຄົມ** : ເພື່ອເປັນທາງເລືອກໃນການລົງທຶນສຳລັບປະຊາຊົນລາວ

**ສາລະບານ**

ໜ້າ


ຄຳຂວັນ.....i
ວິໄສທັດ .....i
ພາລະກິດ .....i
ສາລະບານ.....ii
1. ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ..... 1
1.1 ຂໍ້ມູນທົ່ວໄປຂອງບໍລິສັດ..... 1
1.2 ປະຫວັດຄວາມເປັນມາ ..... 1
2. ບັນດາປັດໄຈຄວາມສ່ຽງ ..... 10
3. ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ ..... 12
3.1 ນະໂຍບາຍການບໍລິຫານຄວາມສ່ຽງ (Risk Management Policy) ..... 12
3.2 ລະດັບຄວາມສ່ຽງທີ່ຍອມຮັບໄດ້ (Risk Appetite)..... 12
3.3 ໂຄງສ້າງການບໍລິຫານຄວາມສ່ຽງ (Risk Management Struture) ..... 12
3.4 ຂະບວນການໃນການບໍລິຫານຄວາມສ່ຽງ (Risk Management Process)..... 12
3.5 ແຜນບໍລິຫານຄວາມສ່ຽງ..... 13
4. ການໃຫ້ສິນເຊື່ອລົດຈັກ ..... 13
4.1 ນະໂຍບາຍການໃຫ້ສິນເຊື່ອ ..... 13
4.2 ຂັ້ນຕອນການອະນຸມັດການເຊົ່າສິນເຊື່ອ ..... 13
4.3 ຂັ້ນຕອນການດຳເນີນງານພາຍຫຼັງການອະນຸມັດການເຊົ່າສິນເຊື່ອ ..... 15
5. ໂຄງສ້າງທຶນຂອງບໍລິສັດ..... 18
5.1 ໂຄງສ້າງຜູ້ຖືຮຸ້ນ..... 18
5.2 ນະໂຍບາຍການແບ່ງເງິນປັນຜົນ..... 19
6. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ..... 20
6.1 ໂຄງຮ່າງການຈັດຕັ້ງຂອງບໍລິສັດ..... 20
6.2 ສະພາບໍລິຫານ ..... 20
6.2.1 ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ..... 20

6.2.2 ກອງປະຊຸມສະພາບໍລິຫານໃນປີທີ່ຜ່ານມາ ..... 21
6.3 ຄະນະກຳມະການຂອງສະພາບໍລິຫານ ..... 22
6.3.1 ຄະນະກຳມະການກວດສອບ ..... 22
6.3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ ..... 22
6.3.3 ຄະນະກຳມະການຄັດເລືອກ ..... 23
6.3.4 ຄະນະກຳມະການກຳນົດຄ່າຕອບແທນ ..... 23
6.3.5 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ..... 23
6.4 ຄ່າຕອບແທນຂອງສະມາຊິກສະພາບໍລິຫານ ..... 25
6.5 ນະໂຍບາຍລາຍການທີ່ກ່ຽວພັນ ..... 26
7. ຜົນການດຳເນີນທຸລະກິດ ແລະ ຜົນການດຳເນີນງານ ປະຈຳປີ 2021 ..... 28
7.1 ລາຍຮັບ ..... 28
7.2 ລາຍຈ່າຍ ..... 28
7.3 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ ..... 30
8. ຖານະການເງິນຂອງບໍລິສັດ ..... 30
8.1 ຊັບສິນ ..... 30
8.1.1 ຊັບສິນໝຸນວຽນ ..... 31
8.1.2 ຊັບສິນບໍ່ໝຸນວຽນ ..... 32
8.2 ໜີ້ສິນ ..... 32
8.2.1 ໜີ້ສິນໝຸນວຽນ ..... 33
8.2.2 ໜີ້ສິນບໍ່ໝຸນວຽນ ..... 33
9. ຜົນການດຳເນີນງານດ້ານການຕະຫຼາດ ..... 34
9.1 ການອະນຸມັດສິນເຊື່ອລົດຈັກ ..... 34
9.2 ເປີດໃຫ້ບໍລິການເຊົ່າສິນເຊື່ອຄືນໃຫມ່ (Refinance) ສຳລັບລົດມື 2 ..... 34
10. ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022 ..... 35
10.1 ດ້ານການຕະຫຼາດ ..... 35
10.2 ເງິນກູ້ຢືມ ..... 35
10.3 ການລົງທຶນ ..... 35
10.4 ພະນັກງານ ..... 36

## 1. ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

### 1.1 ຂໍ້ມູນທົ່ວໄປຂອງບໍລິສັດ

| | | |
|---|---|---|
| ຜູ້ສະເໜີອອກຈຳໜ່າຍ | : | ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ |
| ປະເພດທຸລະກິດ | : | ໃຫ້ບໍລິການເຊົ່າສິນເຊື່ອ |
| ສັນຍາລັກ | : | ມຫຫຊ |
| ສຳນັກງານໃຫຍ່ | : | ເຮືອນເລກທີ 628, (ຫຼັກ5) ຖະໜົນໄກສອນພົມວິຫານ,ບ້ານໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ |
| ໃບອະນຸຍາດລົງທຶນຕ່າງປະເທດ | : | ໃບອະນຸຍາດລົງທຶນຕ່າງປະເທດ, ເລກທີ:196-11/ຜທ/ລຫ3, ລົງວັນທີ: 10 ສິງຫາ 2011 |
| ໃບທະບຽນວິສາຫະກິດ | : | 0930/ຈທອ ລົງວັນທີ 24 ມິຖຸນາ 2021 |
| ເລກປະຈຳຕົວຜູ້ເສຍອາກອນ | : | 725714405-9-00 |
| ທຶນຈົດທະບຽນ | : | 40.000.000.000 ກີບ |
| ຈຳນວນຮຸ້ນທັງໝົດ | : | 400.000.000 ຮຸ້ນ |
| ອີເມວ | : | info@mahathuen.com |
| ເວັບໄຊ | : | www.mahathuen.com |
| ໂທລະສັບ | : | (856) 21 418065 |
| ໂທລະສານ | : | (856) 21 418066 |

### 1.2 ປະຫວັດຄວາມເປັນມາ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ: "**ບໍລິສັດ**") ໄດ້ສ້າງຕັ້ງຂຶ້ນໃນວັນທີ 02 ກັນຍາ 2011 ໃນຮູບແບບ ບໍລິສັດຈຳກັດ ດ້ວຍທຶນຈົດທະບຽນ 300.000 ໂດລາສະຫະລັດ. ບໍລິສັດໄດ້ຮັບໃບທະບຽນວິສາຫະກິດເລກທີ 3151/ຫຈທ, ປະເພດທຸລະກິດແມ່ນການໃຫ້ບໍລິການເຊົ່າສິນເຊື່ອ (ສັງຫາລິມາຊັບ), ຊຶ່ງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຖືຮຸ້ນໂດຍນັກທຸລະກິດຄົນລາວ 12 ສ່ວນຮ້ອຍ ແລະ ນັກທຸລະກິດຄົນໄທ 88 ສ່ວນຮ້ອຍ. ຜູ້ຖືຮຸ້ນຝ່າຍລາວແມ່ນ ທ່ານ ນາງ ອິນທະວິໄລ ອຸດົມ ແລະ ຜູ້ຖືຮຸ້ນຝ່າຍໄທແມ່ນ ທ່ານ ຊາຄຣິດ ນັກສອນ, ທັງສອງ ທ່ານ ມີປະສົບການໃນການເຮັດທຸລະກິດໃນ ສປປ ລາວ ມາຫຼາຍກວ່າ 20 ປີ.

ທຸລະກິດເຊົ່າສິນເຊື່ອ (Leasing) ໃນ ສປປ ລາວ ເປັນທຸລະກິດທີ່ຕ້ອງໄດ້ຮັບອະນຸຍາດໃນ ການດຳເນີນທຸລະກິດ ຈາກທະນາຄານແຫ່ງ ສປປ ລາວ ໂດຍປະຈຸບັນບໍລິສັດເຊົ່າສິນເຊື່ອຢູ່ໃນການ ຄຸ້ມຄອງຈາກກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ.

ບໍລິສັດ ເຄື່ອນໄຫວ ແລະ ດຳເນີນທຸລະກິດທີ່ກ່ຽວກັບ ບໍລິການເຊົ່າສິນເຊື່ອ (ສົ່ງຫາລິມະຊັບ). ບໍລິສັດດຳເນີນທຸລະກິດດ້ານເຊົ່າສິນເຊື່ອລາຍຍ່ອຍ (Retail finance) ໃນ ສປປ ລາວ ໂດຍໃນ ເບື້ອງຕົ້ນຈະໄດ້ດຳເນີນທຸລະກິດການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ມາຈາກປະເທດຍີ່ປຸ່ນຄື: ຍີ່ຫໍ້ ຮອນດ້າ (HONDA), ຊູຊູກິ (SUZUKI), ຢາມາຮາ (YAMAHA) ແລະ ອື່ນໆ ເປັນທຸລະກິດຫຼັກ ກ່ອນ ເພື່ອເປັນການສ້າງຖານທຸລະກິດ, ສຶກສາຮຽນຮູ້, ສະສົມປະສົບການໃຫ້ກັບອົງກອນ ລວມທັງ ການສ້າງບຸກຄະລາກອນ, ລະບົບການເຮັດວຽກທີ່ ເໝາະສົມ ແລະ ຮັດກຸມ ຕະຫຼອດຈົນເຖິງການຮຽນ ຮູ້ພຶດຕິກຳ ແລະ ການດຳເນີນທຸລະກິດໃນ ສປປ ລາວ ຈາກນັ້ນຈະຂະຫຍາຍການລົງທຶນໃນທຸລະກິດ ສິນເຊື່ອລາຍຍ່ອຍປະເພດອື່ນໆຕໍ່ໄປ.

ນະໂຍບາຍການດຳເນີນທຸລະກິດໃນຊ່ວງທຳອິດທີ່ເປີດດຳເນີນທຸລະກິດ ຕາມແຜນໄລຍະສັ້ນ 3 ປີ ຈະເນັ້ນການສ້າງອົງກອນ ແລະ ບຸກຄະລາກອນເປັນສຳຄັນ. ນະໂຍບາຍການເຮັດທຸລະກິດຈຶ່ງ ອອກແນວອະນຸລັກນິຍົມ (Conservative) ໃນດ້ານການຕະຫຼາດ ແລະ ການພິຈາລະນາການໃຫ້ເຊົ່າ ສິນເຊື່ອ ມີແຜນການປະຕິບັດງານທີ່ຊັດເຈນ, ມີການຄາດຄະເນທາງການເງິນເພື່ອອະນຸມັດໃຫ້ບໍລິການ ດ້ານການເຊົ່າສິນເຊື່ອຂະໜາດນ້ອຍ ໃຊ້ເງິນລົງທຶນທີ່ບໍ່ສູງຫຼາຍ, ແຕ່ຈະກຳນົດຮູບແບບການປະຕິບັດ ວຽກງານແບບມືອາຊີບ ຈຶ່ງກຳນົດໃຫ້ມີການສ້າງລະບຽບພາຍໃນ ໃນການປະຕິບັດ ຕະຫຼອດຈົນຂໍ້ ກຳນົດຕ່າງໆ ໃນການພິຈາລະນາການໃຫ້ເຊົ່າສິນເຊື່ອທີ່ຊັດເຈນ ແຕ່ສາມາດຢືດຢຸ່ນໄດ້ຕາມຄວາມເໝ າະສົມກັບສະພາບການ ແລະ ການແຂ່ງຂັນຂອງທຸລະກິດ.

ໄລຍະປີ 2014 - 2016 ບໍລິສັດ ໄດ້ເນັ້ນການຂະຫຍາຍຂະໜາດຂອງຖານລູກຄ້າ ແລະ ສ້າງຄວາມເປັນຜູ້ນຳຕະຫຼາດ, ເພີ່ມອັດຕາສ່ວນຄອງຕະຫຼາດໃຫ້ໄດ້ຫຼາຍຂຶ້ນ ເພື່ອຂະຫຍາຍສາຂາ ແລະ ໜ່ວຍບໍລິການໃນນະຄອນຫຼວງວຽງຈັນໃຫ້ຫຼາຍຂຶ້ນໃນອານາຄົດ. ນອກຈາກນີ້ ບໍລິສັດ ມີ ແຜນໃຫ້ມີການເພີ່ມຜະລິດຕະພັນໃຫ້ຫຼາຍຂຶ້ນເຊັ່ນ: ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (Used motorcycle) ລວມເຖິງ ການໃຫ້ບໍລິການດ້ານການໃຫ້ສິນເຊື່ອຄືນໃໝ່ (Refinance) ຈາກ ຖານລູກຄ້າເກົ່າທີ່ມີປະຫວັດການຊຳລະເງິນທີ່ດີ ເພື່ອເປັນການສ້າງຖານລູກຄ້າ ເພື່ອໄປຂະຫຍາຍ ຜະລິດຕະພັນປະເພດອື່ນໆ.

ນັບແຕ່ປີ 2017 ເປັນຕົ້ນໄປ ບໍລິສັດ ມີແຜນຈະຂະຫຍາຍສາຂາ ແລະ ໜ່ວຍບໍລິການໄປ ຕ່າງແຂວງ ແລະ ຂະຫຍາຍທຸລະກິດເຊົ່າສິນເຊື່ອປະເພດອື່ນໆ, ໂດຍມີແຜນການລະດົມທຶນໃນ ຕະຫຼາດຫຼັກຊັບລາວ (Lao Securities Exchange ຫຼື LSX), ຊຶ່ງຈະຕ້ອງມີການກຳນົດຍຸດທະ ສາດໃນການດຳເນີນທຸລະກິດໃນທາງບຸກ (Aggressive) ໃຫ້ຫຼາຍຂຶ້ນ, ໂດຍຈະຕ້ອງກຳນົດວິທີການ ຄວບຄຸມພາຍໃນທີ່ຮັດກຸມ ລວມເຖິງການບໍລິຫານຄວາມສ່ຽງທີ່ເໝາະສົມກັບຕະຫຼາດ ສ້າງອົງກອນໃຫ້ ມີການບໍລິຫານຈັດການທີ່ດີ ແລະ ສ້າງຄວາມໝັ້ນຄົງໃຫ້ແກ່ທຸລະກິດ ໂດຍຈະຕ້ອງສ້າງຄວາມສົມດຸນ

ລະຫວ່າງລູກຄ້າ, ຄູ່ຄ້າ, ນັກລົງທຶນ ແລະ ຜູ້ຖືຮຸ້ນຂອງບໍລິສັດ, ເນື່ອງຈາກບໍລິສັດ ກະກຽມເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ບໍລິສັດໄດ້ຫັນປ່ຽນຮູບແບບເປັນ ບໍລິສັດ ມະຫາຊົນ ໃນວັນທີ 20 ພະຈິກ 2017 ໂດຍມີທຶນຈົດທະບຽນ 27.760.000.000 ກີບ ຊຶ່ງດຳເນີນທຸລະກິດການໃຫ້ບໍລິການ ເຊົ່າສິນເຊື່ອ (ສັ່ງຫາລິມາຊັບ) ພາຍໃຕ້ກົດໝາຍ ຂອງ ສປປ ລາວ (ຊຶ່ງຕໍ່ໄປນີ້ ເອີ້ນວ່າ “ວັນທີປ່ຽນຮູບແບບບໍລິສັດ”) ໂດຍມີຜູ້ຖືຮຸ້ນຈາກບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ ຈຳນວນ 97,5792507204611 ສ່ວນຮ້ອຍ ຊຶ່ງເປັນບໍລິສັດຈາກປະເທດໄທ, ທ່ານ ນາງ ອິນທະວິໄລ ອຸດົມ ຖືຮຸ້ນຈຳນວນ 2,4204322766571 ສ່ວນຮ້ອຍ ແລະ ຜູ້ຖືຮຸ້ນລາຍຍ່ອຍ 11 ທ່ານ ແມ່ນຖືຮຸ້ນຈຳນວນ 0,0003170028818 ສ່ວນຮ້ອຍ.

ນັບຕັ້ງແຕ່ບໍລິສັດສ້າງຕັ້ງຂຶ້ນ ຈົນມາເຖິງກ່ອນການອອກຈຳໜ່າຍຮຸ້ນ (IPO) ບໍລິສັດ ໄດ້ມີການເພີ່ມທຶນຈົດທະບຽນ 6 ຄັ້ງ. ໃນມື້ສ້າງຕັ້ງບໍລິສັດມີທຶນຈົດທະບຽນ 300.000 ໂດລາສະຫະລັດ ຕໍ່ມາໃນປີ 2012 ໄດ້ເພີ່ມທຶນ ແລະ ປ່ຽນທຶນຈົດທະບຽນມາເປັນສະກຸນເງິນກີບ 5,6 ຕື້ກີບ. ໃນປີ 2014 ໄດ້ມີການເພີ່ມທຶນຈົດທະບຽນ 2 ຄັ້ງ ຄື: 12,8 ຕື້ກີບ ແລະ 17,76 ຕື້ກີບ ຕາມລຳດັບ. ໃນປີ 2015 ແມ່ນເພີ່ມທຶນຈົດທະບຽນມາເປັນ 23,36 ຕື້ກີບ ແລະ ໃນປີ 2016 ກໍ່ໄດ້ມີການເພີ່ມທຶນຈົດທະບຽນ 2 ຄັ້ງຄື: 25,6 ຕື້ກີບ ແລະ 27,76 ຕື້ກີບ ຕາມລຳດັບ.

ປີ 2018 ບໍລິສັດ ໄດ້ຈັດຕັ້ງສາຂາແຫ່ງທຳອິດຂຶ້ນທີ່ ແຂວງ ສະຫວັນນະເຂດ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ໂດຍໃນໄລຍະທຳອິດຈະໃຫ້ບໍລິການເຊົ່າສິນເຊື່ອສຳລັບລົດຈັກກ່ອນ ແລະ ຈະຂະຫຍາຍໃຫ້ການບໍລິການຜະລິດຕະພັນອື່ນໆຕໍ່ໄປ ສາຂາສະຫວັນນະເຂດຕັ້ງຢູ່ ເຮືອນເລກທີ 013 ໜ່ວຍ 1 ບ້ານ ລັດຕະນະລັງສີໄຕ້ ເມືອງ ໄກສອນພົມວິຫານ ແຂວງ ສະຫວັນນະເຂດ

ໃນປີນີ້ ບໍລິສັດໄດ້ອອກຮຸ້ນເພີ່ມທຶນໃໝ່ ຈຳນວນ 12.240.000 ຮຸ້ນ ລາຄາຕາມມູນຄ່າ 1.000 ກີບຕໍ່ຮຸ້ນ ເພື່ອຈຳໜ່າຍໃຫ້ກັບປະຊາຊົນທົ່ວໄປ (Initial Public Officering) ໂດຍໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອວັນທີ 13 ມີຖຸນາ 2018 ພາຍຫຼັງຈາກການຈຳໜ່າຍຮຸ້ນເພີ່ມທຶນແລ້ວເຮັດໃຫ້ບໍລິສັດມີຮຸ້ນຈຳນວນ 40.000.000 ຮຸ້ນ ຫຼື ມີທຶນຈົດທະບຽນລວມທັງໝົດ 40.000.000.000 ກີບ ຊຶ່ງບໍລິສັດໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ເມື່ອວັນທີ 18 ກັນຍາ 2018 ຖືເປັນບໍລິສັດລຳດັບທີ 8 ຂອງຕະຫຼາດຫຼັກຊັບລາວ.

ປີ 2019 ບໍລິສັດ ໄດ້ຈັດຕັ້ງໜ່ວຍບໍລິການລູກຄ້າຂຶ້ນ 1 ແຫ່ງໃນແຂວງ ສະຫວັນນະເຂດ ກໍ ຄື ໜ່ວຍບໍລິການ ດົງເຫັນ ມີທີ່ຕັ້ງຢູ່ ເຮືອນເລກທີ 254/259 ບ້ານດົງເຫັນ ຖະໜົນເສັ້ນທາງເລກທີ 9 ເມືອງ ອາດສະພັງທອງ ແຂວງ ສະຫວັນນະເຂດ

ໃນເດືອນ ມີຖຸນາ ປີດຽວກັນນີ້ ບໍລິສັດໄດ້ເລີ່ມໃຫ້ບໍລິການເຊົ່າສິນເຊື່ອສຳລັບອຸປະກອນທາງການກະເສດ ເຊິ່ງເລີ່ມຕົ້ນຈາກລົດໄຖນາ ປະເພດເດີນຕາມ ແລະ ເມື່ອມີຄວາມພ້ອມຫຼາຍຂຶ້ນຈະຂະຫຍາຍການການໃຫ້ບໍລິການເຊົ່າສິນເຊື່ອໃຫ້ຄອບຄຸມເຄື່ອງມືທາງການກະເສດໃຫ້ມີຄວາມຫຼາກຫຼາຍຂຶ້ນ

ປີ 2020 ບໍລິສັດ ໄດ້ເພີ່ມຜະລິດຕະພັນໃຫມ່ ໂດຍເລີ່ມໃຫ້ບໍລິການເຊົ່າສິນເຊື່ອຄືນໃຫມ່ (Refinance) ສຳລັບລົດທີ່ໃຊ້ແລ້ວ (Used car) ເພື່ອເພີ່ມຄວາມຫຼາກຫຼາຍຂອງຜະລິດຕະພັນ ສຳລັບເປັນທາງເລືອກໃຫ້ກັບລູກຄ້າຂອງບໍລິສັດ

ເມື່ອວັນທີ 4 ທັນວາ 2020 ກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປີ 2020 ໄດ້ມີມະຕິເຫັນດີດ້ວຍມະຕິສະເພາະ ດັ່ງນີ້:

1. ແກ້ໄຂສັດສ່ວນຫຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບ ລາວ ເປັນ ສັດສ່ວນສູງສຸດຕາມທີ່ຕະຫຼາດຫຼັກຊັບລາວ ຫຼື ສຳນັກງານຄຸ້ມຄອງຫຼັກຊັບ ລາວ ຫຼື ກົດໝາຍທີ່ກ່ຽວຂ້ອງກຳນົດໄວ້ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນ ການໃນດ້ານເອກະສານຕ່າງໆ ຈົນກວ່າຈະດຳເນີນການແລ້ວສຳເລັດ
2. ປ່ຽນແປງມູນຄ່າກຳນົດ (Par Value) ຈາກ 1.000 ກີບ ເປັນ 100 ກີບ ແລະ ເພີ່ມຈຳ ນວນຮຸ້ນຈາກ 40.000.000 ຮຸ້ນ ເປັນ 400.000.000 ຮຸ້ນ ໂດຍມີທຶນຈົດທະບຽນ 40.000.000.000 ກີບ ເທົ່າເດີມ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນການ ໃນດ້ານເອກະສານຕ່າງໆ ຈົນກວ່າຈະດຳເນີນການແລ້ວສຳເລັດ

ປີ 2021, ບໍລິສັດໄດ້ສຳເລັດການແຕກຮຸ້ນເມື່ອວັນທີ 24 ມິຖຸນາ 2021 ເຊິ່ງມູນຄ່າຮຸ້ນເທົ່າ ກັບ 100 ກີບຕໍ່ຮຸ້ນ ແລະ ຈຳນວນຮຸ້ນທັງໝົດເທົ່າກັບ 400.000.000 ຮຸ້ນ.

ເມື່ອວັນທີ 25 ຕຸລາ 2021 ບໍລິສັດໄດ້ມີການເປີດໂຕ Mobile application M HUK ເຊິ່ງ ເປັນແອັບທີ່ອຳນວຍຄວາມສະດວກໃນການຢຽກເບິ່ງຂໍ້ມູນບັນຊີສິນເຊື່ອຂອງລູກຄ້າ ແລະ ຍັງເປັນຊ່ອງ ທາງໃນການນຳສະເໜີຜະລິດຕະພັນຕ່າງໆຂອງບໍລິສັດຜ່ານທາງສະມາດໂຟນລວມເຖິງການຕິດຕໍ່ ສື່ສານລະຫວ່າງລູກຄ້າກັບບໍລິສັດໃຫ້ມີຄວາມວ່ອງໄວຍິ່ງຂຶ້ນ

ເມື່ອວັນທີ 13 ສິງຫາ 2021 ສະພາບໍລິຫານໄດ້ອະນຸມັດບໍລິສັດ ຂະຫຍາຍພື້ນທີ່ບໍລິການເພີ່ມ ເຕີມທີ່ ແຂວງ ຄຳມ່ວນ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ສາຂາ ຄຳມ່ວນ ຕັ້ງຢູ່ ເຮືອນເລກ ທີ 190, ໜ່ວຍ 13, ບ້ານ ວຽງວິໄລ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ

ປະຫວັດຄວາມເປັນມາຂອງບໍລິສັດແຕ່ລະໄລຍະ

| ປີ | ເຫດການທີ່ເກີດຂຶ້ນແຕ່ລະໄລຍະ |
|---|---|
| 2011 | ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ສ້າງຕັ້ງຂຶ້ນເມື່ອວັນທີ 2 ກັນຍາ 2011 ດ້ວຍທຶນຈົດທະບຽນ 300,000 ໂດລາສະຫະລັດ, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດເລກທີ 3151/ຫຈທ ລົງວັນທີ 02 ກັນຍາ 2011, ຊຶ່ງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຖືຮຸ້ນໂດຍນັກທຸລະກິດຄົນລາວ 12 ສ່ວນຮ້ອຍ ແລະ ນັກທຸລະກິດຄົນໄທ 88 ສ່ວນຮ້ອຍ, ຜູ້ຖືຮຸ້ນຝ່າຍລາວແມ່ນ: ທ່ານ ນາງ ອິນທະວິໄລ ອຸດົມ ແລະ ຜູ້ຖືຮຸ້ນ ຝ່າຍໄທແມ່ນ ທ່ານ ຊາຄຣິດ ນັກສອນ. |

2012

ໃນປີ 2012 ບໍລິສັດໄດ້ມີການປ່ຽນແປງສະກຸນເງິນຈົດທະບຽນ ຈາກໂດລາສະຫະລັດ ເປັນກີບ ແລະ ເພີ່ມທຶນຈົດທະບຽນຈາກ 300,000 ໂດລາສະຫະລັດ ມາເປັນ 5.600.000.000 ກີບ ຫຼື ປະມານ 700.000 ໂດລາ ສະຫະລັດ ແລະ ລົບລ້າງໃບທະບຽນວິສາຫະກິດເລກທີ 3151/ຫຈທ, ລົງວັນທີ 02 ກັນຍາ 2011 ເນື່ອງ ຈາກມີການເພີ່ມທຶນຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ ມາເປັນ ເລກທີ 1346/ຈທວ ລົງວັນທີ 09 ຕຸລາ 2012.

2014

ໃນປີ 2014 ບໍລິສັດໄດ້ມີການປ່ຽນແປງທະບຽນວິສາຫະກິດ 3 ຄັ້ງຄື:

ຄັ້ງທີ 1 ຈາກເລກທະບຽນວິສາຫະກິດເກົ່າ ເລກທີ 1346/ຈທວ ລົງວັນທີ 09 ຕຸລາ 2012 ໄດ້ມີການ ປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນ ເລກທີ 007/ຈທວ ລົງວັນທີ 06 ມັງກອນ 2014 ໂດຍມີລາຍ ລະອຽດດັ່ງນີ້: ທ່ານ ຊາຄຣິດ ນັກສອນ ໂອນຮຸ້ນຈຳນວນ 616.000 ຮຸ້ນ ເທົ່າກັບ 4.928.000.000 ກີບ, ມີ ມູນຄ່າຮຸ້ນລະ 8.000 ກີບ ໃຫ້ແກ່ ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ (Mahathun Holding Co., Ltd).
ຕໍ່ມາຄັ້ງທີ 2 ບໍລິສັດ ໄດ້ມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຜູ້ຖືຮຸ້ນຄື:
ເພີ່ມທຶນຈົດທະບຽນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 7.200.000.000 ກີບ, ໂດຍມີ ການເພີ່ມທຶນຈົດທະບຽນຈາກ 5.600.000.000ກີບ ເພີ່ມຂຶ້ນມາເປັນ 12.800.000.000 ກີບ ຊຶ່ງມີໂຄງສ້າງ ຜູ້ຖືຮຸ້ນໃໝ່ ດັ່ງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນ ການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການ ເພີ່ມທຶນ | ອັດຕາ ສ່ວນ |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 616.000 ຮຸ້ນ | 88,00% | 1.516.000 ຮຸ້ນ | 94,75% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 12,00% | 84.000 ຮຸ້ນ | 5,25% |
| ລວມ | 700.000 ຮຸ້ນ | 100% | 1.600.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບຕໍ່ຮຸ້ນ
ດັ່ງນັ້ນ, ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນ 210/ຈທວ ລົງວັນທີ 27 ພຶດສະພາ 2014.
ຄັ້ງທີ 3 ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຜູ້ຖືຮຸ້ນ ເພີ່ມທຶນ ຈົດທະບຽນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 4.960.000.000 ກີບ, ໂດຍມີການເພີ່ມ ທຶນຈົດທະບຽນຈາກ 12.800.000.000 ກີບ ເພີ່ມຂຶ້ນເປັນ 17.760.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ ດັ່ງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການ ເພີ່ມທຶນ | ອັດຕາ ສ່ວນ | ຈຳນວນຮຸ້ນຫຼັງການ ເພີ່ມທຶນ | ອັດຕາ ສ່ວນ |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 1.516.000 ຮຸ້ນ | 94,75% | 2.136.000 ຮຸ້ນ | 96,22% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 5,25% | 84.000 ຮຸ້ນ | 3,78% |

| | | | | | |
|---|---|---|---|---|---|
| ລວມ | 1.600.000 ຮຸ້ນ | 100,00% | 2.220.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ
ດັ່ງນັ້ນ ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນເລກທີ 435/ຈທວ ລົງວັນທີ 27 ຕຸລາ 2014

2015

ໃນປີ 2015 ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຜູ້ຖືຮຸ້ນ ເພີ່ມທຶນຈົດທະບຽນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 5.600.000.000 ກີບ, ໂດຍມີການເພີ່ມທຶນຈົດທະບຽນຈາກ 17.760.000.000 ກີບ ເພີ່ມຂຶ້ນເປັນ 23.360.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ ດັ່ງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 2.136.000 ຮຸ້ນ | 96,22% | 2.836.000 ຮຸ້ນ | 97,12% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 3,78% | 84.000 ຮຸ້ນ | 2,88% |
| ລວມ | 2.220.000 ຮຸ້ນ | 100% | 2.920.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ
ດັ່ງນັ້ນ ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນເລກທີ 649/ຈທວ ລົງວັນທີ 17 ກັນຍາ 2015

2016

ໃນປີ 2016 ບໍລິສັດໄດ້ມີການປ່ຽນແປງທະບຽນວິສາຫະກິດ 3 ຄັ້ງຄື:
ຄັ້ງທີ 1 ເນື່ອງຈາກມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຮຸ້ນຂອງຜູ້ຖືຮຸ້ນ ເພີ່ມທຶນຈົດທະບຽນ ຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 2.240.000.000 ກີບ, ໂດຍມີການເພີ່ມທຶນຈົດທະບຽນຈາກ 23.360.000.000 ກີບ ເພີ່ມຂຶ້ນເປັນ 25.600.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ດັ່ງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 2.836.000 ຮຸ້ນ | 97,12% | 3.116.000 ຮຸ້ນ | 97,38% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 2,88% | 84.000 ຮຸ້ນ | 2,62% |
| ລວມ | 2.920.000 ຮຸ້ນ | 100% | 3.200.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ

ດັ່ງນັ້ນ ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນເລກທີ 067/ຈທອ ລົງວັນທີ 28 ມັງກອນ 2016.

ຄັ້ງທີ 2 ເນື່ອງຈາກມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຮຸ້ນຂອງຜູ້ຖືຮຸ້ນ ເພີ່ມທຶນຈົດທະບຽນ ຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 2.160.000.000 ກີບ ໂດຍມີການເພີ່ມທຶນຈົດທະບຽນຈາກ 25.600.000.000 ກີບ ເພີ່ມຂຶ້ນເປັນ 27.760.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ດັ່ງລຸ່ມນີ້

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 3.116.000 ຮຸ້ນ | 97,38% | 3.386.000 ຮຸ້ນ | 97,58% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 2,62% | 84.000 ຮຸ້ນ | 2,42% |
| ລວມ | 3.200.000 ຮຸ້ນ | 100% | 3.470.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ

ດັ່ງນັ້ນ ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນເລກທີ 480/ຈທອ ລົງວັນທີ 15 ມິຖຸນາ 2016 .

ຄັ້ງທີ 3 ເນື່ອງຈາກມີການປ່ຽນແປງຜູ້ອຳນວຍການ, ເພີ່ມຜູ້ອຳນວຍການ ແລະ ເພີ່ມສະມາຊິກສະພາບໍລິຫານ ໂດຍອີງຕາມບົດລາຍງານ ສະພາບໍລິຫານຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຄັ້ງວັນທີ 17 ມີນາ 2016. ໂດຍມີຜູ້ເຂົ້າຮ່ວມກອງປະຊຸມ ສະພາບໍລິຫານ 7 ທ່ານ ທີ່ຖືກແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນມີ ດັ່ງນີ້:

- ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານ
- ທ່ານ ນາງ ອິນທະວິໄລ ອຸດົມ ຮອງປະທານສະພາບໍລິຫານ
- ທ່ານ ມານິບ ຕຣີລິດວິໄລ ຜູ້ອຳນວຍການໃຫຍ່
- ທ່ານ ຊັດພົນໄຊ ປັນຍາທຳບະດີ ຜູ້ອຳນວຍການ
- ທ່ານ ທອງຖະຫວັນ ທອງແຖມ ຜູ້ອຳນວຍການ
- ທ່ານ ກຽງໄກ ນິດສະຍັນ ຜູ້ອຳນວຍການ
- ທ່ານ ນາງ ປຣາດຖະໜາ ນັກສອນ ຜູ້ອຳນວຍການ

ດັ່ງນັ້ນ, ຈຶ່ງໄດ້ມີການປ່ຽນແປງເລກທະບຽນວິສາຫະກິດໃໝ່ມາເປັນ 578/ຈທອ ລົງວັນທີ 13 ກໍລະກົດ 2016

2017

ໃນປີ 2017 ບໍລິສັດໄດ້ມີການປ່ຽນແປງທະບຽນວິສາຫະກິດ 1 ຄັ້ງຄື:

ອີງຕາມມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017 ວັນທີ 25 ກໍລະກົດ 2017 ໃນກອງປະຊຸມ ທ່ານ ນາງ ອິນທະວິໄລ ອຸດົມ ມີຈຸດປະສົງຈະໂອນຂາຍຮຸ້ນ ຈຳນວນ 11 ຮຸ້ນ ມູນຄ່າລວມເປັນ 88.000 ກີບ ເທົ່າ ກັບເປີເຊັນ 0,00031702 ສ່ວນຮ້ອຍຂອງຮຸ້ນທັງໝົດ ໃຫ້ແກ່ບຸກຄົນພາຍນອກ ຊຶ່ງມີລາຍລະອຽດດັ່ງ ຕາຕະລາງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນ ກ່ອນການເພີ່ມ ທຶນ | ອັດຕາ ສ່ວນ | ຈຳນວນຮຸ້ນຫຼັງ ການເພີ່ມທຶນ | ອັດຕາສ່ວນ (ໃໝ່) |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮບດິ້ງ ຈຳກັດ | 3.386.000 ຮຸ້ນ | 97,58% | 3.386.000 ຮຸ້ນ | 97,5792507204611% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 2,62% | 83.989 ຮຸ້ນ | 2,4204322766571% |
| ທ່ານ ນາງ ທະນົງສັກ ອຸດົມ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ທະນົງສັກ ອຸດົມ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ສັງຄົມ ຈັນສຸກ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ຊາຄຣິດ ນັກສອນ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ນາງ ປຣາດຖະໜາ ນັກສອນ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ນາງ ຈິດຕິມາ ນັກສອນ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ນາງ ສຸທິດາ ນັກສອນ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ກຽງໄກ ນິດສະຍັນ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ມານີບ ຕຣີລິດວິໄລ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ທອງຖະຫວັນ ທອງແຖມ | - | - | 1 ຮຸ້ນ | 0,00002881844438% |
| ທ່ານ ຊັດພົນໄຊ ປັນຍາທຳບະດີ | - | - | 1 ຮຸ້ນ | 0,00002881844438% |
| ລວມ | 3.470.000ຮຸ້ນ | 100% | 3.470.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ

ມາຮອດວັນທີ 10 ສິງຫາ 2017 ບໍລິສັດໄດ້ມີການຈັດກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 02 ປີ 2017 ເພື່ອ ພິຈາລະນາ ແລະ ອະນຸມັດການປ່ຽນແປງມູນຄ່າກຳນົດຮຸ້ນຈາກເດີມ 8.000 ກີບ ເປັນ 1.000 ກີບ ແລະ ປ່ຽນແປງຮູບແບບຈາກບໍລິສັດຈຳກັດມາເປັນບໍລິສັດມະຫາຊົນ ເພື່ອກະກຽມອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຄັ້ງທຳອິດ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຊຶ່ງມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

| | |
|---|---|
| | <table><tr><th>ຊື່ຜູ້ຖືຮຸ້ນ</th><th>ຈຳນວນຮຸ້ນ<br>ກ່ອນ<br>ການເພີ່ມທຶນ</th><th>ອັດຕາສ່ວນ</th><th>ຈຳນວນຮຸ້ນຫຼັງ<br>ການເພີ່ມທຶນ</th><th>ອັດຕາສ່ວນ</th></tr><tr><td>ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ</td><td>3.386.000 ຮຸ້ນ</td><td>97,5792507204611%</td><td>27.088.000 ຮຸ້ນ</td><td>97,5792507204611%</td></tr><tr><td>ທ່ານ ນາງ ອິນທະວີໄລ ອຸດົມ</td><td>83.989 ຮຸ້ນ</td><td>2,4204322766571%</td><td>671.912 ຮຸ້ນ</td><td>2,4204322766571%</td></tr><tr><td>ທ່ານ ນາງ ທະນົງສັກ ອຸດົມ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ທະນົງສັກ ອຸດົມ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ສັງຄົມ ຈັນສຸກ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ຊາຄຣິດ ນັກສອນ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ນາງ ປຣາດຖະໜາ ນັກສອນ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ນາງ ຈິດຕິມາ ນັກສອນ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ນາງ ສຸທິດາ ນັກສອນ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ກອງໄກ ນິດສະຍັນ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ມານິບ ຕຣີລິດວິໄລ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ທອງຖະຫວັນ ທອງແຖມ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ທ່ານ ຊັດພົນໄຊ ປັນຍາທຳນະດີ</td><td>1 ຮຸ້ນ</td><td>0,0000288184438%</td><td>8 ຮຸ້ນ</td><td>0,0000288184438%</td></tr><tr><td>ລວມ</td><td>3.470.000 ຮຸ້ນ</td><td>100%</td><td>27.760.000 ຮຸ້ນ</td><td>100%</td></tr></table> |
| 2018 | ໃນປີ 2018 ບໍລິສັດໄດ້ອອກຮຸ້ນເພີ່ມທຶນໃໝ່ ຈຳນວນ 12.240.000 ຮຸ້ນ ລາຄາຕາມມູນຄ່າ 1.000 ກີບຕໍ່ຮຸ້ນ ເພື່ອຈຳໜ່າຍໃຫ້ກັບປະຊາຊົນທົ່ວໄປ (Initial Public Officering) ໂດຍໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອວັນທີ 13 ມີຖຸນາ 2018 ພາຍຫຼັງຈາກການຈຳໜ່າຍຮຸ້ນເພີ່ມທຶນແລ້ວເຮັດໃຫ້ບໍລິສັດມີຮຸ້ນຈຳນວນ 40.000.000 ຮຸ້ນ ຫຼື ມີທຶນຈົດທະບຽນລວມທັງໝົດ 40.000.000.000 ກີບ ຊຶ່ງບໍລິສັດໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ເມື່ອວັນທີ 18 ກັນຍາ 2018 ຖືເປັນບໍລິສັດລຳດັບທີ 8 ຂອງຕະຫຼາດຫຼັກຊັບລາວ.<br>ບໍລິສັດ ໄດ້ຈັດຕັ້ງສາຂາ ແຫ່ງທຳອິດຂຶ້ນທີ່ແຂວງ ສະຫວັນນະເຂດ ເພື່ອຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ໂດຍໃນໄລຍະທຳອິດຈະໃຫ້ບໍລິການເຊົ່າສິນເຊື່ອ ສຳລັບລົດຈັກກ່ອນ ແລະ ຈະຂະຫຍາຍໃຫ້ບໍລິການຜະລິດຕະພັນອື່ນໆອີກຕໍ່ໄປ |
| 2019 | ປີ 2019 ບໍລິສັດ ໄດ້ສ້າງຕັ້ງໜ່ວຍບໍລິການລູກຄ້າຂຶ້ນ 1 ແຫ່ງໃນແຂວງ ສະຫວັນນະເຂດ ກໍຄືໜ່ວຍບໍລິການ ດົງເຫັນ ໃນເດືອນ ມີຖຸນາ ປີດຽວກັນນີ້ ໄດ້ເລີ່ມໃຫ້ການບໍລິການເຊົ່າສິນເຊື່ອ ສຳລັບອຸປະກອນທາງການກະເສດ ເຊິ່ງເລີ່ມຕົ້ນຈາກລົດໄຖນາ ປະເພດເດີນຕາມ ແລະ ເມື່ອມີຄວາມພ້ອມຫຼາຍຂຶ້ນຈະຂະຫຍາຍການໃຫ້ບໍລິການເຊົ່າສິນເຊື່ອໃຫ້ຄອບຄຸມເຄື່ອງມືທາງການກະເສດໃຫ້ມີຄວາມຫຼາກຫຼາຍຂຶ້ນ |
| 2020 | ປີ 2020 ບໍລິສັດ ໄດ້ໄດ້ເພີ່ມຜະລິດຕະພັນໃຫມ່ ໂດຍເລີ່ມໃຫ້ບໍລິການເຊົ່າສິນເຊື່ອຄືນໃຫມ່ (Refinance) ສຳລັບລົດທີ່ໃຊ້ແລ້ວ (Used car) ເພື່ອເພີ່ມຄວາມຫຼາກຫຼາຍຂອງຜະລິດຕະພັນ ສຳລັບເປັນທາງເລືອກໃຫ້ກັບລູກຄ້າຂອງບໍລິສັດ |

| | |
|---|---|
| 2021 | ບໍລິສັດໄດ້ສຳເລັດການແຕກຮຸ້ນເມື່ອວັນທີ 24 ມີຖຸນາ 2021 ເຊິ່ງມູນຄ່າຮຸ້ນເທົ່າກັບ 100 ກີບຕໍ່ຮຸ້ນ ແລະ ຈຳນວນຮຸ້ນທັງໝົດເທົ່າກັບ 400.000.000 ຮຸ້ນ.<br><br>ເມື່ອວັນທີ 25 ຕຸລາ 2021 ບໍລິສັດໄດ້ມີການເປີດໂຕ Mobile application M HUK ເຊິ່ງເປັນແອັບທີ່ອຳນວຍຄວາມສະດວກໃນການຢ້ຽມເບິ່ງຂໍ້ມູນບັນຊີສິນເຊື່ອຂອງລູກຄ້າ ແລະ ຍັງເປັນຊ່ອງທາງໃນການນຳສະເໜີຜະລິດຕະພັນຕ່າງໆຂອງບໍລິສັດຜ່ານທາງສະມາດໂຟນລວມເຖິງການຕິດຕໍ່ສື່ສານລະຫວ່າງລູກຄ້າກັບບໍລິສັດໃຫ້ມີຄວາມວ່ອງໄວຍິ່ງຂຶ້ນ<br><br>ເມື່ອວັນທີ 13 ສິງຫາ 2021 ສະພາບໍລິຫານໄດ້ອະນຸມັດບໍລິສັດ ຂະຫຍາຍພື້ນທີ່ບໍລິການເພີ່ມເຕີມທີ່ ແຂວງ ຄຳມ່ວນ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ສາຂາ ຄຳມ່ວນ ຕັ້ງຢູ່ເຮືອນເລກທີ 190, ໜ່ວຍ 13, ບ້ານ ວຽງວິໄລ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ |

## 2. ປັນດາປັດໄຈຄວາມສ່ຽງ

ການລົງທຶນໃນທຸລະກິດໃດໜຶ່ງອາດຈະກ່ຽວຂ້ອງກັບຄວາມສ່ຽງໄດ້. ກ່ອນຈະຕັດສິນໃຈລົງທຶນ ໂດຍພິຈາລະນາຄວາມສ່ຽງທີ່ໄດ້ອະທິບາຍຢູ່ຂ້າງລຸ່ມນີ້, ຜູ້ລົງທຶນຈະຕ້ອງໄດ້ພິຈາລະນາຢ່າງຮອບຄອບກ່ຽວກັບ ຂໍ້ມູນຂ່າວສານທັງໝົດໃນບົດລາຍງານ ປະຈຳປີສະບັບນີ້. ໝວດຕໍ່ໄປນີ້ ອະທິບາຍກ່ຽວກັບ ຄວາມສ່ຽງຈຳນວນໜຶ່ງທີ່ ສາມາດເກີດຂຶ້ນ ແລະ ສາມາດ ມີຜົນກະທົບຕໍ່ບໍລິສັດ ແລະ ຄຸນຄ່າຂອງ ການລົງທຶນໃນບໍລິສັດ. ເຖິງແມ່ນວ່າ, ບໍລິສັດໄດ້ພະຍາຍາມພິຈາລະນາຄົ້ນບັນຫາ ຄວາມສ່ຽງທີ່ສຳຄັນ ທັງໝົດ, ແຕ່ກໍ່ຍັງອາດຈະມີຄວາມສ່ຽງອື່ນໆ ຊຶ່ງບໍລິສັດບໍ່ໄດ້ຄາດຄິດ, ຄວາມສ່ຽງເພີ່ມເຕີມອື່ນໆທີ່ທາງ ບໍລິສັດບໍ່ອາດຮັບຮູ້ໄດ້ໃນປະຈຸບັນ ແລະ ຄວາມສ່ຽງອື່ນໆທີ່ບໍ່ສຳຄັນ ຊຶ່ງອາດຈະຍັງມີຜົນກະທົບທາງ ລົບຕໍ່ການດຳເນີນທຸລະກິດ, ເງື່ອນໄຂທາງການເງິນ, ຜົນຂອງການດຳເນີນງານ ແລະ ການຄາດຄະເນ ຂອງບໍລິສັດ. ບົດລາຍງານ ປະຈຳປີສະບັບນີ້ຍັງໄດ້ມີການຄາດຄະເນການດຳເນີນທຸລະກິດໃນຕໍ່ໜ້າທີ່ ກ່ຽວຂ້ອງກັບຄວາມສ່ຽງ ແລະ ຄວາມບໍ່ແນ່ນອນອື່ນໆ. ຜົນໄດ້ຮັບຕົວຈິງຂອງບໍລິສັດ ອາດແຕກຕ່າງ ຢ່າງສິ້ນເຊີງຈາກແຜນ ຍ້ອນຄວາມສ່ຽງເຫຼົ່ານັ້ນ. ຈາກການອະທິບາຍ ການຄາດຄະເນຂອງການ ດຳເນີນທຸລະກິດໃນຕໍ່ໜ້າອັນເປັນຜົນຈາກບາງປັດໄຈ ລວມທັງບັນດາຄວາມສ່ຽງທີ່ບໍລິສັດພວກເຮົາ ອາດຈະປະເຊີນໜ້າຕາມທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້ ແລະ ບ່ອນອື່ນໆໃນບົດລາຍງານ ປະຈຳປີສະບັບນີ້.

ສປປ ລາວ ອາດຈະຖືວ່າຍັງເປັນ “ຕະຫຼາດບຸກເບີກ (Frontier Market)” ແລະ ການລົງທຶນ ໃນຕະຫຼາດຫຼັກຊັບທີ່ສ້າງຕັ້ງຂຶ້ນໃໝ່ ສາມາດເຮັດໃຫ້ເກີດມີຄວາມສ່ຽງ ຊຶ່ງບໍ່ມີຢູ່ໃນ “ຕະຫຼາດເກີດໃໝ່ (Emerging Market)”. ດັ່ງນັ້ນ, ນອກຈາກບັນຫາທີ່ພົວພັນກັບບໍລິສັດ (ຄຸນນະພາບຂອງການ ບໍລິຫານ ແລະ ຊັບສິນ, ການສ້າງກະແສເງິນສົດ, ສະພາບຄ່ອງທາງການເງິນ, ລະບຽບການຕ່າງໆທີ່

ກ່ຽວຂ້ອງ ແລະ ອື່ນໆ), ຜູ້ລົງທຶນຍັງຈະຕ້ອງ ໄດ້ເອົາໃຈໃສ່ຢ່າງລະມັດລະວັງ ຕໍ່ບັນຫາທີ່ພົວພັນກັບ ຕະຫຼາດຫຼັກຊັບໃໝ່ເຊັ່ນ: ລະບຽບການ, ອາກອນ, ສະພາບຄ່ອງ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບທຸລະກຳການຊື້-ຂາຍ.

ນອກຈາກຂໍ້ມູນຂ່າວສານອື່ນໆ ທີ່ມີຢູ່ໃນບົດລາຍງານ ປະຈຳປີສະບັບນີ້ແລ້ວ ຜູ້ລົງທຶນຈະຕ້ອງ ໄດ້ພິຈາລະນາກ່ຽວກັບບັນດາຄວາມສ່ຽງທີ່ອະທິບາຍຢູ່ຂ້າງລຸ່ມນີ້ກ່ອນທີ່ຈະຕັດສິນໃຈລົງທຶນ. ຕໍ່ໄປນີ້ ແມ່ນການອະທິບາຍຄວາມສ່ຽງທີ່ສຳຄັນຈຳນວນໜຶ່ງທີ່ສາມາດມີຜົນກະທົບຕໍ່ບໍລິສັດ ແລະ ມູນຄ່າຂອງ ການລົງທຶນໃນບໍລິສັດ. ນອກຈາກນັ້ນ, ກໍ່ອາດຈະມີຄວາມສ່ຽງອື່ນໆອີກ ຊຶ່ງບໍລິສັດອາດຈະຮູ້ ຫຼື ອາດ ຈະເປັນຄວາມສ່ຽງທີ່ບໍລິສັດຖືວ່າບໍ່ສຳຄັນໃນປະຈຸບັນ ຊຶ່ງອາດມີຜົນກະທົບທາງລົບຄືກັນ ແລະ ຜູ້ ລົງທຶນອາດຈະສູນເສຍທຶນຂອງຕົນສ່ວນໜຶ່ງ ຫຼື ທັງໝົດກໍ່ເປັນໄດ້.

ບັນດາປັດໄຈຄວາມສ່ຽງຫຼັກໆ ໃນການລົງທຶນໃນຮຸ້ນສາມັນຂອງບໍລິສັດ ແມ່ນໄດ້ຖືກສັງລວມໄວ້ ດັ່ງລຸ່ມນີ້:

a. ຄວາມສ່ຽງໃນການດຳເນີນທຸລະກິດ
   - ຄວາມສ່ຽງເສດຖະກິດມະຫາພາກ
   - ຄວາມສ່ຽງດ້ານການຕະຫຼາດ ແລະ ການແຂ່ງຂັນ
   - ຄວາມສ່ຽງດ້ານລາຍຮັບຈາກຜະລິດຕະພັນບໍ່ຫຼາກຫຼາຍ

b. ຄວາມສ່ຽງທາງດ້ານການເງິນ
   - ຄວາມສ່ຽງຈາກສິນເຊື່ອທີ່ບໍ່ກໍ່ໃຫ້ເກີດລາຍໄດ້ (NPL)
   - ຄວາມສ່ຽງຈາກການເພິ່ງພາແຫຼ່ງເງິນກູ້ພຽງແຫ່ງດຽວ
   - ຄວາມສ່ຽງຈາກການປ່ຽນແປງຂອງອັດຕາດອກເບ້ຍ
   - ຄວາມສ່ຽງທີ່ບໍລິສັດອາດຈະກໍ່ໜີ້ສິນເພີ່ມຂຶ້ນ
   - ຄວາມສ່ຽງຈາກອັດຕາແລກປ່ຽນ
   - ຄວາມສ່ຽງດ້ານສິນຄ້າໃຫ້ເຊົ່າສິນເຊື່ອ ຫຼື ຄ້ຳປະກັນ

c. ຄວາມສ່ຽງໃນການຄຸ້ມຄອງບໍລິຫານ ແລະ ການດຳເນີນການ
   - ຄວາມສ່ຽງຈາກການເພິ່ງພາຜູ້ບໍລິຫານຫຼັກ
   - ຄວາມສ່ຽງດ້ານການຄຸ້ມຄອງບໍລິຫານໂດຍກຸ່ມຜູ້ຖືຮຸ້ນລາຍໃຫ່ຍ
   - ຄວາມສ່ຽງຈາກລະບົບຄອມພິວເຕີ
   - ຄວາມສ່ຽງທີ່ເກີດຈາກການທຸຈະລິດໂດຍພະນັກງານ ຫຼື ພາກສ່ວນອື່ນ

## 3. ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ

### 3.1 ນະໂຍບາຍການບໍລິຫານຄວາມສ່ຽງ (Risk Management Policy)

1) ປັດຊະຍາໃນການບໍລິຫານຄວາມສ່ຽງຂອງບໍລິສັດ (Risk Management Philosophy)
2) ກຳນົດປັດຊະຍາຂອງບໍລິສັດ ຄືດັ່ງນີ້ “ທຸກຄົນ ທຸກເຫດການ ມີຜົນກັບຜົນດຳເນີນການຂອງບໍລິສັດ ຈົ່ງເບິ່ງໄກ ແລະ ຮອບດ້ານ”

### 3.2 ລະດັບຄວາມສ່ຽງທີ່ຍອມຮັບໄດ້ (Risks Appetite)

ລະດັບຄວາມສ່ຽງທີ່ຍອມຮັບໄດ້ ໝາຍເຖິງ ລະດັບຄວາມເສຍຫາຍທີ່ບໍລິສັດ ຍອມຮັບໄດ້ ຫາກເກີດເຫດການໃດໆເກີດຂຶ້ນ ແບ່ງອອກເປັນ 4 ປະເດັນ ແລະ 5 ລະດັບຄວາມເສຍຫາຍ ດັ່ງລຸ່ມນີ້:

1) ປະເດັນຄວາມສ່ຽງ ແບ່ງເປັນ 4 ປະເດັນ ດັ່ງນີ້:
   - ການເງິນ (Financial)
   - ຊື່ສຽງ (Reputation)
   - ການລະເມີດກົດໝາຍ ຫຼື ກົດລະບຽບຂອງໜ່ວຍງານທີ່ຄຸ້ມຄອງ(Regulator relationship/ against the law)
   - ຄວາມປອດໄພ ແລະ ສະພາບແວດລ້ອມ (Safety and Environment)
2) ລະດັບຄວາມເສຍຫາຍ ແບ່ງເປັນ 5 ລະດັບ ດັ່ງນີ້ :
   - ຮ້າຍແຮງທີ່ສຸດ (Worst)
   - ກະທົບຢ່າງຮຸນແຮງ (Severe)
   - ກະທົບໜ້ອຍ (Major)
   - ກະທົບປານກາງ (Moderate)
   - ກະທົບເລັກນ້ອຍ (Minor)

### 3.3 ໂຄງສ້າງການບໍລິຫານຄວາມສ່ຽງ(Risk Management Structure)ແບ່ງອອກເປັນ 3 ລະດັບດັ່ງນີ້ :

3.3.1 ສະພາບໍລິຫານ (Board of Committee)

3.3.2 ຄະນະກຳມະການບໍລິຫານຄວາມສ່ຽງ (Risk Committee)

3.3.3 ທີມຜູ້ບໍລິຫານ ແລະ ຫົວໜ້າງານທຸກລະດັບ (Management and Function head)

### 3.4 ຂະບວນການໃນການບໍລິຫານຄວາມສ່ຽງ (Risk Management Process) ແບ່ງອອກເປັນ 3 ຂັ້ນຕອນດັ່ງນີ້ :

1) ລະບຸຄວາມສ່ຽງ ແລະ ໂອກາດ (Identify risks and opportunities)
2) ຈັດການຄວາມສ່ຽງ ແລະ ໂອກາດ (Manage risks and opportunities) ດັ່ງນີ້:
   - ແບ່ງປັນຄວາມສ່ຽງ (Share Risk)

- ໂອນຄວາມສ່ຽງອອກໄປ (Transfer Risk)
- ຫຼຸດຄວາມສ່ຽງ (Reduce Risk)
- ຫລີກລ່ຽງຄວາມສ່ຽງ (Avoid Risk)

3) ຕິດຕາມ ແລະ ລາຍງານຄວາມສ່ຽງ ແລະ ໂອກາດຕ່າງໆ (Monitor and report risks and opportunities)

### 3.5 ແຜນບໍລິຫານຄວາມສ່ຽງ ຈະຕ້ອງປະກອບດ້ວຍເນື້ອໃນຢ່າງໜ້ອຍ ດັ່ງນີ້:

1) ລາຍງານການບໍລິຫານຄວາມສ່ຽງ (Risk Management Report)
2) ແຜນບໍລິຫານຄວາມສ່ຽງ (Risk Management Plan)
3) ລະດັບຄວາມສ່ຽງທີ່ຍອມຮັບໄດ້(Risk Appetite)
4) ລາຍງານຜົນກະທົບ ແລະ ການປະເມີນຄວາມເສຍຫາຍ(Impact and Damage Evaluation Report)
5) ແຜນພາບລະດັບຄວາມສ່ຽງ (Risk Heat Map)
6) ແບບການປະເມີນຄວາມສ່ຽງ (Risk Assessment Form)

## 4. ການໃຫ້ສິນເຊື່ອລົດຈັກ

### 4.1 ນະໂຍບາຍການໃຫ້ສິນເຊື່ອ

ບໍລິສັດ ມີນະໂຍບາຍດ້ານສິນເຊື່ອ ໂດຍໄດ້ມີການກຳນົດຄຸນສົມບັດຂອງລູກຄ້າໃຫ້ເປັນໄປຕາມເກນທີ່ໄດ້ກຳນົດໄວ້ໂດຍຫຼັກໆມີຄື: ດ້ານອາຍຸ, ການປະກອບອາຊີບ, ລາຍຮັບຂອງຜູ້ຂໍສິນເຊື່ອ, ຄ່າງວດຜ່ອນຊຳລະ, ໄລຍະເວລາເຊົ່າສິນເຊື່ອ, ທີ່ຢູ່ປະຈຸບັນ, ປະຫວັດຫຍໍ້, ຜູ້ຄ້ຳປະກັນ ແລະ ເອກະສານດ້ານນິຕິກຳຕ່າງໆ ຕ້ອງໄດ້ມີການເຊັນຮັບຮອງຈາກນາຍບ້ານ, ອົງການທະບຽນສານ (ໃນບາງກໍລະນີ) ເພື່ອຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍ. ເຖິງແນວໃດກໍ່ຕາມ ບໍລິສັດຈະມີການປ່ຽນແປງດ້ານນະໂຍບາຍສິນເຊື່ອ ໂດຍຈະພິຈາລະນາຈາກສະພາບການແຂ່ງຂັນຂອງຕະຫຼາດ, ສະພາບອຸດສະຫະກຳ ແລະ ເສດຖະກິດ ເພື່ອເຮັດໃຫ້ບໍລິສັດຍັງຮັກສາຄວາມສາມາດໃນການແຂ່ງຂັນ ແລະ ຖານລູກຄ້າຂອງບໍລິສັດຢ່າງໝັ້ນຄົງໃນອະນາຄົດ.

### 4.2 ຂັ້ນຕອນການອະນຸມັດການເຊົ່າສິນເຊື່ອ

ບໍລິສັດມີການພິຈາລະນາໃຫ້ເຊົ່າສິນເຊື່ອ 2 ຂັ້ນຕອນຄື: ການພິຈາລະນາຄຸນສົມບັດຂອງຜູ້ຂໍເຊົ່າສິນເຊື່ອ (ລູກຄ້າ) ແລະ ການອະນຸມັດການໃຫ້ເຊົ່າສິນເຊື່ອ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

4.2.1 ການພິຈາລະນາຄຸນສົມບັດຂອງຜູ້ຂໍເຊົ່າສິນເຊື່ອ (ລູກຄ້າ)

1) ລູກຄ້າສະແດງຈຸດປະສົງທີ່ຈະຊື້ລົດຈັກຈາກຮ້ານຄ້າຕົວແທນຈຳໜ່າຍ

2) ເຈົ້າໜ້າທີ່ສິນເຊື່ອ ຈະແຈ້ງລາຍລະອຽດການໃຫ້ເຊົ່າສິນເຊື່ອມີຄື: ປະເພດລົດຈັກ, ການວາງເງິນດາວ, ໄລຍະເວລາການເຊົ່າສິນເຊື່ອ, ຄ່າຜ່ອນຊຳລະຕ່ຳງວດ, ຄ່າທຳນຽມ ແລະ ເອກະສານໃນການປະກອບເພື່ອຂໍເຊົ່າສິນເຊື່ອ.

3) ເຈົ້າໜ້າທີ່ສິນເຊື່ອ ຈະກວດສອບຂໍ້ມູນຕາມຊຸດແບບຟອມເອກະສານຂອງບໍລິສັດທີ່ລູກຄ້າໄດ້ປະກອບແລ້ວ ພ້ອມດ້ວຍເອກະສານຄັດຕິດຄື: ສຳເນົາບັດປະຈຳຕົວ, ສຳເນົາປຶ້ມສຳມະໂນຄົວສຳເນົາລາຍການເຄື່ອນໄຫວທາງການເງິນ (ບັນຊີຝາກປະຢັດທີ່ເປັນບັນຊີເງິນເດືອນ ກໍລະນີທີ່ເປັນລູກຄ້າທີ່ມີລາຍຮັບປະຈຳ) ໂດຍທີ່ຜູ້ຂໍເຊົ່າສິນເຊື່ອຕ້ອງສະແດງເອກະສານຄັດຕິດຕົ້ນສະບັບ ພ້ອມທັງຜູ້ຄ້ຳປະກັນ ຊ່ອງໜ້າກັບເຈົ້າໜ້າທີ່ ຕອນຍື່ນເອກະສານ ຫຼັງຈາກນັ້ນ ເຈົ້າໜ້າທີ່ວິເຄາະສິນເຊື່ອຈະກວດສອບຄວາມຖືກຕ້ອງຂອງເອກະສານ.

ໃນກໍລະນີທີ່ລູກຄ້າບໍ່ມີເອກະສານທາງການເງິນ ເຈົ້າໜ້າທີ່ສິນເຊື່ອຕ້ອງກວດສອບຂໍ້ມູນກັບທາງຫ້ອງການບ້ານຂອງລູກຄ້າຕາມທີ່ລູກຄ້າໄດ້ໃຫ້ຂໍ້ມູນໄວ້ ພ້ອມທັງລົງໄປເຖິງເຮືອນຂອງຜູ້ຂໍສິນເຊື່ອ, ບ່ອນເຮັດວຽກ, ມີການຖ່າຍຮູບ, ມີການສອບຖາມຂໍ້ມູນຈາກເພື່ອນບ້ານຕົວຈິງ.

4) ເຈົ້າໜ້າທີ່ສິນເຊື່ອຈະປະສານງານໄປຫາ ເຈົ້າໜ້າທີ່ຝ່າຍວິເຄາະ ແລະ ອະນຸມັດສິນເຊື່ອ ຢູ່ສຳນັກງານໃຫຍ່ ໂດຍແຈ້ງລາຍລະອຽດຂອງລູກຄ້າຕາມຊຸດແບບຟອມເອກະສານຢ່າງຄົບຖ້ວນ ແລະ ຖືກຕ້ອງ ເພື່ອບັນທຶກຂໍ້ມູນລົງໃນລະບົບຄອມພິວເຕີຂອງບໍລິສັດ ຊຶ່ງຈະເປັນການກວດສອບປະຫວັດການໃຊ້ບໍລິການຂອງລູກຄ້າທີ່ຜ່ານມາ ແລະ ສົ່ງຂໍ້ມູນ ໃຫ້ຫົວໜ້າຝ່າຍວິເຄາະ ແລະ ອະນຸມັດສິນເຊື່ອ. ໃນກໍລະນີທີ່ເຈົ້າໜ້າທີຝ່າຍວິເຄາະແລະອະນຸມັດສິນເຊື່ອ ຫາກກວດສອບຂໍ້ມູນແລ້ວພົບວ່າ ລູກຄ້າມີປະຫວັດບໍ່ດີ ຫຼື ບໍ່ຖືກຕາມເກນການຂໍເຊົ່າສິນເຊື່ອຂອງບໍລິສັດ ເຈົ້າໜ້າທີ່ວິເຄາະສິນເຊື່ອຈະໄດ້ແຈ້ງເຈົ້າໜ້າທີ່ສິນເຊື່ອ ປະຕິເສດການຂໍສິນເຊື່ອນັ້ນທັນທີ.

4.2.2 ການອະນຸມັດການໃຫ້ເຊົ່າສິນເຊື່ອ

1) ຫົວໜ້າຝ່າຍວິເຄາະ ແລະ ອະນຸມັດສິນເຊື່ອ ກວດສອບຊຸດຂໍ້ມູນຕ່າງໆທີ່ບັນທຶກໃນລະບົບຄອມພິວເຕີ ຕາມການກວດກາຂອງເຈົ້າໜ້າທີ່ວິເຄາະສິນເຊື່ອ ໂດຍຈະພິຈາລະນາ ອີງຕາມມາດຖານ ແລະ ເງື່ອນໄຂຂອງບໍລິສັດໄດ້ກຳນົດຫຼັກໆຄື: ລູກຄ້າຕ້ອງມີລາຍຮັບພຽງພໍຕໍ່ຄວາມສາມາດໃນການຊຳລະໜີ້, ຄວາມໝັ້ນຄົງຂອງອາຊີບ, ທີ່ຢູ່ອາໃສທີ່ສາມາດຕິດຕາມໄດ້ ແລະ ເງື່ອນໄຂອື່ນໆ ທີ່ເປັນໄປຕາມເກນມາດຖານທີ່ບໍລິສັດໄດ້ກຳນົດໄວ້.

ຢ່າງໃດກໍ່ຕາມ, ເຖິງແມ່ນວ່າ ລູກຄ້າຜູ້ຂໍເຊົ່າສິນເຊື່ອຈະມີປະຫວັດດີຈາກການຄົ້ນຫາປະຫວັດໃນຖານຂໍ້ມູນຕ່າງໆຂອງບໍລິສັດ ແຕ່ບໍລິສັດສາມາດພິຈາລະນາ

ປະຕິເສດການໃຫ້ສິນເຊື່ອທັນທີ ຖ້າເຫັນວ່າລູກຄ້າມີທ່າອ່ຽງຈະບໍ່ສາມາດຊຳລະເງິນຄ່າງວດ ຫຼື ມີຂໍ້ມູນວ່າລູກຄ້າມີພາລະຄ້າງຊຳລະເງິນກູ້ຈາກຜູ້ໃຫ້ການບໍລິການເຊົ່າສິນເຊື່ອລາຍອື່ນ. ໃນການພິຈາລະນາການອະນຸມັດເຊົ່າສິນເຊື່ອຈາກປັດໄຈທີ່ກ່າວຂ້າງເທິງນີ້ ບໍລິສັດ ມີຫຼັກການດັ່ງນີ້:

- ໃນກໍລະນີທີ່ລູກຄ້າບໍ່ມີເອກະສານທາງການເງິນ: ຈະພິຈາລະນາຈາກລູກຄ້າ ແລະ ຜູ້ຄ້ຳປະກັນ ຄື: ສຳເນົາບັດປະຈຳຕົວ ພ້ອມທັງສະແດງຫຼັກຖານບັດປະຈຳຕົວຕົ້ນສະບັບຕໍ່ເຈົ້າໜ້າທີ່ວິເຄາະສິນເຊື່ອ ແລະ ຕ້ອງມີການຢັ້ງຢືນການລົງໄປກວດສອບເຖິງສະຖານທີ່ ທ້ອງການບ້ານຂອງລູກຄ້າຕາມທີ່ລູກຄ້າໄດ້ໃຫ້ຂໍ້ມູນໄວ້ ພ້ອມທັງລົງໄປເຖິງເຮືອນຂອງຜູ້ຂໍສິນເຊື່ອ, ຖ່າຍຮູບຄົນ ແລະ ເຮືອນ, ມີການສອບຖາມຂໍ້ມູນຈາກເພື່ອນບ້ານ ເປັນຕົ້ນ.
- ໃນກໍລະນີທີ່ລູກຄ້າທີ່ມີເອກະສານທາງການເງິນ: ຈະພິຈາລະນາຈາກລູກຄ້າ ແລະ ຜູ້ຄ້ຳປະກັນຄື: ສຳເນົາບັດປະຈຳຕົວ, ສຳເນົາປຶ້ມສຳມະໂນຄົວ ແລະ ສຳເນົາລາຍການເຄື່ອນໄຫວທາງການເງິນ (ບັນຊີຝາກປະຢັດທີ່ເປັນບັນຊີເງິນເດືອນ) ແລະ ເອກະສານຢັ້ງຢືນເງິນເດືອນ ເປັນຕົ້ນ ພ້ອມທັງສະແດງຫຼັກຖານຕົວຈິງຕໍ່ເຈົ້າໜ້າທີ່ວິເຄາະສິນເຊື່ອ.

2) ການອະນຸມັດວົງເງິນເຊົ່າສິນເຊື່ອ ຈະຖືກກຳນົດຕາມນະໂຍບາຍຂອງບໍລິສັດຊຶ່ງກຳນົດຈາກລາຄາຂອງລົດ, ຍີ່ຫໍ້ ແລະ ລຸ້ນຂອງລົດ ທີ່ລູກຄ້າເລືອກ ຈາກຮ້ານຕົວແທນຈຳໜ່າຍລົດຈັກ ແລະ ຈະຕ້ອງເປັນລົດຈັກທີ່ນອນຢູ່ໃນລາຍການຂອງບໍລິສັດໄດ້ກຳນົດ.

3) ພາຍຫຼັງການເຊົ່າສິນເຊື່ອໄດ້ຮັບການອະນຸມັດແລ້ວ ເຈົ້າໜ້າທີ່ສິນເຊື່ອຈະແຈ້ງຜົນການພິຈາລະນາ ແລະ ວົງເງິນໃຫ້ຜູ້ຂໍເຊົ່າສິນເຊື່ອຊາບ.

### 4.3 ຂັ້ນຕອນການດຳເນີນງານພາຍຫຼັງການອະນຸມັດສິນເຊື່ອ

ບໍລິສັດມີຂັ້ນຕອນການດຳເນີນງານພາຍຫຼັງອະນຸມັດສິນເຊື່ອມີດັ່ງນີ້:

1) ຕິດຕາມການຂຶ້ນທະບຽນລົດໃໝ່ ແລະ ສົ່ງມອບເອກະສານສຳຄັນແກ່ລູກຄ້າ

ພາຍຫຼັງທີ່ໄດ້ຮັບການພິຈາລະນາ ແລະ ອະນຸມັດ ເຊົ່າສິນເຊື່ອແລ້ວ ບໍລິສັດກໍ່ຈະຊຳລະເງິນຄ່າຊື້ລົດສ່ວນທີ່ເຫຼືອຂອງລູກຄ້າ (ລູກໜີ້) ໃຫ້ແກ່ຮ້ານຕົວແທນຈຳໜ່າຍ ແລະ ຮ້ານຄ້າຕົວແທນຈຳໜ່າຍລົດຈັກຈະເປັນຜູ້ດຳເນີນການຂຶ້ນທະບຽນລົດຈັກໃຫ້ລູກຄ້າ ຊຶ່ງຈະຕ້ອງດຳເນີນການຂຶ້ນທະບຽນລົດໃໝ່ໃຫ້ສຳເລັດພາຍໃນ 90 ວັນນັບຈາກວັນທີ່ເຊັນສັນຍາກັບບໍລິສັດ. ພ້ອມກັນນັ້ນ ບໍລິສັດກໍ່ຈະມອບບັນດາເອກະສານເຊົ່າສິນເຊື່ອລົດຈັກໃຫ້ລູກຄ້າ ເຊັ່ນ: ສັນຍາເຊົ່າສິນເຊື່ອ, ໜັງສືຄ້ຳປະກັນ ເປັນຕົ້ນ. ຫຼັງຈາກທີ່ລູກຄ້າໄດ້ສຳເລັດການປະຕິບັດສັນຍາເຊົ່າສິນເຊື່ອລົດຈັກຄົບຖ້ວນແລ້ວ ກຳມະສິດລົດຈັກຈະຖືກໂອນຄືນໃຫ້ລູກຄ້າ.

ຖ້າກໍລະນີ ໄລຍະເວລາການອອກທະບຽນລົດໃໝ່ເກີດການຊັກຊ້າ ຫຼື ຫຼາຍກວ່າ 90 ວັນ ເຈົ້າໜ້າທີ່ຜູ້ທີ່ຕິດຕາມວຽກງານການຂຶ້ນທະບຽນລົດ ກໍ່ຈະລາຍງານໄປຍັງຜູ້ຈັດການຝ່າຍສິນເຊື່ອແລະການຕະຫຼາດ ໃຫ້ຮັບຊາບ ເພື່ອຫາວິທີແກ້ໄຂບັນຫາດັ່ງກ່າວ.

2) ຕິດຕາມ ແລະ ຮຽກເກັບໜີ້

ບໍລິສັດຈະມີເຈົ້າໜ້າທີ່ ພະແນກເກັບ ແລະ ບໍລິຫານໜີ້ ຕິດຕາມວຽກງານດ້ານການຊຳລະເງິນ ຫຼື ເກັບເງິນຄ່າງວດຂອງລູກຄ້າ (ລູກໜີ້) ທຸກລາຍຢ່າງໃກ້ຊິດ ຊຶ່ງຈະໄດ້ຕິດຕາມທັງລູກຄ້າ ແລະ ຜູ້ຄ້ຳປະກັນ. ໃນກໍລະນີລົດຈັກທີ່ເປັນຫຼັກຄ້ຳປະກັນຖືກສົ່ງຕໍ່ໃຫ້ບຸກຄົນອື່ນເປັນຜູ້ນຳໃຊ້ລົດພະນັກງານກໍ່ຈຳເປັນຕ້ອງໄດ້ຕິດຕາມຜູ້ໃຊ້ລົດນັ້ນຕື່ມອີກ. ສຳລັບການຊຳລະເງິນຄ່າງວດ ລູກຄ້າແມ່ນສາມາດຊຳລະໄດ້ໃນ 4 ຊ່ອງທາງຄື:

- ລູກຄ້າສາມາດເຂົ້າມາຊຳລະເງິນໄດ້ທີ່ບໍລິສັດໂດຍກົງ
- ລູກຄ້າຕິດຕໍ່ການຊຳລະທີ່ຈຸດບໍລິການຊຳລະເງິນຂອງບໍລິສັດທີ່ຕັ້ງຢູ່ໃນຮ້ານຄ້າຕົວແທນຈຳໜ່າຍລົດຈັກພັນທະມິດ (Pay point)
- ຊຳລະຜ່ານປ່ອງບໍລິການຂອງທະນາຄານ ໂດຍການໂອນເງິນເຂົ້າໄປຊຳລະໃນບັນຊີທີ່ບໍລິສັດໄດ້ກຳນົດໄວ້
- ນັດໝາຍໃຫ້ພະນັກງານທີ່ພົວພັນວຽກງານການຊຳລະເງິນ ຫຼື ເກັບເງິນຄ່າງວດນຳລູກຄ້າຕາມສະຖານທີ່ ທີ່ໄດ້ຕົກລົງກັນລ່ວງໜ້າກັບລູກຄ້າໄວ້ແລ້ວ ຊຶ່ງລູກຄ້າຕ້ອງເສຍຄ່າທຳນຽມເພີ່ມ

3) ການບໍລິຫານໜີ້ ແລະ ຍຶດລົດຈັກ

ບໍລິສັດມີການນຳໃຊ້ລະບົບໂປຣແກຣມຄອມພິວເຕີໃນການບໍລິຫານສິນເຊື່ອ ສະນັ້ນຈຶ່ງເຮັດໃຫ້ບໍລິສັດມີການບໍລິຫານໜີ້ ແລະ ຕິດຕາມຫຼັກຊັບເຊົ່າສິນເຊື່ອຢ່າງມີປະສິດທິພາບ ຊຶ່ງເມື່ອມີການຄ້າງຊຳລະເງິນຄ່າງວດເກີນກວ່າກຳນົດ ລະບົບໂປຣແກຣມຄອມພິວເຕີຈະແຈ້ງເຕືອນໃຫ້ເຈົ້າໜ້າທີ່ຊາບເພື່ອດຳເນີນການຕິດຕາມ ຊຶ່ງບໍລິສັດມີຫຼັກການໃນການດຳເນີນການດັ່ງນີ້:

- ໃນກໍລະນີລູກຄ້າຄ້າງຊຳລະເງິນຄ່າງວດ 3 - 5 ວັນ ບໍລິສັດຈະໃຫ້ເຈົ້າໜ້າທີ່ຕິດຕໍ່ລູກຄ້າຜ່ານທາງໂທລະສັບ ເພື່ອຕິດຕາມ, ແຈ້ງເຕືອນການຊຳລະເງິນຄ່າງວດ ພ້ອມທັງບັນທຶກຂໍ້ມູນການເຈລະຈາ ຫຼື ມີການນັດພົບໃນກໍລະນີຈຳເປັນ.
- ໃນກໍລະນີ ລູກຄ້າຄ້າງຊຳລະເງິນຄ່າງວດເກີນ 30 ວັນ ຫຼື 1 ງວດ ບໍລິສັດຈະສົ່ງໃຫ້ເຈົ້າໜ້າທີ່ຕິດຕາມທັນທີ.
- ໃນກໍລະນີ ລູກຄ້າຄ້າງຊຳລະເງິນຄ່າງວດເກີນ 90 ວັນ ຫຼື 3 ງວດຂຶ້ນໄປ ບໍລິສັດຈະສົ່ງເຈົ້າໜ້າທີ່ຕິດຕາມຍຶດລົດຄືນ, ຊຶ່ງຈະລົງຕິດຕາມເຖິງບ້ານ ຫຼື ສະຖານທີ່ເຮັດວຽກຂອງ ລູກຄ້າ ແລະ ຜູ້ຄ້ຳປະກັນ ພ້ອມກັນນັ້ນ ບໍລິສັດອາດຈະພິຈາລະນາໃນການ

ຍົກເລີກສັນຍາເຊົ່າສິນເຊື່ອເລີຍ ຖ້າເຫັນວ່າລູກຄ້າອາດຈະບໍ່ສາມາດຈ່າຍເງິນຄ່າງວດໄດ້ໃນອານາຄົດ.

- ໃນກໍລະນີ ລູກຄ້າຄ້າງຊຳລະເງິນຄ່າງວດເກີນກວ່າ 3 ງວດຂຶ້ນໄປ ພ້ອມທັງຫຼົບໜີ ຊຶ່ງບໍລິສັດບໍ່ສາມາດຍຶດຫຼັກຊັບຄືນມາໄດ້ ບໍລິສັດຈະດຳເນີນການດ້ານກົດໝາຍກັບລູກຄ້າ ແລະ ຜູ້ຄ້ຳປະກັນຕໍ່ໄປ.

4) ການຂາຍລົດຈັກທີ່ຍຶດມາ

ຫຼັງຈາກທີ່ສາມາດຍຶດລົດຈັກທີ່ເປັນຫຼັກຊັບຄ້ຳປະກັນມາແລ້ວ ບໍລິສັດຈະໃຫ້ເຈົ້າໜ້າທີ່ດຳເນີນການແຈ້ງ ສິດໃນການໄຖ່ຖອນລົດຈັກຄືນ. ຖ້າຫາກວ່າໝົດກຳນົດເວລາໃຊ້ສິດດັ່ງກ່າວຕາມກົດໝາຍ ບໍລິສັດຈະດຳເນີນການຂາຍລົດຈັກສູ່ທ້ອງຕະຫຼາດ ໂດຍຈະດຳເນີນການປະມູນຂາຍໃຫ້ແກ່ພາຍນອກ ຊຶ່ງບໍລິສັດຈະມີເຈົ້າໜ້າທີ່ປະເມີນລາຄາລົດຈັກດັ່ງກ່າວ ເພື່ອເຮັດໃຫ້ລາຄາເໝາະສົມທີ່ສຸດອີງຕາມສະພາບ ແລະ ລາຄາຕະຫຼາດໃນຕອນນັ້ນ.

ໃນກໍລະນີຂາຍລົດຈັກແລ້ວ ຫາກມູນຄ່າລົດຈັກບໍ່ພຽງພໍຕໍ່ການຊຳລະໜີ້ທີ່ຍັງຄ້າງຕາມສັນຍາ ບໍລິສັດຈະດຳເນີນການເຈລະຈາ, ຕົກລົງກັບລູກຄ້າ ແລະ ຜູ້ຄ້ຳປະກັນໃນການຊຳລະເງິນສ່ວນທີ່ເຫຼືອ. ຫາກການເຈລະຈາບໍ່ສາມາດຕົກລົງກັນໄດ້ ບໍລິສັດຈະດຳເນີນການທາງກົດໝາຍຕໍ່ໄປ.

ຖ້າກໍລະນີການຂາຍລົດຈັກຫາກໄດ້ເງິນຫຼາຍກວ່າໜີ້ຄ້າງຊຳລະຕາມສັນຍາແລ້ວ ບໍລິສັດຈະດຳເນີນການສົ່ງເງິນຄືນໃຫ້ລູກຄ້າຕາມຈຳນວນທີ່ເກີນ.

5) ການປິດບັນຊີ ແລະ ການໂອນກຳມະສິດລົດຈັກ

ບໍລິສັດຈະປິດບັນຊີລູກຄ້າໄດ້ 2 ກໍລະນີຄື:

- ກໍລະນີປິດບັນຊີຕາມກຳນົດສັນຍາ: ກໍລະນີດັ່ງກ່າວແມ່ນຈະເກີດຂຶ້ນກໍ່ຕໍ່ເມື່ອລູກຄ້າ (ລູກໜີ້)ໄດ້ຈ່າຍເງິນຄ່າງວດ ແລະ ຄ່າທຳນຽມຕ່າງໆ ລວມໄປເຖິງຄ່າໃຊ້ຈ່າຍອື່ນໆທີ່ກ່ຽວພັນໃຫ້ແກ່ບໍລິສັດຄົບຖ້ວນ ສັນຍາດັ່ງກ່າວກໍ່ຈະສິ້ນສຸດລົງ ພ້ອມທັງສົ່ງເອກະສານທີ່ຕິດພັນກັບສັນຍາໃຫ້ລູກຄ້າທັງໝົດ.
- ກໍລະນີປິດບັນຊີກ່ອນກຳນົດສັນຍາ: ບໍລິສັດອະນຸຍາດໃຫ້ລູກຄ້າຈ່າຍໜີ້ຂອງຕົນໝົດກ່ອນກຳນົດສັນຍາ ຊຶ່ງລູກຄ້າ (ລູກໜີ້)ຈະໄດ້ຮັບນະໂຍບາຍຈາກບໍລິສັດໂດຍໄດ້ຮັບສ່ວນຫຼຸດ 50 ສ່ວນຮ້ອຍ ຈາກດອກເບ້ຍທີ່ຕ້ອງຈ່າຍສ່ວນທີ່ເຫຼືອ, ທັງນີ້ ແມ່ນເພື່ອເປັນການກະຕຸ້ນ ແລະ ສ້າງແຮງຈູງໃຈ ໃຫ້ລູກຄ້າ (ລູກໜີ້)ມີຄວາມກະຕືລືລົ້ນໃນການຊຳລະໜີ້ສິນໃຫ້ໝົດກ່ອນກຳນົດເວລາ, ຊຶ່ງອັດຕາສ່ວນຫຼຸດດັ່ງກ່າວຈະຂຶ້ນກັບນະໂຍບາຍຂອງບໍລິສັດໃນແຕ່ລະໄລຍະ.

## 5. ໂຄງສ້າງທຶນຂອງບໍລິສັດ

ໃນປີ 2021, ບໍລິສັດໄດ້ສຳເລັດການແຕກຮຸ້ນເມື່ອວັນທີ 24 ມີຖຸນາ 2021 ເຊິ່ງມີການປ່ຽນແປງມູນຄ່າຮຸ້ນຈາກ 1.000 ກີບຕໍ່ຮຸ້ນ ມາເປັນ 100 ກີບຕໍ່ຮຸ້ນ ແລະ ຈຳນວນຮຸ້ນທັງໝົດຈາກ 40.000.000 ຮຸ້ນ ມາເປັນ 400.000.000 ຮຸ້ນ ໂດຍມີມູນຄ່າເທົ່າກັບ 40.000.000.000 ກີບ ເຊິ່ງ ໃນຕອນນີ້ແມ່ນຢູ່ໃນຂັ້ນຕອນການດຳເນີນການປ່ຽນແປງມູນຄ່າກຳນົດຂອງຮຸ້ນບໍລິສັດກັບພາກສ່ວນທີ່ ກ່ຽວຂ້ອງ.

### 5.1 ໂຄງສ້າງຜູ້ຖືຮຸ້ນ

ອັດຕາສ່ວນຜູ້ຖືຮຸ້ນຂອງບໍລິສັດກ່ອນ ແລະ ຫຼັງການປ່ຽນແປງມູນຄ່າກຳນົດ

| ຜູ້ຖືຮຸ້ນ | ກ່ອນການປ່ຽນແປງມູນຄ່າກຳນົດ | | ຫຼັງການປ່ຽນແປງມູນຄ່າກຳນົດ | |
|---|---|---|---|---|
| | ຈຳນວນຮຸ້ນ | ອັດຕາສ່ວນຮ້ອຍ | ຈຳນວນຮຸ້ນ | ອັດຕາສ່ວນ ຮ້ອຍ |
| **1. ກຸ່ມຜູ້ຖືຮຸ້ນເດີມ** | **27.760.000** | **69,4%** | **277.600.000** | **69,40%** |
| 1) ບໍລິສັດ ມະຫະທຸນ ໂຮນດິ້ງຈຳກັດ | 27.088.000 | 67,72000% | 270.880.000 | 67,72000% |
| 2) ທ່ານ ນາງ ອິນທະວິໄລ ອຸດົມ | 671.912 | 1,67978% | 6.719.120 | 1,67978% |
| 3) ທ່ານ ນາງ ທະນົງລັກ ອຸດົມ | 8 | 0,00002% | 80 | 0,00002% |
| 4) ທ່ານ ທະນົງສັກ ອຸດົມ | 8 | 0,00002% | 80 | 0,00002% |
| 5) ທ່ານ ສັງຄົມ ຈັນສຸກ | 8 | 0,00002%% | 80 | 0,00002% |
| 6) ທ່ານ ຊາຄຣິດ ນັກສອນ | 8 | 0,00002% | 80 | 0,00002% |
| 7) ທ່ານນາງ ປຣາດຖະໜາ ນັກສອນ | 8 | 0,00002% | 80 | 0,00002% |
| 8) ທ່ານ ນາງ ຈິດຕິມາ ນັກສອນ | 8 | 0,00002% | 80 | 0,00002% |
| 9) ທ່ານ ນາງ ສຸທິດາ ນັກສອນ | 8 | 0,00002% | 80 | 0,00002% |
| 10) ທ່ານ ກຽງໄກ ນິດສະຍັນ | 8 | 0,00002% | 80 | 0,00002% |
| 11) ທ່ານ ມານິບ ຕຣີລິດວິໄລ | 8 | 0,00002% | 80 | 0,00002% |
| 12) ທ່ານ ທອງຖະຫວັນ ທອງແຖມ | 8 | 0,00002% | 80 | 0,00002% |
| 13) ທ່ານ ຊັດພົນໄຊ ປັນຍາທຳປະດິ | 8 | 0,00002% | 80 | 0,00002% |
| **2. ນັກລົງທຶນທົ່ວໄປ** | 12.240.000 | 30,60000% | 122.400.000 | 30,60000% |
| **ລວມ** | 40.000.000 | 100% | 400.000.000 | 100% |

ເມື່ອວັນທີ 4 ທັນວາ 2020 ກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປີ 2020 ໄດ້ມີມະຕິເຫັນດີດ້ວຍ ມະຕິສະເພາະ ດັ່ງນີ້:

1. ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ ເປັນ ສັດສ່ວນສູງສຸດຕາມທີ່ຕະຫຼາດຫຼັກຊັບລາວ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ຫຼື ກົດໝາຍທີ່ກ່ຽວຂ້ອງກຳນົດໄວ້ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນການໃນດ້ານ ເອກະສານຕ່າງໆ ຈົນກວ່າຈະດຳເນີນການແລ້ວສຳເລັດ
2. ປ່ຽນແປງມູນຄ່າກຳນົດ (Par Value) ຈາກ 1.000 ກີບ ເປັນ 100 ກີບ ແລະ ເພີ່ມຈຳນວນຮຸ້ນ ຈາກ 40.000.000 ຮຸ້ນ ເປັນ 400.000.000 ຮຸ້ນ ໂດຍມີທຶນຈົດທະບຽນ 40.000.000.000 ກີບ ເທົ່າເດີມ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນການໃນດ້ານເອກະສານຕ່າງໆ ຈົນກວ່າ ຈະດຳເນີນການແລ້ວສຳເລັດ


### 5.2ນະໂຍບາຍການແບ່ງເງິນປັນຜົນ

ບໍລິສັດມີນະໂຍບາຍໃນການຈ່າຍເງິນປັນຜົນບໍ່ໜຸດ 50 ສ່ວນຮ້ອຍ (50%) ຂອງກຳໄລສຸດທິ ຕາມເອກະສານທາງການເງິນຂອງບໍລິສັດ ພາຍຫຼັງຫັກເຂົ້າຄັງສຳຮອງຕາມກົດໝາຍ. ເຖິງຢ່າງໃດກໍ່ ຕາມ, ການຈ່າຍເງິນປັນຜົນດັ່ງກ່າວຈະຂຶ້ນຢູ່ກັບແຜນການລົງທຶນ, ຄວາມຈຳເປັນ ແລະ ຄວາມເໝາະ ສົມອື່ນໆ ໃນອະນາຄົດ ເມື່ອສະພາບໍລິຫານຂອງບໍລິສັດ (Board of Directors) ມີມະຕິເຫັນດີໃຫ້ ບໍລິສັດຈ່າຍເງິນປັນຜົນປະຈຳປີ ໂດຍຕ້ອງສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນໄດ້ພິຈາລະນາ ແລະ ອະນຸມັດ ເສຍກ່ອນ, ເວັ້ນເສຍແຕ່ວ່າການຈ່າຍເງິນປັນຜົນລະຫວ່າງປີນັ້ນ ແລະ ກອງປະຊຸມຜູ້ຖືຮຸ້ນຍັງໄດ້ ອະນຸມັດໃຫ້ສິດອຳນາດແກ່ສະພາບໍລິຫານຂອງບໍລິສັດ (Board of Directors) ໃຫ້ມີອຳນາດໃນການ ອະນຸມັດຈ່າຍເງິນປັນຜົນລະຫວ່າງປີໄດ້ ໂດຍຕ້ອງລາຍງານໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຊາບ ແລະ ຮັບຮອງໃນກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ

## 6. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ

### 6.1 ໂຄງຮ່າງການຈັດຕັ້ງຂອງບໍລິສັດ

ໂຄງຮ່າງການຈັດຕັ້ງຂອງບໍລິສັດ




### 6.2 ສະພາບໍລິຫານ

6.2.1 ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ

ໃນການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ເມື່ອວັນທີ 29 ພຶດສະພາ 2020 ກອງປະຊຸມໄດ້ມີມະຕິແຕ່ງຕັ້ງກຳມະການທົດແທນກຳມະການທີ່ໝົດວາລະລົງ ໂດຍກຳມະການທີ່ໄດ້ຮັບການແຕ່ງຕັ້ງໃຫມ່ດັ່ງນີ້:

| ลำดับ | รูป ถ่าย | สะพาบໍລิหาม (Board of Directors) | สัมชาด | ตำแหน่ง |
|---|---|---|---|---|
| 1 |  | ท่าม ชาคริด มักสอม | ไท | ปะหาม สะพาบໍລิหาม |
| 2 |  | ท่าม นาๆ อินทะวิไล อุดົม | ลาว | ฮองปะหาม สะพาบໍລิหาม |
| 3 |  | ท่าม มานิบ ตริลิดวิไล | ไท | สะมาชิกสะพาบໍລิหาม/ผู้อำนวยกามใหย่ (Executive Director) |
| 4 |  | ท่าม นาๆ ปธาดถะพา มักสอม | ไท | สะมาชิกสะพาบໍລิหาม |
| 5 |  | ท่าม นาๆ สุทิดา มักสอม | ไท | สะมาชิกสะพาบໍລิหาม |
| 6 |  | ท่าม กองๆไก มิดสะยัม | ไท | สะมาชิกสะพาบໍລิหาม |
| 7 |  | ท่าม อินยู จิละปะพากาม | ไท | สะมาชิกสะพาบໍລิหาม (อิดสะหูะ) |
| 8 |  | ท่าม มันทะพัด ๆามปลั่ง | ไท | สะมาชิกสะพาบໍລิหาม (อิดสะหูะ) |
| 9 |  | ท่าม ทิธะเมด อุดทิพัดพิบูม | ไท | สะมาชิกสะพาบໍລิหาม (อิดสะหูะ) |

6.2.2 กองปะชุมสะพาบໍລิหามในปีที่ผ่ามมา

ผ่ามกามดำเมินงาม ในปี 2021 สะพาบໍລิหาม ได้ปะติบัดวงกงาม และเปิดกองปะชุมทังหมด จำมอม 4 ครั้ง ดังมี้:

- กองปะชุม ครั้งที 1 เมื่อวันที 22 มังกอม 2021
- กองปะชุม ครั้งที 2 เมื่อวันที 10 มิมา 2021

- ກອງປະຊຸມ ຄັ້ງທີ 3 ເມື່ອວັນທີ 21 ພຶດສະພາ 2021
- ກອງປະຊຸມ ຄັ້ງທີ 4 ເມື່ອວັນທີ 13 ສິງຫາ 2021

### 6.3 ຄະນະກຳມະການຂອງສະພາບໍລິຫານ

6.3.1 ຄະນະກຳມະການກວດສອບ

| ລ/ດ | ຄະນະກຳມະການກວດສອບ (Audit Committee) | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ກອງໄກ ນິດສະຍັນ | ໄທ | ປະທານ |
| 2 | ທ່ານ ນັນທະພັດ ງາມປລັ່ງ | ໄທ | ຄະນະກຳມະການ/ ສະມາຊິກອິດສະຫຼະ |
| 3 | ທ່ານ ທິຣະເມດ ອຸດທິພັດພິບູນ | ໄທ | ຄະນະກຳມະການ/ ສະມາຊິກອິດສະຫຼະ |
| 4 | ທ່ານ ວິນຍູ ຈີລະປະພາການ | ໄທ | ຄະນະກຳມະການ/ ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2021 ຄະນະກຳມະການກວດສອບ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 5 ຄັ້ງ ດັ່ງນີ້:

- ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 20 ມັງກອນ 2021
- ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 09 ມີນາ 2021
- ກອງປະຊຸມ ຄັ້ງທີ 3 ເມື່ອວັນທີ 10 ພຶດສະພາ 2021
- ກອງປະຊຸມ ຄັ້ງທີ 4 ເມື່ອວັນທີ 06 ສິງຫາ 2021
- ກອງປະຊຸມ ຄັ້ງທີ 5 ເມື່ອວັນທີ 05 ພະຈິກ 2021

6.3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

| ລ/ດ | ຄະນະກຳມະການຄຸ້ມຄອງຄວາມສ່ຽງ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ຊາຄຣິດ ນັກສອນ | ໄທ | ປະທານ |
| 2 | ທ່ານ ມານົບ ຕຣີລິດວິໄລ | ໄທ | ຄະນະກຳມະການ |
| 3 | ທ່ານ ທິຣະເມດ ອຸດທິພັດພິບູນ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |
| 4 | ທ່ານ ວິນຍູ ຈີລະປະພາການ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2021 ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 2 ຄັ້ງ ດັ່ງນີ້:

- ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 17 ພຶດສະພາ 2021
- ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 10 ສິງຫາ 2021

6.3.3 ຄະນະກຳມະການຄັດເລືອກ

| ລ/ດ | ຄະນະກຳມະການຄັດເລືອກ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ຊາຄຣິດ ນັກສອນ | ໄທ | ປະທານ |
| 2 | ທ່ານ ກຽງໄກ ນິດສະຍັນ | ໄທ | ຄະນະກຳມະການ |
| 3 | ທ່ານ ນັນທະພັດ ງາມປລັ່ງ | ໄທ | ຄະນະກຳມະການ/ ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2021 ຄະນະກຳມະການຄັດເລືອກ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 2 ຄັ້ງ ດັ່ງນີ້:

- ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 04 ຕຸລາ 2021
- ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 17 ທັນວາ 2021

6.3.4 ຄະນະກຳມະການກຳນົດຄ່າຕອບແທນ

| ລ/ດ | ຄະນະກຳມະການກຳນົດຄ່າຕອບແທນ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ຊາຄຣິດ ນັກສອນ | ໄທ | ປະທານ |
| 2 | ທ່ານ ກຽງໄກ ນິດສະຍັນ | ໄທ | ຄະນະກຳມະການ |
| 3 | ທ່ານ ທິຣະເມດ ອຸດທິພັດພິບູນ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2021 ຄະນະກຳມະການກຳນົດຄ່າຕອບແທນ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 2 ຄັ້ງ ດັ່ງນີ້:

- ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 15 ມັງກອນ 2021
- ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 13 ພຶດສະພາ 2021

6.3.5 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

| ລ/ດ | ຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ທິຣະເມດ ອຸດທິພັດພິບູນ | ໄທ | ປະທານ/ສະມາຊິກອິດສະຫຼະ |
| 2 | ທ່ານ ກຽງໄກ ນິດສະຍັນ | ໄທ | ຄະນະກຳມະການ |
| 3 | ທ່ານ ນັນທະພັດ ງາມປລັ່ງ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2021 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 2 ຄັ້ງ ດັ່ງນີ້:

- ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 05 ມີນາ 2021
- ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 03 ສິງຫາ 2021

❖ ລາຍງານການຖືຮຸ້ນຂອງສະມາຊິກສະພາບໍລິຫານຂອງບໍລິສັດ ທັ້ງທາງກົງ ແລະ ທາງອ້ອມມີດັ່ງນີ້:

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ຈຳນວນຮຸ້ນທີ່ຖື | ອັດຕາ |
|---|---|---|---|---|
| 1 | ທ່ານ ຊາຄຣິດ ນັກສອນ | ປະທານສະພາ ບໍລິຫານ | 8 | 0,0002% |
| 2 | ທ່ານນາງ ອິນທະວິໄລ ອຸດົມ | ຮອງປະທານສະພາ ບໍລິຫານ | 732,420 | 1,83105% |
| 3 | ທ່ານ ມານົບ ຕຣີລິດວິໄລ | ສະມາຊິກສະພາ ບໍລິຫານ | 296,408 | 0,74102% |
| 4 | ທ່ານນາງ ປຣາດຖະໜາ ນັກສອນ | ສະມາຊິກສະພາ ບໍລິຫານ | 154,908 | 0,38727% |
| 5 | ທ່ານນາງ ສຸທິດາ ນັກສອນ | ສະມາຊິກສະພາ ບໍລິຫານ | 179,208 | 0,44802% |
| 6 | ທ່ານ ກຽງໄກ ນິດສະຍັນ | ສະມາຊິກສະພາ ບໍລິຫານ | 450,008 | 1,12502% |
| 7 | ທ່ານ ນັນທະພັດ ງາມປລັ່ງ | ສະມາຊິກສະພາ ບໍລິຫານ (ອິດສະຫຼະ) | 0 | 0,0% |
| 8 | ທ່ານ ທິຣະເມດ ອຸດທິພັດພິບູນ | ສະມາຊິກສະພາ ບໍລິຫານ (ອິດສະຫຼະ) | 62,500 | 0,15625% |
| 9 | ທ່ານ ວິນຍູ ຈີລະປະພາການ | ສະມາຊິກສະພາ ບໍລິຫານ (ອິດສະຫຼະ) | 0 | 0,0% |

ການຖືຮຸ້ນທາງອ້ອມຕາມສາຍພົວພັນ ພີ່ນ້ອງ, ເມຍ ຫຼື ລູກ ຂອງສະມາຊິກສະພາບໍລິຫານ ປະກອບມີ:

1. ທ່ານນາງ ອິນທະວິໄລ ອຸດົມ ຮອງປະທານສະພາບໍລິຫານ ການຖືຮຸ້ນທາງອ້ອມຕາມສາຍພົວພັນ ພີ່ນ້ອງ, ເມຍ ຫຼື ລູກ ມີ 96,016 ຮຸ້ນ
2. ທ່ານ ມານົບ ຕຣີລິດວິໄລ ສະມາຊິກສະພາບໍລິຫານ ການຖືຮຸ້ນທາງອ້ອມຕາມສາຍພົວພັນ ພີ່ນ້ອງ, ເມຍ ຫຼື ລູກ ມີ 156,000 ຮຸ້ນ
3. ທ່ານ ກຽງໄກ ນິດສະຍັນ ສະມາຊິກສະພາບໍລິຫານ ການຖືຮຸ້ນທາງອ້ອມຕາມສາຍພົວພັນ ພີ່ນ້ອງ, ເມຍ ຫຼື ລູກ ມີ 126,200 ຮຸ້ນ

## 6.4 ຄ່າຕອບແທນຂອງສະມາຊິກສະພາບໍລິຫານ

1. ໃຫ້ໃຫ້ຄ່າຕອບແທນແກ່ຜູ້ອຳນວຍການທັງໝົດ ເພື່ອກຳນົດທິດທາງ ແລະ ນະໂຍບາຍຂອງບໍລິສັດ ແລະ ຕິດຕາມການກວດກາການປະຕິບັດງານຂອງບໍລິສັດ ດັ່ງຕໍ່ໄປນີ້
    a. ຜູ້ອຳນວຍການທີ່ເຮັດໜ້າທີ່ເປັນປະທານສະພາບໍລິຫານອັດຕາ 11.250.000 ກີບຕໍ່ເດືອນຕໍ່ທ່ານ
    b. ຜູ້ອຳນວຍການທີ່ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານອັດຕາ 6.250.000 ກີບຕໍ່ເດືອນຕໍ່ທ່ານ
2. ຄ່າເບ້ຍປະຊຸມ ເພື່ອເປັນຄ່າຕອບແທນການເດີນທາງເຂົ້າມາຮ່ວມປະຊຸມແຕ່ລະຄັ້ງ
    a. ສຳລັບການປະຊຸມສະພາບໍລິຫານເປັນດັ່ງນີ້:
        I. ຜູ້ເຮັດໜ້າທີ່ເປັນປະທານສະພາບໍລິຫານ ອັດຕາ 2.500.000 ກີບ ຕໍ່ຄັ້ງຕໍ່ທ່ານ
        II. ຜູ້ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານ ອັດຕາ 1.500.000 ກີບຕໍ່ຄັ້ງຕໍ່ທ່ານ
    b. ສຳລັບການປະຊຸມຄະນະກຳມະການຊຸດຍ່ອຍທັງ 5 ຊຸດ
        I. ຜູ້ເຮັດໜ້າທີ່ເປັນປະທານສະພາບໍລິຫານ ອັດຕາ 1.500.000 ກີບຕໍ່ ຄັ້ງຕໍ່ທ່ານ
        II. ຜູ້ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານອັດຕາ 1.000.000 ກີບຕໍ່ ຄັ້ງຕໍ່ທ່ານ
3. ຄ່າເບ້ຍປະຈຳປີ ສຳລັບສະມາຊິກສະພາບໍລິຫານທຸກທ່ານ ກຳນົດນະໂຍບາຍຂອງ ບໍລິສັດ ແລະ ຕິດຕາມການຄຸ້ມຄອງດຳເນີນງານຂອງບໍລິສັດ, ສະນັ້ນເງິນໂບນັດ ປະຈຳປີຂອງສະພາບໍລິຫານຄວນກຳນົດໃຫ້ກ່ຽວຂ້ອງກັບການຄາດຄະເນກຳໄລ ສຸດທິ ປະຈຳປີ 2022 ເຊິ່ງເທົ່າກັບ 3 ສ່ວນຮ້ອຍ ຈາກກຳໄລສຸດທິຫຼັງການຈ່າຍ ພາສີ ເຊິ່ງພິຈາລະນາເພີ່ມຂຶ້ນ ຫຼື ຫຼຸດລົງຕາມຜົນງານຕົວຈິງ

ເຊິ່ງໃນປີທີ່ຜ່ານມາບໍລິສັດໄດ້ຈ່າຍຄ່າຕອບແທນຂອງສະມາຊິກສະພາ ບໍລິຫານລວມທັງໝົດຈຳນວນ 805.000.000 ກີບ

ຄ່າຕອບແທນທີ່ໄດ້ກ່າວມາຂ້າງເທິງນີ້ບໍ່ໄດ້ລວມເອົາເງິນເດືອນ, ເງິນບຳນານ ແລະ ຜົນປະໂຫຍດອື່ນໆຂອງຜູ້ອຳນວຍການບໍລິຫານ, ເຊິ່ງປະຕິບັດໜ້າທີ່ໃນການ ເຮັດວຽກປະຈຳວັນ

## 6.5 ນະໂຍບາຍລາຍການທີ່ກ່ຽວພັນ

ບໍລິສັດໄດ້ຈັດເຮັດລາຍງານກ່ຽວກັບລາຍການທີ່ກ່ຽວພັນກັບການຖືຮຸ້ນຂອງ ສະມາຊິກສະພາບໍລິຫານທີ່ໄດ້ມີການຖືຮຸ້ນໃນວິສາຫະກິດອື່ນໆທີ່ກ່ຽວຂ້ອງກັບບໍລິສັດຢູ່ໃນງົບການເງິນປະຈຳປີໂດຍມີລາຍລະອຽດດັ່ງນີ້:

ລາຍການກັບພາກສ່ວນທີ່ກ່ຽວຂ້ອງ

| ຊື່ບັນຊີ/ຊື່ບໍລິສັດ | ສາຍພົວພັນ | 2021<br>ກີບ | 2020<br>ກີບ |
|---|---|---|---|
| **ໜີ້ຕ້ອງສົ່ງໃນທຸລະກິດ** | | | |
| ເຈບີ ຮອນດ້າ | (1) | 208.660.000 | 99.375.000 |
| ເຈບີ ຮອນດ້າ ໂນນສະຫວ່າງ | (1) | 104.546.000 | 79.604.000 |
| ເຈບີ ຮອນດ້າ ທ່າງ່ອນ | (1) | - | 11.096.000 |
| | | **313.206.000** | **190.075.000** |

| ຊື່ບັນຊີ/ຊື່ບໍລິສັດ | ສາຍພົວພັນ | 2021<br>ກີບ | 2020<br>ກີບ |
|---|---|---|---|
| **ໜີ້ຕ້ອງສົ່ງອື່ນໆ** | | | |
| ເຈບີ ຮອນດ້າ | (1) | 21.250.000 | 13.020.000 |
| ເຈບີ ຮອນດ້າ ໂນນສະຫວ່າງ | (1) | 17.500.000 | 9.410.000 |
| ເຈບີ ຮອນດ້າ ທ່າງ່ອນ | (1) | - | 5.706.000 |
| | | **38.750.000** | **28.136.000** |
| ລາຍຈ່າຍຄ້ຳປະກັນ | | | |
| ບໍລິສັດ ມະຫາທຶນ ໂຮນດິ້ງ ຈຳກັດ | ຜູ້ຖືຮຸ້ນ | - | 367.549.304 |
| | | | **367.549.304** |

| ຊື່ບັນຊີ/ຊື່ບໍລິສັດ | ສາຍພົວພັນ | 2021<br>ກີບ | 2020<br>ກີບ |
|---|---|---|---|

**ຊື້ຊັບສິນເພື່ອການເຊົ່າ**

| | | | |
|---|---|---|---|
| ເຈບີ ຮອນດ້າ | (1) | 3.006.647.000 | 3.357.246.000 |
| ເຈບີ ຮອນດ້າ ໂນນສະຫວ່າງ | (1) | 2.685.163.000 | 2.168.491.000 |
| ເຈບີ ຮອນດ້າ ທ່າງ່ອນ | (1) | 332.538.000 | 800.688.000 |
| | | **6.024.348.000** | **6.326.425.000** |

**ລາຍຈ່າຍນາຍໜ້າ**

| | | | |
|---|---|---|---|
| ເຈບີ ຮອນດ້າ | (1) | 164.250.000 | 207.250.000 |
| ເຈບີ ຮອນດ້າ ໂນນສະຫວ່າງ | (1) | 148.750.000 | 136.950.000 |
| ເຈບີ ຮອນດ້າ ທ່າງ່ອນ | (1) | 18.750.000 | 53.400.000 |
| | | **331.750.000** | **397.600.000** |

**ລາຍຈ່າຍອື່ນໆ**

| | | | |
|---|---|---|---|
| ເຈບີ ຮອນດ້າ | (1) | 58.198.000 | 26.832.000 |
| ເຈບີ ຮອນດ້າ ໂນນສະຫວ່າງ | (1) | 53.830.000 | 14.861.500 |
| ເຈບີ ຮອນດ້າ ທ່າງ່ອນ | (1) | 7.020.000 | 19.072.100 |
| | | **119.048.000** | **60.765.600** |

ທຸລະກຳສຳລັບປີປະກອບດ້ວຍດັ່ງຕໍ່ໄປນີ້.

| | **ສາຍພົວພັນ** | 2021<br>**ກີບ** | 2020<br>**ກີບ** |
|---|---|---|---|
| **ລາຍຈ່າຍດອກເບ້ຍ** | | | |
| ທ່ານ ນາງ ອິນທະວີໄລ ອຸດົມ | ຜູ້ຖືຮຸ້ນ ແລະ ຮອງ ປະທານ ສະພາ ບໍລິຫານ | - | 122.228.021 |
| ບໍລິສັດ ມະຫາທຶນ ໂຮນດິ້ງ ຈຳກັດ | ຜູ້ຖືຮຸ້ນ | - | 723.288.207 |
| | | | **845.516.228** |
| **ລາຍຈ່າຍຄ້ຳປະກັນ** | | | |
| ບໍລິສັດ ມະຫາທຶນ ໂຮນດິ້ງ ຈຳກັດ | ຜູ້ຖືຮຸ້ນ | 1.793.954.174 | 367.549.304 |
| | | **1.793.954.174** | **367.549.304** |

(1) ຜູ້ອຳນວຍການບໍລິສັດແມ່ນຜູ້ຖືຮຸ້ນຂອງມະຫາທຶນ.

ຄ່າຕອບແທນຂອງຜູ້ບໍລິຫານ ສຳລັບປີສິ້ນສຸດວັນທີ 31 ທັນວາ, ປະກອບມີດັ່ງນີ້:

| ຊື່ບັນຊີ/ຊື່ບໍລິສັດ | 2021<br>ກີບ | 2020<br>ກີບ |
|---|---|---|
| ເງິນປະໂຫຍດໄລຍະສັ້ນ | 805.000.000 | 829.630.856 |

## 7. ຜົນການດຳເນີນທຸລະກິດ ແລະ ຜົນການດຳເນີນງານ ປະຈຳປີ 2021

### 7.1 ລາຍຮັບ

ໃນປີ 2020 ແລະ ປີ2021, ບໍລິສັດ ໄດ້ມີລາຍຮັບລວມທັງໝົດ ຈຳນວນ 25.589,8 ລ້ານກີບ ແລະ 27.451,2 ລ້ານກີບ ຕາມລຳດັບ ເພີ່ມຂຶ້ນ 7,3 ສ່ວນຮ້ອຍ

| ລາຍຮັບ | 2020 | | 2021 | | Changed | |
|---|---|---|---|---|---|---|
| | ກີບ | % | ກີບ | % | ກີບ | % |
| ດອກເບ້ຍ | 24.401,2 | 95,4 | 26.137,5 | 95,2 | +1.736,3 | +7,1 |
| ລາຍຮັບ ອື່ນ | 1.188,6 | 4,6 | 1.313,7 | 4,8 | +125,1 | +10,5 |
| **ລວມ ລາຍຮັບ** | **25.589,8** | **100,0** | **27.451,2** | **100,0** | **+1.861,4** | **+7,3** |

ໃນຊ່ວງປີ 2020 ຫາ 2021, ບໍລິສັດມີລາຍຮັບເພີ່ມຂຶ້ນຈາກຍອດລູກໜີ້ເຊົ່າສິນເຊື່ອຄົງເຫຼືອທີ່ມີຢູ່ຂອງບໍລິສັດ ເຊິ່ງບໍລິສັດໄດ້ມີການວາງຍຸດທະສາດໃນການສົ່ງເສີມດ້ານການຕະຫຼາດເຊັ່ນ: ເພີ່ມພະນັກງານການຕະຫຼາດໃນການເຈາະກຸ່ມລູກຄ້າ ແລະ ເຂົ້າເຖິງລູກຄ້າ ພ້ອມທັງຊອກຮ້ານຄ້າຕົວແທນຈຳໜ່າຍມາເປັນພັນທະມິດເພີ່ມຂຶ້ນ ເປັນຕົ້ນ. ນອກຈາກນີ້, ບໍລິສັດຍັງໄດ້ຮັບຄວາມເຊື່ອຖືຈາກຕົວແທນຈຳໜ່າຍລົດຈັກໃນ ສປປ ລາວ ໂດຍໄດ້ຮັບການແນະນຳຈາກຕົວແທນຈຳໜ່າຍ ສະເໜີເປັນທາງເລືອກໜຶ່ງໃຫ້ແກ່ບໍລິສັດ ໃນການເຂົ້າໄປໃຫ້ບໍລິການນັບມື້ນັບຫຼາຍຂຶ້ນ ໂດຍຈະເຮັດໃຫ້ບໍລິສັດສາມາດເພີ່ມລາຍຮັບຈາກການໃຫ້ເຊົ່າສິນເຊື່ອເພີ່ມຂຶ້ນເລື້ອຍໆ.

### 7.2 ລາຍຈ່າຍ

ໃນປີ 2020 ແລະ 2021, ບໍລິສັດໄດ້ມີລາຍຈ່າຍລວມທັງໝົດລວມທັງຄ່າໃຊ້ຈ່າຍທາງດ້ານການເງິນ ຈຳນວນ 16.720,7 ລ້ານກີບ ແລະ 18.560,1 ລ້ານກີບ ຕາມລຳດັບ. ໃນນີ້ ລາຍຈ່າຍລວມເພີ່ມຂຶ້ນຄຽງຄູ່ກັບລາຍຮັບລວມທີ່ເພີ່ມຂຶ້ນ ເຖິງຢ່າງໃດກໍ່ຕາມ ເມື່ອພິຈາລະນາຈາກອັດຕາ

ສ່ວນລາຍຈ່າຍລວມຕໍ່ລາຍຮັບລວມ ສຳລັບປີ 2020 ແລະ ປີ 2021 ເທົ່າກັບ 65,3 ສ່ວນຮ້ອຍ ແລະ 67,6 ສ່ວນຮ້ອຍ ຕາມລຳດັບ. ຄ່າໃຊ້ຈ່າຍຫຼັກຂອງບໍລິສັດ ແມ່ນ ລາຍຈ່າຍໃນການບໍລິຫານ ມີຈຳນວນ 12.618,3 ລ້ານກີບ ແລະ 13.644,2 ລ້ານກີບ ຕາມລຳດັບ ຫຼື 75,5 ສ່ວນຮ້ອຍ ແລະ 73,5 ສ່ວນຮ້ອຍ ປຽບທຽບກັບລາຍຈ່າຍລວມທັງໝົດ

ຕາຕະລາງ: ລາຍຈ່າຍ

| ລາຍຈ່າຍ | 31 Dec 2020 | | 31 Dec 2021 | | Changed | |
|---|---|---|---|---|---|---|
| | ລ້ານກີບ | % | ລ້ານກີບ | % | ລ້ານກີບ | % |
| ລາຍຈ່າຍໃນການບໍລິຫານ | 12.618,3 | 75,5 | 13.644,2 | 73,5 | +1.025,9 | +8,1 |
| ໜີ້ສົງໃສຈະສູນ | 1.367,3 | 8,2 | 1.334,5 | 7,2 | -32,8 | -2,4 |
| ຂາດທຶນຈາກອັດຕາແລກປ່ຽນ | 537,6 | 3,2 | 1.611,8 | 8,7 | +1.074,2 | +199,8 |
| ລາຍຈ່າຍການເງິນ | 2.197,5 | 13,1 | 1.969,6 | 10,6 | -227,9 | -10,4 |
| **ລວມ ລາຍຈ່າຍ** | **16.720,7** | **100,0** | **18.560,1** | **100,0** | **+1.839,4** | **+11,0** |

ໃນປີ 2021, ບໍລິສັດມີໂຄງສ້າງລາຍຈ່າຍລວມທີ່ປະກອບດ້ວຍ: ລາຍຈ່າຍບໍລິຫານ ເທົ່າກັບ 13.644,2 ລ້ານກີບ ຊຶ່ງເທົ່າກັບ 73,5 ສ່ວນຮ້ອຍ, ໜີ້ສົງໃສຈະສູນ ເທົ່າກັບ 1.334,5 ລ້ານກີບ ຫຼື ເທົ່າກັບ 7,2 ສ່ວນຮ້ອຍ, ຂາດທຶນຈາກອັດຕາແລກປ່ຽນ ເທົ່າກັບ 1.611,8 ລ້ານກີບ ເທົ່າກັບ 8,7 ສ່ວນຮ້ອຍ ແລະ ລາຍຈ່າຍການເງິນ ເທົ່າກັບ 1.969,6 ລ້ານກີບ ເທົ່າກັບ 10,6 ສ່ວນຮ້ອຍ.

ທັ້ງນີ້ໃນປີ 2021 ບໍລິສັດມີການຂາດທຶນຈາກອັດຕາແລກປ່ຽນເພີ່ມຂຶ້ນ 1.074,2 ລ້ານກີບ ຫຼື ເພີ່ມຂຶ້ນ 199,8 ສ່ວນຮ້ອຍ ເນື່ອງຈາກບໍລິສັດມີເງິນກູ້ເປັນເງິນໂດລາສະຫະລັດ ເຊິ່ງມີການຕັ້ງຄ່າສຳຮອງການຂາດທຶນຈາກອັດຕາແລກປ່ຽນໄວ້ຕາມອັດຕາແລກປ່ຽນເມື່ອວັນທີ 31 ທັນວາ 2021

ລາຍຈ່າຍບໍລິຫານປະກອບດ້ວຍ: ລາຍຈ່າຍພະນັກງານ, ຄ່າຕອບແທນຂອງຜູ້ບໍລິຫານ, ລາຍຈ່າຍສາທາລະນຸປະໂພກ, ລາຍຈ່າຍການຕະຫຼາດ, ຂາດທຶນສຸດທິຈາກການຂາຍຊັບສິນລໍຖ້າຂາຍ, ຄ່າຕອບແທນຜູ່ຊ່ຽວຊານ, ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ ແລະ ລາຍຈ່າຍອື່ນໆ. ໃນປີ 2021, ລາຍຈ່າຍລວມ ເພີ່ມຂຶ້ນ 11,0 ສ່ວຍຮ້ອຍ ໃນຂະນະທີ່ລາຍຮັບເພີ່ມຂຶ້ນ 7,3 ສ່ວນຮ້ອຍ ເຊິ່ງອັດຕາການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍມາຈາກການເພີ່ມຂຶ້ນຂອງຂາດທຶນຈາກອັດຕາແລກປ່ຽນ

ໃນປີ 2020 ແລະ ປີ 2021, ບໍລິສັດມີ ໜີ້ສິງໃສຈະສູນ ແລະ ລາຍຈ່າຍໜີ້ສູນ ເທົ່າກັບ 1.367,3 ລ້ານກີບ ແລະ 1.334,5 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 8,2 ສ່ວນຮ້ອຍ ແລະ 7,2 ສ່ວນຮ້ອຍ ເມື່ອທຽບລາຍຈ່າຍລວມຕາມລຳດັບ.

ຕາຕະລາງ: ໜີ້ສິງໃສຈະເສຍ ແລະ ລາຍຈ່າຍໜີ້ສູນ

| ລາຍລະອຽດ | ຫົວໜ່ວຍ | 31 ທັນວາ 2020 | 31 ທັນວາ 2021 | ປ່ຽນແປງ |
|---|---|---|---|---|
| ໜີ້ສິງໃສຈະເສຍ ແລະ ລາຍຈ່າຍໜີ້ສູນ | ລ້ານກີບ | 1.367,3 | 1.334,5 | -32,8 |
| ໜີ້ສິງໃສຈະເສຍ ແລະ ລາຍຈ່າຍໜີ້ສູນ ຕໍ່ລາຍຮັບລວມ | % | 5,3 | 4,9 | -0,4 |

ອັດຕາສ່ວນຂອງ ໜີ້ສິງໃສຈະສູນ ແລະ ລາຍຈ່າຍໜີ້ສູນຕໍ່ລາຍໄດ້ລວມ ໃນປີ 2020 ແລະ ປີ 2021 ເຫັນວ່າຢູ່ໃນລະດັບ 5,3 ສ່ວນຮ້ອຍ ແລະ 4,9 ສ່ວນຮ້ອຍ ຕາມລຳດັບ. ໂດຍລວມແລ້ວ ໃນການດຳເນີນທຸລະກິດທີ່ຜ່ານມາບໍລິສັດສາມາດຄວບຄຸມອັດຕາສ່ວນ ໜີ້ສິງໃສຈະສູນ ແລະ ລາຍຈ່າຍໜີ້ສູນ ຢູ່ໃນລະດັບທີ່ຖືວ່າມີປະສິດທິພາບ

### 7.3 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ

ໃນປີ 2020 ແລະ ປີ 2021 ບໍລິສັດມີກຳໄລສຸດທິ ເທົ່າກັບ 7.744,8 ລ້ານກີບ ແລະ 7.591,6 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 30,3 ສ່ວນຮ້ອຍ ແລະ 27,7 ສ່ວນຮ້ອຍ ຕາມລຳດັບ ເມື່ອທຽບໃສ່ລາຍຮັບລວມ ແລະ ຜົນກຳໄລສຸດທິກ່ອນຫັກພາສີນິຕິບຸກຄົນ ຂອງບໍລິສັດເພີ່ມຂຶ້ນຈາກ 8.869,1 ລ້ານກີບ ມາຢູ່ທີ່ 8.891,0 ລ້ານກີບ

## 8. ຖານະການເງິນຂອງບໍລິສັດ

### 8.1 ຊັບສິນ

ໃນປີ 2020 ແລະ ປີ 2021 ບໍລິສັດມີຊັບສິນທັງໝົດ ເທົ່າກັບ 88.739,4 ລ້ານກີບ ແລະ 96.930,0 ລ້ານກີບ ຕາມລຳດັບ ໃນນັ້ນລາຍການຊັບສິນຫຼັກແມ່ນ ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບ ຈາກເງິນກູ້ຍ່ອມຊຳລະຂອງບໍລິສັດ ຊຶ່ງເທົ່າກັບ 72.715,5 ລ້ານກີບ ແລະ 79.787,3 ລ້ານກີບ ຕາມລຳດັບ ເພີ່ມຂຶ້ນ 7.071,8 ລ້ານກີບ ຫຼື ເທົ່າກັບ 81,9 ສ່ວນຮ້ອຍ ແລະ 82,3 ສ່ວນຮ້ອຍ ຕໍ່ຊັບສິນລວມຕາມລຳດັບ

ຕາຕະລາງ: ຊັບສິນທັງໝົດ

| ໃບສະແດງຖານະທາງການເງິນ | 31 ທັນວາ 2020 | | 31 ທັນວາ 2021 | |
|---|---|---|---|---|
| | ລ້ານກີບ | % | ລ້ານກີບ | % |
| **ຊັບສິນໝຸນວຽນ** | | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 12.404,3 | 14,0 | 13.057,2 | 13,5 |
| ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ເງິນກູ້ຜ່ອນຊຳລະພາຍໃນໜຶ່ງປີ | 47.412,9 | 53,4 | 47.696,1 | 49,2 |
| ຊັບສິນລໍຖ້າການຂາຍ | 187,6 | 0,2 | 262,8 | 0,3 |
| ຊັບສິນໝຸນວຽນອື່ນ | 334,6 | 0,4 | 503,1 | 0,5 |
| **ລວມ ຊັບສິນໝຸນວຽນ** | **60.399,4** | **68,0** | **61.519,2** | **63,5** |
| **ຊັບສິນ ບໍ່ໝຸນວຽນ** | | | | |
| ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ | 2.000,0 | 2,2 | 2.000,0 | 2,1 |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ | 25.302,6 | 28,5 | 32.091,2 | 33,1 |
| ສ່ວນປັບປຸງອາຄານ ແລະ ອຸປະກອນ | 1.037,4 | 1,2 | 939,4 | 1,0 |
| ຊັບສິນທີ່ບໍ່ມີຕົວຕົນ | 60,0 | 0,1 | 205,8 | 0,2 |
| ຊັບສົມບັດຄົງທີ່ບໍ່ມີຕົວຕົນ | - | 0,0 | 174,5 | 0,2 |
| **ລວມ ຊັບສິນບໍ່ໝຸນວຽນ** | **28.400,0** | **32,0** | **35.410,8** | **36,5** |
| **ລວມຊັບສິນ** | **88.739,4** | **100,0** | **96.930,0** | **100,0** |

### 8.1.1 ຊັບສິນໝຸນວຽນ

ໃນປີ 2020 ແລະ ປີ 2021 ບໍລິສັດ ມີຊັບສິນໝຸນວຽນ ເທົ່າກັບ 60.399,4 ລ້ານກີບ 61.519,2 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 68,0 ສ່ວນຮ້ອຍ ແລະ 63,5 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ ໂດຍຊັບສິນໝຸນວຽນຫຼັກໄດ້ແກ່ ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ເງິນກູ້ຜ່ອນຊຳລະພາຍໃນໜຶ່ງປີ ເທົ່າກັບ 47.412,9 ລ້ານກີບ ແລະ 47.696,1 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 53,4 ສ່ວນຮ້ອຍ ແລະ 49,2 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ.

ນອກນັ້ນ ຍັງມີລາຍການຊັບສິນໝຸນວຽນປະກອບດ້ວຍ ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ເທົ່າກັບ 12.404,3 ລ້ານກີບ ແລະ 13.057,2 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 14,0 ສ່ວນຮ້ອຍ ແລະ 13,5 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ. ຊັບສິນລໍຖ້າການຂາຍ ເທົ່າກັບ 187,6 ລ້ານ

ກີບ ແລະ 262,8 ລ້ານກີບ ຫຼື ເທົ່າກັບ 0,2 ສ່ວນຮ້ອຍ ແລະ 0,3 ສ່ວນຮ້ອຍ ຂອງຊັບສິນລວມ. ຊັບສິນໝຸນວຽນອື່ນໆ ທີ່ເພີ່ມຂຶ້ນປະກອບດ້ວຍ ຄ່າໃຊ້ຈ່າຍ ຈ່າຍລ່ວງໜ້າ, ໜີ້ຕ້ອງຮັບຈາກລາຍການທີ່ກ່ຽວພັນ ແລະ ພາກສ່ວນອື່ນ ເທົ່າກັບ 334,6 ລ້ານກີບ 503,1 ລ້ານກີບ ຫຼື ເທົ່າກັບ 0,4 ສ່ວນຮ້ອຍ ແລະ 0,5 ສ່ວນຮ້ອຍ ຂອງຊັບສິນລວມ.

### 8.1.2 ຊັບສິນບໍ່ໝຸນວຽນ

ໃນປີ 2020 ແລະ ປີ 2021 ບໍລິສັດມີຊັບສິນບໍ່ໝຸນວຽນເທົ່າກັບ 28.400,0 ລ້ານກີບ ແລະ 35.410,8 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 32,0 ສ່ວນຮ້ອຍ ແລະ 36,5 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ ຊຶ່ງສາມາດສະແດງໃຫ້ເຫັນວ່າ ຊັບສິນບໍ່ໝຸນວຽນມີການເພີ່ມຂຶ້ນ ໂດຍຊັບສິນບໍ່ໝຸນວຽນຫຼັກທີ່ເພີ່ມຂຶ້ນໄດ້ແກ່ ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ ເທົ່າກັບ 25.302,6 ລ້ານກີບ ແລະ 32.091,2 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 28,5 ສ່ວນຮ້ອຍ ແລະ 33,1 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ ຍ້ອນບໍລິສັດມີໜີ້ຕ້ອງຮັບຈາກຄ່າງວດເກີນໜຶ່ງປີໃນການໃຫ້ເຊົ່າສິນເຊື່ອໃຫ້ລູກຄ້າ.

ນອກນັ້ນຍັງມີລາຍການຊັບສິນໝຸນວຽນຍັງປະກອບດ້ວຍ ເງິນຝາກທີ່ທະນາຄານແຫ່ງ ສປປ. ລາວ ເທົ່າກັບ 2.000,0 ລ້ານກີບ ແລະ 2.000,0 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 2,2 ສ່ວນຮ້ອຍ ແລະ 2,1 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ. ສ່ວນປັບປຸງອາຄານ ແລະ ອຸປະກອນ ເທົ່າກັບ 1.037,4 ລ້ານກີບ ແລະ 939,4 ຫຼື ເທົ່າກັບ 1,2 ສ່ວນຮ້ອຍ ແລະ 1,0 ສ່ວນຮ້ອຍ ຂອງຊັບສິນລວມ ຕາມລຳດັບ.

## 8.2 ໜີ້ສິນ

ໃນປີ 2020 ແລະ ປີ 2021, ບໍລິສັດມີໜີ້ສິນທັງໝົດ ເທົ່າກັບ 17.979,3 ລ້ານກີບ ແລະ 24.778,3 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 20,3 ສ່ວນຮ້ອຍ ແລະ 25,6 ສ່ວນຮ້ອຍ ຂອງຊັບສິນລວມ. ໜີ້ສິນທີ່ເພີ່ມຂຶ້ນໃນປີ 2021 ນັ້ນ ສ່ວນໜຶ່ງເພີ່ມຂຶ້ນຈາກການທີ່ບໍລິສັດໄດ້ມີການກູ້ຢືມຈາກທະນາຄານ ຫຼື ສະຖາບັນການເງິນເພີ່ມເຕີມ ຈຳນວນ 5.958 ລ້ານກີບ ເຊິ່ງທຽບກັບການເພີ່ມຂຶ້ນຂອງ ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບ ຈາກເງິນກູ້ຜ່ອນຊຳລະຂອງບໍລິສັດ

ຕາຕະລາງ: ໜີ້ສິນທັງໝົດ

| ໃບສະແດງຖານະທາງການເງິນ | 31 ທັນວາ 2020 | | 31 ທັນວາ 2021 | |
|---|---|---|---|---|
| | ລ້ານກີບ | % | ລ້ານກີບ | % |
| **ໜີ້ສິນ** | | | | |
| **ໜີ້ສິນໝຸນວຽນ** | | | | |
| ໜີ້ຕ້ອງສົ່ງໃນທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ | 4.074,9 | 22,7 | 4.580,8 | 18,5 |
| ໜີ້ສິນຂອງສັນຍາເຊົ່າທາງການເງິນພາຍໃນໜຶ່ງປີ | 78,3 | 0,4 | - | 0,0 |
| ໜີ້ຕ້ອງສົ່ງອາກອນລາຍຮັບ | 1.722,5 | 9,6 | 2.041,9 | 8,2 |
| ເງິນປັນຜົນຄ້າງຈ່າຍ | 26,8 | 0,1 | 44,0 | 0,2 |
| **ລວມໜີ້ສິນໝຸນວຽນ** | **5.902,5** | **32,8** | **6.666,7** | **26,9** |
| **ໜີ້ສິນບໍ່ໝຸນວຽນ** | | | | |
| ໜີ້ສິນພາຍໃຕ້ສັນຍາເຊົ່າສິນເຊື່ອ | 11.936,4 | 66,4 | 17.894,4 | 72,2 |
| ໜີ້ສິນໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ | - | 0,0 | - | 0,0 |
| ໜີ້ສິນບໍ່ໝຸນວຽນອື່ນໆ | 140,4 | 0,8 | 217,6 | 0,9 |
| **ລວມໜີ້ສິນບໍ່ໝຸນວຽນ** | **12.076,8** | **67,2** | **18.111,7** | **73,1** |
| **ລວມໜີ້ສິນ** | **17.979,3** | **100,0** | **24.778,3** | **100,0** |

### 8.2.1 ໜີ້ສິນໝຸນວຽນ

ໃນປີ 2020 ແລະ ປີ 2021, ບໍລິສັດໄດ້ມີໜີ້ສິນໝຸນວຽນ ເທົ່າກັບ 5.902,5 ລ້ານກີບ ແລະ 6.666,7 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 32,8 ສ່ວນຮ້ອຍ ແລະ 26,9 ສ່ວນຮ້ອຍ ຂອງໜີ້ສິນລວມທັງໝົດຕາມລຳດັບ

ນອກຈາກນັ້ນ ຍັງມີລາຍການໜີ້ສິນໝຸນວຽນປະກອບດ້ວຍ ໜີ້ຕ້ອງສົ່ງໃນທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ ເທົ່າກັບ 4.074,9 ລ້ານກີບ ແລະ 4.580,8 ລ້ານກີບ ຕາມລຳດັບ ຫຼື 22,7 ສ່ວນຮ້ອຍ ແລະ 18,5 ສ່ວນຮ້ອຍຕາມລຳດັບ.

### 8.2.2 ໜີ້ສິນບໍ່ໝຸນວຽນ

ໃນປີ 2020 ແລະ ປີ 2021, ບໍລິສັດໄດ້ມີໜີ້ສິນບໍ່ໝຸນວຽນ ເທົ່າກັບ 12.076,8 ລ້ານກີບ ແລະ 18.111,7 ລ້ານກີບ ຕາມລຳດັບ ຫຼືເທົ່າກັບ 67,2 ສ່ວນຮ້ອຍ ແລະ 73,1 ສ່ວນຮ້ອຍ ຂອງໜີ້ສິນລວມທັງໝົດຕາມລຳດັບ

## 9. ຜົນດຳເນີນງານດ້ານການຕະຫຼາດ


### 9.1 ການອະນຸມັດສິນເຊື່ອລົດຈັກ

ຕາຕະລາງ: ການອະນຸມັດສິນເຊື່ອລົດຈັກ

| ປຽບທຽບການອະນຸມັດສິນເຊື່ອລົດຈັກຂອງບໍລິສັດໃນໄລຍະປີ 2020 ຫາ 2021 | | | | |
|---|---|---|---|---|
| ລາຍການ | ປີ 2020 | ປີ 2021 | ເພີ່ມຂຶ້ນ | ອັດຕາສ່ວນຮ້ອຍ |
| ຈຳນວນສັນຍາ (ຄັນ) | 5.046 | 5.441 | +395 | +7,8 |
| ຈຳນວນເງິນໃຫ້ສິນເຊື່ອ (ລ້ານກີບ) | 58.485 | 70.332 | +11.847 | +20,3 |

ໃນປີ 2021, ບໍລິສັດ ມີການອະນຸມັດສິນເຊື່ອໃຫມ່ທັງລົດຈັກ ແລະ ອື່ນໆ ຈຳນວນ 5.441 ສັນຍາ ຫຼື 70.332 ລ້ານກີບ ເພີ່ມຂຶ້ນ 395 ຄັນ ຈາກປີ 2020 ຫຼື 7,8 ສ່ວນຮ້ອຍ ໃນຂະນະທີ່ມີຍອດອະນຸມັດຕາມຈຳນວນຢູ່ທີ 11.847 ລ້ານກີບ ຫຼື ເພີ່ມຂຶ້ນໃນອັດຕາ 20,3 ສ່ວນຮ້ອຍ.

ໃນຊ່ວງໄລຍະ 5 ປີທີ່ຜ່ານມາ ໃນການອະນຸມັດສິນເຊື່ອໃຫມ່ທັງລົດຈັກ ແລະ ອື່ນໆ




### 9.2 ເປີດໃຫ້ບໍລິການເຊົ່າສິນເຊື່ອຄືນໃຫມ່ (Refinance) ສຳລັບລົດມື 2

ບໍລິສັດໄດ້ເລີ່ມໃຫ້ການບໍລິການເຊົ່າສິນເຊື່ອ (Refinance) ສຳລັບລົດມື 2 ໂດຍເລີ່ມແຕ່ເດືອນ ກັນຍາ 2020

## 10. ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022

### 10.1 ດ້ານການຕະຫຼາດ

ບໍລິສັດມີແຜນທີ່ຈະເພີ່ມຈຳນວນສິນເຊື່ອລາຍໃຫມ່ ເພີ່ມຫຼາຍຂຶ້ນຈາກປີ 2021 ອີກປະມານ 20 ສ່ວນຮ້ອຍ ເຊິ່ງຖືເປັນການຂະຫຍາຍຕົວທີ່ບໍ່ສູງຫຼາຍ ແຕ່ກໍ່ເປັນການວາງແຜນປ້ອງກັນຄວາມສ່ຽງ ຈາກການປ່ຽນແປງຂອງເທັກໂນໂລຍີ ຈາກລົດນ້ຳມັນ ເປັນລົດໄຟຟ້າ ອີກທັງຍັງມີບັນຫາເສດຖະກິດ ແລະ ອັດຕາແລກປ່ຽນເຮັດໃຫ້ຄາດວ່າເສດຖະກິດໂດຍລວມບໍ່ໜ້າຈະດີຂຶ້ນກວ່າປີທີ່ຜ່ານມາຫຼາຍ ໂດຍມີກົນລະຍຸດ ດັ່ງນີ້:

1. ຮັກສາສ່ວນແບ່ງທາງການຕະຫຼາດໃນນະຄອນຫຼວງວຽງຈັນ, ແຂວງ ສະຫວັນນະເຂດ ແລະ ເລັ່ງເພີ່ມຍອດສິນເຊື່ອໃນພື້ນທີ່ໃຫມ່ໃນແຂວງຄຳມ່ວນ
2. ພັດທະນາຊ່ອງທາງການຕະຫຼາດໃໝ່ຜ່ານຊ່ອງທາງສື່ສານອອນໄລນ໌ (Social Media) ແລະ ເທັກໂນໂລຍີໃໝ່
3. ພັດທະນາການໃຊ້ງານ Mobile Applicationເພື່ອອຳນວຍຄວາມສະດວກໃນການຂໍສິນເຊື່ອໃຫມ່ໂດຍການໃຫ້ລູກຄ້າເກົ່າເຂົ້າມາໃຊ້ງານເມນູຕ່າງໆໃຫ້ຫຼາຍທີ່ສຸດ ແລະ ນຳສະເໜີຜະລິດຕະພັນໃຫມ່ໆຄວບຄູ່ກັນໄປ ຕະຫຼອດຈົນຊ່ວຍໃນການສື່ສານລະຫວ່າງລູກຄ້າກັບບໍລິສັດ

### 10.2 ເງິນກູ້ຢືມ

ຈາກແຜນການດຳເນີນທຸລະກິດປີ 2021 ບໍລິສັດຕ້ອງການຂະຫຍາຍທຸລະກິດເພີ່ມອີກ ສະນັ້ນ, ບໍລິສັດຈຶ່ງຕ້ອງການເງິນກູ້ຢືມປະມານ 14.000 ລ້ານກີບ ເພື່ອເຮັດໃຫ້ບັນລຸຕາມແຜນທີ່ວາງໄວ້.

### 10.3 ການລົງທຶນ

| ປະເພດຂອງການລົງທຶນ | ກີບ |
|---|---|
| ອາຄານສຳນັກງານ ແລະ ຄ່າຕົກແຕ່ງ | 70,000,000 |
| ຍານພາຫະນະ | 260,000,000 |
| ອຸປະກອນຄອມພິວເຕີທັ້ງ Hardware ແລະ Software | 441,250,000 |
| ອຸປະກອນສຳນັກງານ | 140,000,000 |
| ງົບປະມານຈັດຫາອຸປະກອນເຄື່ອງໃຊ້ໃນການເປີດສາຂາໃຫມ່ | 35,000,000 |
| **ທັງໝົດ** | **946,250,000** |

## 10.4 ພະນັກງານ

| ພະນັກງານ | ຄົນ |
|---|---|
| ຈຳນວນຜູ້ບໍລິຫານລະດັບສູງ | 3 |
| ຈຳນວນຜູ້ບໍລິຫານລະດັບກາງ | 12 |
| ຈຳນວນຫົວໜ້າໜ່ວຍງານ | 17 |
| ຈຳນວນພະນັກງານທົ່ວໄປ | 90 |
| **ທັງໝົດ** | **122** |

ສິ້ນສຸດປີ 2022, ບໍລິສັດ ມີພະນັກງານທັງໝົດ ຈຳນວນ 122 ຄົນ ເພີ່ມຂຶ້ນຈາກປີ 2021 ຈຳນວນ 10 ຄົນ ເນື່ອງຈາກໄດ້ມີການຂະຫຍາຍທຸລະກິດ ພ້ອມຕອບແທນລວມທັງປີ 2022 ສຳລັບພະນັກງານລວມທັງຜູ່ອຳນວຍການໃຫຍ່ ຕາມແຜນງານປະຈຳປີ 2022 ຈຳນວນ 9.433.456.938 ກີບ

---

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

# ເອກະສານປະກອບວາລະທີ 3:

# ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2021

# ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ເອກະສານລາຍງານການເງິນ**

**ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021**

| **ສາລະບານ** | **ໜ້າ** |
|---|---|
| ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ | 1 - 5 |
| ໃບລາຍງານຖານະການເງິນ | 6 - 7 |
| ໃບລາຍງານຜົນໄດ້ຮັບ | 8 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 9 |
| ໃບລາຍງານກະແສເງິນສົດ | 10 - 11 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 12 - 27 |

**ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ**

**ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ**

**ຄວາມເຫັນ**

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ສຳລັບປີສິ້ນສຸດວັນທີ 31 ທັນວາ 2021 ໄດ້ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 3 ຂອງເອກະສານລາຍງານສະບັບນີ້.

**ເອກະສານລາຍງານການເງິນທີ່ກວດສອບ**

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2021;
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

**ພື້ນຖານໃນການອອກຄວາມເຫັນ**

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບ ຂອງພວກເຮົາພາຍໃຕ້ ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບ ຂອງຜູ້ກວດສອບອິດສະຫຼະ ສຳລັບການກວດສອບເອກະສານລາຍງານການເງິນ ໃນບົດລາຍ ງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

**ຄວາມເປັນອິດສະຫລະ**

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນ ອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມ ຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບຈັນຍາບັນວິຊາຊີບນັກບັນຊີ (IESBA Code).

**ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ**

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 3 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມ ເອກະສານລາຍງານການເງິນ. ເອກະສານລາຍງານການເງິນຖືກສ້າງຂຶ້ນຕາມນະໂຍບາຍການບັນຊີ ຂອງບໍລິສັດ ເຊິ່ງພື້ນຖານການບັນຊີທີ່ ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບຈາກຫຼັກການບັນຊີຂອງ ມາດຕະຖານການລາຍງານການ ເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການ ເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກ ເລື່ອງທີ່ກ່າວມາຂ້າງເທິງນັ້ນ.

pwc

## ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາກຳນົດບັນຫາໜຶ່ງທີ່ສຳຄັນໃນການກວດສອບເຊັ່ນ: ສຳຮອງໜີ້ສົງໄສຈະສູນ. ບັນຫາດັ່ງກ່າວນີ້ໄດ້ມາລວມໃນການກວດສອບເອກະສານລາຍງານການເງິນເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

| ເລື່ອງສຳຄັນໃນການກວດສອບ | ວິທີການກວດສອບ |
|---|---|
| ສຳຮອງໜີ້ສົງໄສຈະສູນ<br><br>ໃນວັນທີ 31 ທັນວາ 2021, ຍອດໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ 81.8 ຕື້ກີບ ກວມ 84.7% ຂອງຊັບສິນທັງໝົດ. ບໍລິສັດໄດ້ກຳນົດໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ຄ່າສຳຮອງໜີ້ສົງໄສຈະສູນ 4,7 ຕື້ກີບ ກວມ 5,7% ຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ.<br><br>ບໍລິສັດມີນະໂຍບາຍກ່ຽວກັບໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ ແລະ ກຳນົດຄ່າສຳຮອງໜີ້ສົງໄສຈະສູນ. ຜູ້ບໍລິຫານໄດ້ເອົາໃຈໃສ່ຕໍ່ກັບໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະເກີນກຳນົດແຕ່ຍັງບໍ່ທັນໄດ້ຮັບພາຍຫຼັງປີສິ້ນສຸດລົງ ແລະ ປະເມີນຄ່າສຳຮອງໜີ້ສົງໄສຈະສູນໂດຍອີງຕາມປະຫວັດການຊຳລະ ແລະ ຄວາມຄາດຫວັງກ່ຽວກັບໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ<br><br>ພວກເຮົາໄດ້ເອົາໃຈໃສ່ຕໍ່ປະເດັນນີ້ເນື່ອງຈາກມີມູນຄ່າ ຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ ແມ່ນມີສາລະສຳຄັນ ແລະ ເນື່ອງຈາກວ່າຄ່າສຳຮອງໜີ້ສົງໄສຈະສູນແມ່ນການຄາດຄະເນຂອງຜູ້ບໍລິຫານ. ການຄາດຄະເນແມ່ນດຳເນີນໂດຍອີງຕາມດຸນພິນິດ ຂອງຜູ້ບໍລິຫານ ແລະ ສົມມຸດຕິຖານ ກ່ຽວກັບ ຄວາມສາມາດໃນການຊຳລະຄືນຂອງລູກຄ້າແລະຄວາມສ່ຽງດ້ານສິນເຊື່ອທີ່ກ່ຽວຂ້ອງອື່ນໆ. | ພວກເຮົາປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:<br><br>• ທຳຄວາມເຂົ້າໃຈກ່ຽວກັບນະໂຍບາຍ, ຂະບວນການ, ວິທີການ ແລະ ສົມມຸດຕິຖານ ທີ່ໃຊ້ເຂົ້າໃນການຄາດຄະເນໜີ້ສົງໄສຈະສູນ, ແລະ ການລ້າງໜີ້ສູນເພື່ອພິສູດວ່ານະໂຍບາຍການບັນຊີເຫຼົ່ານີ້ແມ່ນສອດຄ່ອງກັບປີທີ່ແລ້ວ;<br>• ທຳການວິເຄາະເພື່ອສະໜັບສະໜຸນຍອດເຫຼືອຂອງ ຄ່າສຳຮອງໜີ້ສົງໄສຈະສູນດ້ວຍການກະທົບຍອດ ແລະ ຄຳນວນຄວາມຖືກຕ້ອງຂອງຕົວເລກ;<br>• ການປະເມີນຄວາມສົມເຫດສົມຜົນຂອງ ສົມມຸດຕິຖານຂອງຜູ້ບໍລິຫານທີ່ໃຊ້ໃນການວິເຄາະລາຍລະອຽດທີ່ສະໜັບສະໜຸນການຕັ້ງຄ່າສຳຮອງໜີ້ສົງໄສຈະສູນ;<br>• ທົດສອບຄວາມໜ້າເຊື່ອຖືໂດຍລະອຽດ ຂອງບົດລາຍງານໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ສິນເຊື່ອຜ່ອນຊຳລະ ທີ່ຈະໃຊ້ເພື່ອປະເມີນຄ່າສຳຮອງໜີ້ສົງໄສຈະສູນ;<br>• ສອບຖາມຜູ້ບໍລິຫານ ກ່ຽວກັບ ຄວາມສາມາດໃນການເກັບຄືນຄ່າສຳຮອງໜີ້ສົງໄສຈະສູນເຫຼົ່ານີ້ ແລະ ເກັບກຳຂໍ້ມູນສະໜັບສະໜຸນເພີ່ມເຕີມ ເພື່ອພິສູດວ່າຄ່າສຳຮອງໜີ້ສົງໄສຈະສູນແມ່ນເໝາະສົມໃນປີສິ້ນສຸດ;<br>• ທົດສອບຕາຕະລາງການເຄື່ອນໄຫວ ຂອງຄ່າສຳຮອງໜີ້ສົງໄສຈະສູນ ເຊິ່ງລວມມີຍອດຍົກມາ, ການຕັດໜີ້ສູນອອກ, ການສຳຮອງເພີ່ມເຕີມ ແລະ ຍອດເຫຼືອທ້າຍປີ ແລະ ທົດສອບຄວາມຖືກຕ້ອງຂອງການຄຳນວນ;<br>• ພິຈາລະນາ ວ່າມີການຂະຫຍາຍໄລຍະເວລາໃນການຕັດໜີ້ສູນເກີດຂຶ້ນໃນລະຫວ່າງປີ ແລະ ເບິ່ງວ່າມີປະລິມານທີ່ສູງຜິດປົກກະຕິທີ່ອາດຈະຊີ້ບອກເຖິງທ່າແຮງຂອງຈຳນວນທີ່ບໍ່ສາມາດເກັບໄດ້ເພີ່ມເຕີມ.<br><br>ຈາກຂະບວນການດັ່ງກ່າວ, ພວກເຮົາພົບເຫັນວ່າຄຳຕັດສິນຂອງການຄຸ້ມຄອງແລະການສົມມຸດຕິຖານກ່ຽວກັບການອະນຸຍາດໃຫ້ຄ່າສຳຮອງໜີ້ສົງໄສຈະສູນແມ່ນສົມເຫດສົມຜົນໂດຍອີງໃສ່ຫຼັກຖານສະໜັບສະໜຸນ. |

## ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນໆ. ຂໍ້ມູນອື່ນໆແມ່ນຂໍ້ມູນທີ່ຢູ່ໃນບົດລາຍງານປະຈຳປີ ແຕ່ບໍ່ໄດ້ລວມຢູ່ໃນເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບບົດລາຍງານປະຈຳປີ ພາຍຫຼັງວັນທີ ຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນໆ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ໃນການກວດສອບເອກະສານລາຍງານການເງິນ ຂອງພວກເຮົາ, ຄວາມຮັບຜິດຊອບ ຂອງພວກເຮົາຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນໆ ມີຄວາມຂັດແຍ່ງທີ່ເປັນສາລະສຳຄັນຕໍ່ກັບເອກະສານລາຍງານການເງິນ ຫຼື ຕໍ່ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບ ຂອງພວກເຮົາ ຫຼື ເຫັນ ວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ, ພວກເຮົາຕ້ອງໄດ້ແຈ້ງປະເດັນດັ່ງກ່າວໃຫ້ຄະນະກຳ ມະການກວດສອບຮັບຊາບ.

## ຄວາມຮັບຜິດຊອບ ຂອງຜູ້ອຳນວຍການ ແລະ ຄະນະກຳມະການກວດສອບ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີໂດຍສອດຄ່ອງກັບຫຼັກການບັນຊີ ດັ່ງທີ່ ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 3 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດ ໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ ບໍ່ວ່າເນື່ອງມາຈາກການສໍ້ ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງບໍລິສັດ ໃນການດຳເນີນ ງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການ ດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການ ເງິນ.

## ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງ ຂອງພວກເຮົາແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມ ປາສະຈາກ ການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານ ລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນ ການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນ ສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລວມການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລວມການ ຫຼື ທຸກລວມການລວມກັນມີຜົນ ຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

pwc

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີ ຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກ ການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳ ເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນ ໃນການກວດສອບທີ່ເໝາະສົມກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບ ຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານ ການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີຜົນໃຫ້ເກີດຂໍ້ ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານ ລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາ ຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບ ຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງ ການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນ ອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນ ທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນ ອິດສະຫຼະ.

pwc

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບ ເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ.

ໂດຍ: ອະພິສິດ ທ່ຽງຕັ້ງພິນິໄຊ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 18 ມີນາ 2022

**ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ**

**ໃບລາຍງານຖານະການເງິນ**
**ໃນວັນທີ 31 ທັນວາ 2021**

| | ບິດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝຸນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 4 | 13.057.187.126 | 12.404.353.323 |
| ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ | 5 | 47.696.091.192 | 47.412.873.880 |
| ຊັບສິນຖືໄວ້ເພື່ອຂາຍ, ສຸດທິ | 6 | 262.786.334 | 187.570.860 |
| ຊັບສິນໝຸນວຽນອື່ນໆ | 7 | 503.095.189 | 334.581.595 |
| **ລວມຊັບສິນໝຸນວຽນ** | | **61.519.159.841** | **60.339.379.658** |
| **ຊັບສິນບໍ່ໝຸນວຽນ** | | | |
| ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ | 8 | 2.000.002.700 | 2.000.002.700 |
| ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ | 5 | 32.091.186.121 | 25.302.582.221 |
| ຊັບສິນຄົງທີ່ມີຕົວຕົນ, ສຸດທິ | 9 | 939.382.351 | 1.037.381.048 |
| ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ | 10 | 205.780.698 | 60.019.000 |
| ຊັບສິນບໍ່ໝຸນວຽນ ອື່ນໆ | | 174.497.244 | - |
| **ລວມຊັບສິນບໍ່ໝຸນວຽນ** | | **35.410.849.114** | **28.399.984.969** |
| **ລວມຊັບສິນ** | | **96.930.008.955** | **88.739.364.627** |

ທ່ານ ມານິບ ຕຣິລິດອີໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 18 ມີນາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 18 ມີນາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ໃບລາຍງານຖານະການເງິນ**
**ໃນວັນທີ 31 ທັນວາ 2021**

| | ບິດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນເຈົ້າຂອງ** | | | |
| **ໜີ້ສິນ** | | | |
| **ໜີ້ສິນໝຸນວຽນ** | | | |
| ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | 11 | 4.580.752.344 | 4.074.936.047 |
| ໜີ້ສິນພາຍໃຕ້ສັນຍາເຊົ່າທາງການເງິນ | | - | 78.339.545 |
| ໜີ້ຕ້ອງສົ່ງອາກອນລາຍໄດ້ | | 2.041.935.197 | 1.722.492.613 |
| ໜີ້ສິນໝຸນວຽນອື່ນໆ | | 44.011.600 | 26.759.477 |
| **ລວມໜີ້ສິນໝຸນວຽນ** | | **6.666.699.141** | **5.902.527.682** |
| **ໜີ້ສິນບໍ່ໝຸນວຽນ** | | | |
| ເງິນກູ້ຢືມ | 12 | 17.894.400.000 | 11.936.400.000 |
| ໜີ້ສິນບໍ່ໝຸນວຽນອື່ນໆ | | 217.250.000 | 140.375.000 |
| **ລວມໜີ້ສິນບໍ່ໝຸນວຽນ** | | **18.111.650.000** | **12.076.775.000** |
| **ລວມໜີ້ສິນ** | | **24.778.349.141** | **17.979.302.682** |
| **ທຶນເຈົ້າຂອງ** | | | |
| ທຶນຈົດທະບຽນ | 13 | 40,000,000,000 | 40.000.000.000 |
| ສ່ວນເພີ່ມມູນຄ່າຮຸ້ນ | | 12.832.667.550 | 12.832.667.550 |
| ກຳໄລສະສົມ | | | |
| ຄັງສະສົມຕາມລະບຽບການ | 14 | 4.785.832.107 | 4.026.672.320 |
| ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ | | 14.533.160.157 | 13.900.722.075 |
| **ລວມທຶນ** | | **72.151.659.814** | **70.760.061.945** |
| **ລວມໜີ້ສິນ ແລະ ທຶນເຈົ້າຂອງ** | | **96.930.008.955** | **88.739.364.627** |

ທ່ານ ມານິບ ຕຣິສິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 18 ມີນາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 18 ມີນາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ໃບລາຍງານຜົນໄດ້ຮັບ**
**ສຳລັບປີສິ້ນສຸດວັນທີ 31 ທັນວາ 2021**

| | ບິດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|
| ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ | | 26.137.465.817 | 24.401.153.859 |
| **ລວມລາຍຮັບ** | | **26.137.465.817** | **24.401.153.859** |
| ລາຍຮັບອື່ນ | 17 | 1.313.706.358 | 1.188.628.696 |
| ລາຍຈ່າຍໃນການບໍລິຫານ | 18 | (13.644.173.357) | (12.618.257.278) |
| ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ | | (1.334.475.241) | (1.367.357.647) |
| ຂາດທຶນສຸດທິຈາກອັດຕາແລກປ່ຽນ | | (1.611.858.554) | (537.589.578) |
| **ກຳໄລຈາກການດຳເນີນງານ** | | **10,860,665,023** | **11.066.578.052** |
| ລາຍຈ່າຍການເງິນ | | (1,969,624,570) | (2.197.475.810) |
| **ກຳໄລສຸດທິກ່ອນອາກອນ** | | **8,891,040,453** | **8.869.102.242** |
| ລາຍຈ່າຍອາກອນ | 19 | (1,299,442,584) | (1.124.319.067) |
| **ກຳໄລສຸດທິ** | | **7,591,597,869** | **7.744.783.175** |
| **ກຳໄລ ຕໍ່ຮຸ້ນ** | | | |
| ກຳໄລພື້ນຖານຕໍ່ຮຸ້ນ | 15 | 18.98 | 19.36 |

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 18 ມີນາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 18 ມີນາ 2022

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2021

| | ບິດ ອະທິບາຍ | ທຶນຈົດທະບຽນ ກີບ | ສ່ວນເພີ່ມມູນຄ່າຮຸ້ນ ກີບ | ກຳໄລສະສົມ ຄັ້ງສະສົມຕາມ ລະບຽບການຈັດສັນແລ້ວ ກີບ | ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ | ລວມ ກີບ |
|---|---|---|---|---|---|---|
| ໃນວັນທີ 1 ມັງກອນ 2020 | | 40.000.000.000 | 12.832.667.550 | 3.252.194.002 | 10.930.417.218 | 67.015.278.770 |
| ກຳໄລສຳລັບປີ | | - | - | - | 7.744.783.175 | 7.744.783.175 |
| ຈັດສັນຄັ້ງສະສົມຕາມລະບຽບການ | | - | - | 774.478.318 | (774.478.318) | - |
| ຈ່າຍເງິນປັນຜົນ | 16 | - | - | - | (4.000.000.000) | (4.000.000.000) |
| **ໃນວັນທີ 31 ທັນວາ 2020** | | **40.000.000.000** | **12.832.667.550** | **4.026.672.320** | **13.900.722.075** | **70.760.061.945** |
| ໃນວັນທີ 1 ມັງກອນ 2021 | | 40.000.000.000 | 12.832.667.550 | 4.026.672.320 | 13.900.722.075 | 70.760.061.945 |
| ກຳໄລສຳລັບປີ | | - | - | - | 7.591.597.869 | 7.591.597.869 |
| ການຈັດສັນເງິນສຳຮອງຕາມກົດໝາຍ | | - | - | 759.159.787 | (759.159.787) | - |
| ຈ່າຍເງິນປັນຜົນ | 16 | - | - | - | (6.200.000.000) | (6.200.000.000) |
| **ໃນວັນທີ 31 ທັນວາ 2021** | | **40.000.000.000** | **12.832.667.550** | **4.785.832.107** | **14.533.160.157** | **72.151.659.814** |

ທ່ານ ມານິບ ຕຣິລິດວີໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 18 ມີນາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 18 ມີນາ 2022

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 12 - 27 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ໃບລາຍງານກະແສເງິນສົດ**
**ສຳລັບປີສິ້ນສຸດວັນທີ 31 ທັນວາ 2021**

| | ບິດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລກ່ອນອາກອນ | | 8.891.040.453 | 8.869.102.242 |
| ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ | | | |
| ໜີ້ສິງໄສຈະເສຍ ແລະ ໜີ້ສູນ | | 1.334.475.241 | 1.367.357.647 |
| ຄ່າບາຍໜ້າລໍຖ້າຕັດບັນຊີ | | 3.852.211.867 | 4.116.923.471 |
| ຂາດທຶນຈາກການສະສາງຊັບສິນບັດຄົງທີ | | 4.394.735 | - |
| ຂາດທຶນຈາກການສູນເສຍມູນຄ່າຂອງຊັບສິນລໍຖ້າຂາຍ | | 5.000.000 | 7.500.000 |
| ຄ່າຫຼ້ຍຫ້ຽນ | 9, 10 | 514.758.170 | 532.941.312 |
| ລາຍຈ່າຍການເງິນ | | 1.969.624.570 | 2.197.475.810 |
| ຂາດທຶນຈາກອັດຕາແລກປ່ຽນ | | 1.447.413.093 | 331.993.356 |
| **ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ** | | **18.018.918.129** | **17.423.293.838** |
| **ການປ່ຽນແປງທຶນໝຸນວຽນ:** | | | |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ | | (8.302.002.387) | 3.454.615.662 |
| ຊັບສິນຖືໄວ້ເພື່ອຂາຍ | | (80.215.474) | (59.291.911) |
| ຊັບສິນໝຸນວຽນ ແລະ ບໍ່ໝຸນວຽນອື່ນໆ | | (343.010.836) | 72.838.838 |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | 505.816.297 | 180.825.294 |
| ໜີ້ສິນໝຸນວຽນອື່ນໆ | | 384.687.136 | (2.590.029) |
| ໜີ້ສິນບໍ່ໝຸນວຽນອື່ນໆ | | 76.875.000 | 62.250.000 |
| **ເງິນສົດຈາກກິດຈະກຳດຳເນີນງານ** | | **10.261.067.864** | **21.131.941.692** |
| ລາຍຈ່າຍຄ່ານາຍໜ້າ | | (3.937.700.000) | (3.658.410.000) |
| ລາຍຈ່າຍດອກເບ້ຍ | | (2.337.173.874) | (1.937.520.606) |
| ລາຍຈ່າຍອາກອນ | | (980.000.000) | (2.239.100.434) |
| **ເງິນສົດສຸດທິຈາກ/(ໃຊ້ໄປໃນ)ກິດຈະກຳດຳເນີນງານ** | | **3.006.193.990** | **13.296.910.652** |
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ເງິນສົດຈ່າຍຊື້ຊັບສົມບັດຄົງທີ່ມີຕົວຕົນ | 9 | (397.464.907) | (116.102.167) |
| ເງິນສົດຈ່າຍຊື້ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 10 | (169.451.000) | (60.019.000) |
| **ເງິນສົດສຸດທິໃຊ້ໄປໃນກິດຈະກຳການລົງທຶນ** | | **(566.915.907)** | **(176.121.167)** |

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 18 ມີນາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 18 ມີນາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ໃບລາຍງານກະແສເງິນສົດ**
**ສຳລັບປີສິ້ນສຸດວັນທີ 31 ທັນວາ 2021**

| | ບົດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການເງິນ** | | | |
| ເງິນສົດໄດ້ຮັບຈາກເງິນກູ້ຢືມ | 12 | 4.083.200.000 | 14.433.600.000 |
| ຈ່າຍຄືນເງິນກູ້ຢືມ | | - | (2.928.600.000) |
| ຈ່າຍຄືນເງິນກູ້ຢືມ - ພາກສ່ວນທີ່ກ່ຽວຂ້ອງ | | - | (20.100.000.000) |
| ຊຳລະຄືນໜີ້ສິນ ພາຍໃຕ້ສັນຍາເຊົ່າທາງການເງິນ | | (78.339.545) | (45.839.243) |
| ຈ່າຍເງິນປັນຜົນ | 16 | (6.200.000.000) | (4.000.000.000) |
| **ເງິນສົດສຸດທິໃຊ້ໄປໃນກິດຈະກຳການເງິນ** | | **(2.195.139.545)** | **(12.640.839.243)** |
| **ເພີ່ມຂຶ້ນສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | 244.138.538 | 479.950.242 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ | | 12.404.353.323 | 11.898.879.158 |
| ກຳໄລການແລກປ່ຽນຈາກເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | 408.695.265 | 25.523.923 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ** | 4 | **13.057.187.126** | **12.404.353.323** |

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 18 ມີນາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 18 ມີນາ 2022

## 1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ທີ່ໄດ້ຈົດທະບຽນ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນ ທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, , ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ ລົດຈັກ ແລະ ລົດໄຖ.

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກປົດລາຍງານ ໂດຍຄະນະບໍລິຫານໃນວັນທີ 18 ມີນາ 2022.

## 2 ເຫດການທີ່ສຳຄັນໃນໄລຍະປະຈຸບັນ

ການຕິດເຊື້ອພະຍາດ COVID-19 ໃນປະເທດລາວມີການເພີ່ມຂຶ້ນຢ່າງເປັນສາລະສຳຄັນໃນຊ່ວງເດືອນ ເມສາ 2021 ນຳໄປສູ່ ການຫ້າມບຸກຄົນເດີນທາງ ເຂົ້າ - ອອກ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງອື່ນໆໃນປະເທດລາວ. ການເພີ່ມຂຶ້ນຢ່າງມີສາລະສຳຄັນຂອງການຕິດເຊື້ອນີ້ຖືວ່າເປັນການແຜ່ລະບາດຮອບທີສອງ ໂດຍລັດຖະບານໄດ້ມີມາດຕະການທີ່ເຂັ້ມງວດຂຶ້ນເພື່ອຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງເຊື້ອພະຍາດ ເຊິ່ງໄດ້ສົ່ງຜົນກະທົບຕໍ່ກິດຈະກຳທາງເສດຖະກິດ.

ບໍລິສັດໄດ້ປະຕິບັດຫຼາຍມາດຕະການເພື່ອສະໜັບສະໜູນລູກຄ້າ, ຜູ້ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງ COVID-19, ໂດຍ ປະຕິບັດຕາມມາດຕະການບັນເທົາທຸກຂອງທະນາຄານແຫ່ງ ສປປ ລາວ ເພື່ອຊ່ວຍເຫຼືອລູກໜີ້ ທີ່ໄດ້ຮັບຜົນກະທົບຈາກສະຖານະ ການສະພາບເສດຖະກິດຂອງລາວ, ໂດຍໃຫ້ໄລຍະຜ່ອນຜັນ ສຳລັບຕົ້ນທຶນ ແລະ ດອກເບ້ຍ ແລະ ອັດຕາຫຼຸດຜ່ອນຕາມເງື່ອນໄຂ ແລະ ຂໍ້ກຳນົດທີ່ບໍລິສັດກຳນົດ.

ຜູ້ບໍລິຫານຈະສືບຕໍ່ຕິດຕາມການພັດທະນາຢ່າງຕໍ່ເນື່ອງ ແລະ ປະເມີນຜົນກະທົບຂອງຂໍ້ມູນທາງການເງິນກ່ຽວກັບການປະເມີນມູນຄ່າ ຊັບສິນ, ການສຳຮອງໜີ້ເສຍ ແລະ ໜີ້ສິນທີ່ອາດເກີດຂຶ້ນຢ່າງສະໜ່ຳສະເໝີ.

## 3 ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ທີ່ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນສະບັບນີ້ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

### 3.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ ທີ 3 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

## 3 ນະໂຍບາຍການບັນຊີ (ຕໍ່)

### 3.1 ພື້ນຖານໃນການກະກຽມ (ຕໍ່)

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ, ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການສຳລັບການນຳ IFRS ມາໃຊ້ພາຍໃນໄລຍະເວລາສີ່ປີ. ຊຶ່ງໃນຂະນະນີ້ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ.

ຫຼັກການບັນຊີທີ່ນຳໃຊ້ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ IFRS. ຄວາມແຕກຕ່າງເຫຼົ່ານີ້ແມ່ນ: ສັນຍາເຊົ່າ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຂອງການປ່ຽນແປງໃນອັດຕາແລກປ່ຽນເງິນຕາຕ່າງປະເທດ, ອາກອນ.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

### 3.2 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍເງິນສົດໃນມື, ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບທະນາຄານ ແລະ ເງິນຝາກທະນາຄານມີອາຍຸສາມເດືອນ ຫຼື ໜ້ອຍກວ່າ ນັບຈາກມື້ທີ່ໄດ້ມາ ແຕ່ບໍ່ລວມເງິນຝາກແຮ ບັງຄັບ.

### 3.3 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ

ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະແມ່ນມູນຄ່າທີ່ຈະໄດ້ຮັບຈາກລູກຄ້າຈາກການໃຫ້ສິນເຊື່ອບຸກຄົນໃຫ້ກັບລູກຄ້າເພື່ອຊື້ລົດຈັກ ແລະ ລົດໄຖຕາມກົດຈະກຳຫຼັກ ຂອງບໍລິສັດ, ເຊິ່ງລວມມີລາຍຮັບດອກເບ້ຍເບື້ອນຊຳລະ ແລະ ລາຍຈ່າຍຄ່ານາຍໜ້າທີ່ ກ່ຽວຂ້ອງໂດຍກົງກັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ.

ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະສະແດງດ້ວຍມູນຄ່າຕົ້ນທຶນຫັກດ້ວຍຄ່າສຳຮອງໜີ້ສົງໄສຈະສູນໃນບົດອະທິບາຍຊ້ອນທ້າຍ 3.4

### 3.4 ສຳຮອງໜີ້ສົງໄສ ແລະ ໜີ້ສູນ

ຜູ້ບໍລິຫານຂອງບໍລິສັດໄດ້ປະເມີນຄ່າສຳຮອງສຳລັບໜີ້ສົງໄສຈະສູນ ຈາກຍອດຄ້າງຊຳລະອີງຕາມການເກັບໜີ້ທີ່ຜ່ານມາ ແລະ ຂໍ້ມູນໃນປະຈຸບັນ. ນະວັນທີ 31 ທັນວາ 2021 ແລະ ອານາຄົດ ຜູ້ບໍລິຫານ ຈະການຕັ້ງສຳຮອງໜີ້ສົງໄສຈະສູນ ຕາມແຈ້ງການເລກທີ 512/ທຫລ ຂອງທະນາຄານແຫ່ງ ສປປ ລາວ. ໜີ້ສູນຈະຖືກຫັກລ້າງອອກຈາກບັນຊີໃນປີທີ່ຖືກລະບຸ ແລະ ຮັບຮູ້ໃນໃບລາຍງານຜົນໄດ້ຮັບ. ໜີ້ສູນທີ່ສາມາດເກັບຄືນໄດ້ແມ່ນຖືກບັນທຶກໂດຍຫັກລົບກັບລາຍຈ່າຍສຳຮອງໜີ້ສົງໄສຈະສູນ ແລະ ໜີ້ສູນໃນໃບລາຍງານຜົນໄດ້ຮັບ.

## 3 ນະໂຍບາຍການບັນຊີ (ຕໍ່)

### 3.5 ຊັບສິນລໍຖ້າການຂາຍ

ຊັບສິນລໍຖ້າການຂາຍແມ່ນຊັບສິນທີ່ຍຶດມາຈາກຜູ້ເຊົ່າ ຫຼື ລູກໜີ້ສິນເຊື່ອ, ຊັບສິນລໍຖ້າຂາຍນີ້ແມ່ນຖືກສະແດງຕາມມູນຄ່າຕົ້ນທຶນ ລົບດ້ວຍຄ່າໃຊ້ຈ່າຍທີ່ຈຳເປັນໃນການຂາຍອອກ.

### 3.6 ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ

ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ ແມ່ນບັນທຶກຕາມຕົ້ນທຶນ ລົບ ຄ່າຫຼ້ຽຫ້ຽນສະສົມ ແລະ ຂາດທຶນຈາກການຫຼຸດເສຍມູນຄ່າສະສົມ

ຕົ້ນທຶນປະກອບຂອງສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນປະກອບດ້ວຍ ລາຄາຊື້, ພາສີນຳເຂົ້າ, ພາສີຊື້ທີ່ບໍ່ສາມາດຂໍຄືນໄດ້ (ຫຼັງຈາກທີ່ມີການຫັກສ່ວນຫຼຸດການຄ້າ) ແລະ ຕົ້ນທຶນທາງກົງທີ່ກ່ຽວຂ້ອງກັບການຊື້ຊັບສິນ ແລະ ລາຍຈ່າຍທີ່ຈຳເປັນເພື່ອເຮັດໃຫ້ຊັບສິນດັ່ງກ່າວໃຊ້ງານໄດ້ຕາມການພິຈາລະນາຂອງຜູ້ບໍລິຫານ.

ລາຍຈ່າຍໃນການປ່ຽນແທນພາກສ່ວນໜຶ່ງຂອງສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ ແມ່ນລວມເຂົ້າໃນມູນຄ່າຍັງເຫຼືອຕາມບັນຊີຊັບສິນ ເມື່ອຄາດວ່າຜົນປະໂຫຍດທາງດ້ານເສດຖະກິດໃນອະນາຄົດຂອງອຸປະກອນທີ່ປ່ຽນແທນດັ່ງກ່າວຈະນຳມາໃຫ້ບໍລິສັດ ແລະ ຊັບສິນທີ່ຖືກປ່ຽນແທນນັ້ນຕ້ອງໄດ້ລົບລ້າງອອກຈາກບັນຊີ.

ຄ່າສ້ອມແປງ ແລະ ບຳລຸງຮັກສາ ແມ່ນບັນທຶກເຂົ້າໃນບົດລາຍງານຜົນໄດ້ຮັບ ແລະ ປົກການບັນຊີທີ່ລາຍການດັ່ງກ່າວເກີດຂຶ້ນ.

ຄ່າຫຼ້ຽຫ້ຽນແມ່ນຄິດໄລ່ແບບສະໝ່ຳສະເໝີ ຕາມການຄາດຄະເນອາຍຸການນຳໃຊ້ ດັ່ງລຸ່ມນີ້:

| | ປີ |
|---|---|
| ສ່ວນປັບປຸງອາຄານເຊົ່າ | 5 |
| ເຟີນີເຈີ ແລະ ເຄື່ອງຕົກແຕ່ງຫ້ອງການ | 5 |
| ເຄື່ອງໃຊ້ຫ້ອງການ | 3 - 5 |
| ຍານພາຫະນະ | 5 |

ເມື່ອໃດກໍ່ຕາມທີ່ມີຂໍ້ບົ່ງຊີ້ ສະແດງໃຫ້ເຫັນເຖິງການຫຼຸດລົງຢ່າງຖາວອນຂອງອຸປະກອນເຊັ່ນ: ຫຼັກຖານກ່ຽວກັບຄວາມເກົ່າ ຫຼື ລ້າສະໄໝ ຫຼື ມີການເສຍຫາຍຂອງຊັບສິນ. ການປ່ຽນແປງໃນລັກສະນະຂອງຊັບສິນທີ່ຖືກນຳໃຊ້ ຫຼື ຄາດວ່າຈະໄດ້ນຳໃຊ້, ບໍລິສັດຈະຮັບຮູ້ການຂາດທຶນ ໃນການຫຼຸດລົງຂອງມູນຄ່າອຸປະກອນ ໃນໃບລາຍງານຜົນໄດ້ຮັບ ຖ້າມູນຄ່າຍັງເຫຼືອຕາມບັນຊີຂອງຊັບສິນສູງກວ່າມູນຄ່າຈຳນວນເງິນທີ່ຈະໄດ້ຮັບຄືນ, ມູນຄ່າຈຳນວນເງິນທີ່ຈະໄດ້ຮັບຄືນຂອງຊັບສິນແມ່ນມູນຄ່າທີ່ສູງກວ່າລະຫວ່າງມູນຄ່າຍຸດຕິທຳ ລົບຕົ້ນທຶນເພື່ອຂາຍ ແລະ ມູນຄ່າຈາກການນຳໃຊ້.

### 3.7 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນໄດ້ແກ່ມູນຄ່າຂອງໂປຣແກຣມຄອມພິວເຕີທີ່ຊື້ມາ ແມ່ນບັນທຶກເປັນຊັບສິນບັດຄົງທີ່ບໍ່ມີຕົວຕົນຕາມຕົ້ນທຶນທີ່ເກີດຂຶ້ນໃນການຊື້ ແລະ ນຳໂປຣແກຣມດັ່ງກ່າວມາໃຊ້ງານ. ຄ່າຫຼ້ຽຫ້ຽນແມ່ນຄິດໄລ່ແບບສະໝ່ຳສະເໝີຕາມການຄາດຄະເນອາຍຸການນຳໃຊ້ລະຫວ່າງ 5 ປີ.

ລາຍຈ່າຍທີ່ກ່ຽວຂອງກັບການບຳລຸງຮັກສາ ໂປຣແກຣມຄອມພິວເຕີ ແມ່ນຮັບຮູ້ເປັນລາຍຈ່າຍເມື່ອລາຍການນັ້ນເກີດຂຶ້ນ.

ລາຍຈ່າຍໃນການຍືນອາຍຸການໃຊ້ງານຂອງໂປຣແກຣມຄອມພິວເຕີ ແມ່ນຈະຖືກບັນທຶກເປັນລາຍຈ່າຍສ່ວນປັບປຸງ ແລະ ຖືກລວມເຂົ້າໃນຕົ້ນທຶນເດີມຂອງໂປຣແກຣມຄອມພິວເຕີ.

## 3 ນະໂຍບາຍການບັນຊີ (ຕໍ່)

### 3.8 ສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນແມ່ນຖືກຮັບຮູ້ເມື່ອບໍລິສັດໄດ້ຮັບເງິນຈາກການຂາຍຮຸ້ນຄັ້ງທຳອິດ ແລະ ຈຳນວນດັ່ງກ່າວໄດ້ຖືກຄິດໄລ່ໂດຍອີງໃສ່ຜົນຕ່າງລະຫວ່າງລາຄາທີ່ສະເໜີຂາຍໃນເບື້ອງຕົ້ນ ແລະ ມູນຄ່າທີ່ກຳນົດໄວ້ຕາມການຫັກຕົ້ນທຶນໃນການຈັດຈຳໜ່າຍ.

### 3.9 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ

ລາຍຮັບດອກເບ້ຍຈາກໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກສິນເຊື່ອຜ່ອນຊຳລະຈະຖືກຮັບຮູ້ຕາມຫຼັກເກນຄົງຄ້າງ ເຊິ່ງຈະຄິດໄລ່ໂດຍໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ.

ລາຍຮັບຄ່າທຳນຽມຈາກການດຳເນີນງານ ແລະ ບໍລິການ ແມ່ນຖືກຮັບຮູ້ເມື່ອໄດ້ໃຫ້ບໍລິການ.

ຄ່າປັບໃໝ (ຄ່າປັບໃໝຈາກການຈ່າຍຊ້ຳ) ແມ່ນຖືກຮັບຮູ້ເມື່ອໄດ້ຮັບເງິນ.

ລາຍຮັບ ແລະ ລາຍຈ່າຍອື່ນ ແມ່ນຖືກຮັບຮູ້ຕາມຫຼັກເກນຄົງຄ້າງ

### 3.10 ສັນຍາເຊົ່າ - ບໍລິສັດເປັນຜູ້ໃຫ້ເຊົ່າ

ສັນຍາເຊົ່າທີ່ມີການໂອນສ່ວນສຳຄັນຂອງຕວາມສ່ຽງ ແລະ ຜົນຕອບແທນໃຫ້ຜູ້ເຊົ່າ ແມ່ນຖືກຈັດໃຫ້ເປັນສັນຍາເຊົ່າການເງິນ

ເມື່ອຊັບສິນມີການໃຫ້ເຊົ່າພາຍໃຕ້ສັນຍາເຊົ່າທາງການເງິນ, ມູນຄ່າລົງທຶນສຸດທິໃນການເຊົ່າ ແມ່ນຖືກຮັບຮູ້ເຂົ້າເປັນໜີ້ຕ້ອງຮັບສ່ວນຕ່າງລະຫວ່າງໜີ້ຕ້ອງຮັບລວມ ແລະ ມູນຄ່າລົງທຶນສຸດທິຂອງໜີ້ຕ້ອງຮັບແມ່ນຖືກຮັບຮູ້ເປັນດອກເບ້ຍລໍ່ຖ້າຮັບ. ລາຍຮັບດອກເບ້ຍຈາກສັນຍາເຊົ່າຖືກຮັບຮູ້ຕາມນິດອະທິບາຍ ເລກທີ 3.9

### 3.11 ສັນຍາເຊົ່າ - ບໍລິສັດເປັນຜູ້ເຊົ່າ

- *ສັນຍາເຊົ່າດຳເນີນງານ*

  ສັນຍາເຊົ່າທີ່ບໍ່ໄດ້ໂອນສ່ວນສຳຄັນຂອງຄວາມສ່ຽງ ແລະ ຜົນຕອບແທນໃຫ້ຜູ້ເຊົ່າ ແມ່ນຖືກຈັດໃຫ້ເປັນສັນຍາເຊົ່າດຳເນີນງານ. ລາຍຈ່າຍທີ່ເກີດຂຶ້ນພາຍໃຕ້ສັນຍາເຊົ່າດຳເນີນງານແມ່ນຖືກຮັບຮູ້ເຂົ້າໃນບັດລາຍງານຜົນໄດ້ຮັບຕາມຫຼັກການສະໝ່ຳສະເໝີຕະຫຼອດອາຍຸສັນຍາເຊົ່າ.

- *ສັນຍາເຊົ່າທາງການເງິນ*

  ສັນຍາເຊົ່າທາງການເງິນ ສັນຍາເຊົ່າທີ່ບໍລິສັດໄດ້ຮັບຄວາມສ່ຽງ ແລະ ຜົນຕອບແທນສ່ວນໃຫ່ຍຂອງການເປັນເຈົ້າຂອງຊັບສິນ ຍົກເວັ້ນສິດທິທາງກົດໝາຍ ຖືເປັນສັນຍາເຊົ່າທາງການເງິນ ບໍລິສັດ ບັນທຶກຊັບສິນ ແລະ ໜີ້ສິນໃນເອກະສານສະແດງຖານະການເງິນເທົ່າກັບມູນຄ່າຍຸຕິທຳ ໃນມື້ທີ່ເລີ່ມສັນຍາເຊົ່າ ຫຼື ມູນຄ່າປະຈຸບັນຈຳນວນເງິນຂັ້ນຕ່ຳທີ່ຕ້ອງຈ່າຍຕາມສັນຍາເຊົ່າແລ້ວແຕ່ຈຳນວນໃດຈະຕ່ຳກວ່າ ຄ່າຫຼ້ຍຫ້ຽນຂອງຊັບສິນທີ່ເຊົ່າຄຳນວນໂດຍວິທີຄິດໄລ່ແບບສະເໝີຕົວຕະຫຼອດອາຍຸການໃຊ້ງານດ້ວຍປະມານຂອງຊັບສິນຄ່າໃຊ້ຈ່າຍທາງການເງິນ ຄຳນວນໂດຍໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງຕະຫຼອດໄລຍະເວລາຂອງສັນຍາຄ່າໃຊ້ຈ່າຍທາງການເງິນ ແລະ ຄ່າຫຼ້ຍຫ້ຽນ ຮັບຮູ້ເປັນຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບ.

## 3. ນະໂຍບາຍການບັນຊີ (ຕໍ່)

### 3.12 ລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດຈະຖືກປ່ຽນເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນໄຫວເກີດຂຶ້ນ.

ໃນຕອນທ້າຍຂອງຮອບເວລາລາຍງານແຕ່ລະຄັ້ງ ຊັບສິນ ແລະ ໜີ້ສິນທີ່ເປັນສະກຸນເງິນຕາຕ່າງປະເທດ ຖືກປ່ຽນຄ່າໂດຍໃຊ້ອັດຕາແລກປ່ຽນໃນມື້ປິດບັນຊີ. ຊັບສິນ ແລະ ໜີ້ສິນທີ່ບໍ່ເປັນເງິນທີ່ຖືກກຳນົດໄວ້ເປັນອັດຕາຕ່າງປະເທດຖືກຕີມູນຄ່າຕາມຕົ້ນທຶນເດີມໂດຍນຳໃຊ້ອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນໄຫວເກີດຂຶ້ນ.

ກຳໄລ ແລະ ຂາດທຶນທີ່ເກີດຈາກການຊຳລະສະສາງຂອງການເຄື່ອນໄຫວທີ່ເປັນເງິນຕາຕາງປະເທດ ແລະ ເກີດຈາກການປ່ຽນຄ່າຊັບສິນ ແລະ ໜີ້ສິນທີ່ເປັນເງິນທີ່ຖືກກຳນົດເປັນອັດຕາຕ່າງປະເທດ ແມ່ນຮັບຮູ້ໃນລາຍງານຜົນໄດ້ຮັບ.

### 3.13 ລາຍຈ່າຍອາກອນລາຍຮັບ

ລາຍຈ່າຍອາກອນລາຍຮັບແມ່ນຖືກບັນທຶກຕາມອາກອນທີ່ນຳສົ່ງ ແລະ ອາກອນຄ້າງໃນປີ

### 3.14 ກຳໄລຕໍ່ຮຸ້ນຂັ້ນພື້ນຖານ

ກຳໄລຕໍ່ຮຸ້ນຂັ້ນພື້ນຖານຄຳນວນໂດຍການຫານກຳໄລສຸດທິສຳລັບປີດ້ວຍຈຳນວນສະເລ່ຍຕາມນ້ຳໜັກຂອງຮຸ້ນສາມັນທີ່ອອກ ແລະ ຊຳລະຫວ່າງປີ. ໃນກໍລະນີທີ່ການເພີ່ມທຶນໄດ້ໃຊ້ຈຳນວນຮຸ້ນສະເລ່ຍຂອງຮຸ້ນສາມັນ ຕາມໄລຍະເວລາທີ່ຈົດທະບຽນເພີ່ມທຶນເອີ້ນເກັບແລ້ວ.

## 4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | 2021<br>ກີບ | 2020<br>ກີບ |
|---|---|---|
| ເງິນສົດໃນມື | 41.035.623 | 65.894.780 |
| ເງິນຝາກໃນທະນາຄານທີ່ສາມາດຖອນເກັບໄດ້ໃນເວລາທີ່ຕ້ອງການ (i) | 13.016.151.503 | 12.338.458.543 |
| | **13.057.187.126** | **12.404.353.323** |

(i) ເງິນຝາກໃນທະນະຄານລວມມີສາມສະກຸນເງິນຄືສະກຸນກີບ, ບາດ ແລະ ໂດລາ ໃນບັນຊີເງິນຝາກກະແສລາຍວັນ ກັບທະນາຄານພາຍໃນປະເທດ ແລະ ສາຂາທະນາຄານຕ່າງປະເທດໃນລາວ.

## 5. ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

| | 2021<br>ກີບ | 2020<br>ກີບ |
|---|---|---|
| **ໝຸນວຽນ** | | |
| ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ | 1.142.390.791 | 1.417.264.839 |
| ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ | 49.443.374.420 | 47.733.016.741 |
| | **50.585.765.211** | **49.150.281.580** |
| ເພີ່ມ ຕົ້ນທຶນທາງກົງ | 1.366.237.006 | 1.447.725.719 |
| ຫັກ ສຳຮອງໜີ້ສົງໄສຈະສູນ | (4.255.911.025) | (3.185.133.419) |
| | **47.696.091.192** | **47.412.873.880** |
| **ບໍ່ໝຸນວຽນ** | | |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ | 323.369.606 | 207.374.737 |
| ລູກໜີ້ສິນເຊື່ອຜ່ອນຊຳລະ | 31.017.898.812 | 24.401.024.077 |
| | **31.341.268.418** | **24.608.398.814** |
| ເພີ່ມ ຕົ້ນທຶນທາງກົງ | 1.293.716.612 | 1.126.739.763 |
| ຫັກ ສຳຮອງໜີ້ສົງໄສຈະສູນ | (543,798.909) | (432.556.356) |
| | **32.091.186.121** | **25.302.582.221** |
| **ລວມ** | **79.787.277.313** | **72.715.456.101** |

ໃນວັນທີ 31 ທັນວາ 2021, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

| | 2021<br>ກີບ | 2020<br>ກີບ |
|---|---|---|
| ບໍ່ຄົບກຳນົດ | 59.043.910.017 | 54.414.161.391 |
| 1 – 3 ເດືອນ | 16.691.343.418 | 14.672.370.031 |
| 4 – 5 ເດືອນ | 1.812.386.831 | 1.145.245.622 |
| 6 – 12 ເດືອນ | 1.394.089.145 | 1.297.787.808 |
| ເກີນ 12 ເດືອນ | 2.985.304.218 | 2.229.115.542 |
| | **81.927.033.629** | **73.758.680.394** |
| ເພີ່ມ ຕົ້ນທຶນທາງກົງ | 2.659.953.618 | 2.574.465.482 |
| ຫັກ ສຳຮອງໜີ້ສົງໄສຈະສູນ | (4.799.709.934) | (3.617.689.775) |
| **ລວມ** | **79.787.277.313** | **72.715.456.101** |

## 6. ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

| | 2021<br>ກີບ | 2020<br>ກີບ |
|---|---|---|
| ລົດຈັກ | 291.536.334 | 211.320.860 |
| ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ | (28.750.000) | (23.750.000) |
| | **262.786.334** | **187.570.860** |

## 7. ຊັບສິນໝຸນວຽນອື່ນໆ

| | 2021<br>ກີບ | 2020<br>ກີບ |
|---|---|---|
| ລາຍຈ່າຍລ່ວງໜ້າ | 449.969.869 | 292.490.017 |
| ຊໍາລະເງິນລ່ວງໜ້າ | 42.757.320 | 9.239.640 |
| ໜີ້ຕ້ອງຮັບອາກອນມູນຄ່າເພີ່ມ | - | 8.633.089 |
| ອື່ນໆ | 10.368.000 | 24.218.849 |
| | **503.095.189** | **334.581.595** |

## 8. ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ

ເງິນແຮຝາກບັງຄັບທີ່ທະນາຄານແຫ່ງ ສປປ ລາວ ຈໍານວນ 2.000 ລ້ານກີບ, ໂດຍຄິດເປັນ 5% ຂອງທຶນຈົດທະບຽນທັງໝົດ. ເງິນສິດດັ່ງກ່າວບໍ່ສາມາດເອົາມານໍາໃຊ້ໃນການດໍາເນີນງານປະຈໍາວັນ. ເງິນສິດດັ່ງກ່າວຈະຖືກສົ່ງຄືນໄດ້ຖ້າບໍລິສັດມີການຍຸບເລີກກິດຈະການ.

## 9. ຊັບສິນຄົງທີ່ມີຕົວຕົນ, ສຸດທິ

| | ສ່ວນປັບປຸງອາຄານ ກີບ | ເຟີນີເຈີ ແລະ ອຸປະກອນ ກີບ | ເຄື່ອງໃຊ້ຫ້ອງການ ກີບ | ຍານພາຫະນະ ກີບ | ລວມ ກີບ |
|---|---|---|---|---|---|
| **ໃນວັນທີ 31 ທັນວາ 2020** | | | | | |
| ຕົ້ນທຶນ | 625.233.708 | 545.811.347 | 794.893.146 | 1.680.232.218 | 3.646.170.419 |
| ຫັກ: ຄ່າຫລຸ້ຍຫ້ຽນສະສົມ | (421.239.199) | (337.769.540) | (601.749.166) | (1.248.071.446) | (2.608.789.371) |
| **ມູນຄ່າ, ສຸດທິ** | **203.994.509** | **208.081.807** | **193.143.980** | **432.160.752** | **1.037.381.048** |
| **ທ້າຍປີວັນທີ 31 ທັນວາ 2021** | | | | | |
| ຍອດຍົກມາ, ສຸດທິ | 203.994.509 | 208.081.807 | 193.143.980 | 432,160,752 | 1.037.381.048 |
| ເພີ່ມຂຶ້ນ | - | 17.973.664 | 129.749.425 | 249.741.818 | 397.464.907 |
| ສະສາງອອກ | (125.015) | (1.932.055) | (2.337,665) | - | (4.394.735) |
| ຄ່າຫລຸ້ຍຫ້ຽນ | (102.651.302) | (80.454.319) | (113.534.304) | (194.428.944) | (491.068.869) |
| **ມູນຄ່າ, ສຸດທິ** | **101.218.192** | **143.669.097** | **207.021.436** | **487.473.626** | **939.382.351** |
| **ໃນວັນທີ 31 ທັນວາ 2021** | | | | | |
| ຕົ້ນທຶນ | 625,.233.708 | 563.785.011 | 924.642.571 | 1.929.974.036 | 4.043.635.326 |
| ຫັກ: ຄ່າຫລຸ້ຍຫ້ຽນສະສົມ | (524.015.516) | (420.115.914) | (717.621.135) | (1.442.500.410) | (3.104.252.975) |
| **ມູນຄ່າ, ສຸດທິ** | **101.218.192** | **143.669.097** | **207.021.436** | **487.473.626** | **939.382.351** |

## 9. ຊັບສິນຄົງທີ່ມີຕົວຕົນ, ສຸດທິ (ຕໍ່)

| | ສ່ວນປັບປຸງອາຄານ ກີບ | ເຟີນີເຈີ ແລະ ອຸປະກອນ ກີບ | ເຄື່ອງຈັກ ແລະ ເຄື່ອງໃຊ້ຫ້ອງການ ກີບ | ຍານພາຫະນະ ກີບ | ລວມ ກີບ |
|---|---|---|---|---|---|
| **ໃນວັນທີ 31 ທັນວາ 2019** | | | | | |
| ຕົ້ນທຶນ | 625.233.708 | 519.842.181 | 704.760.145 | 1.680.232.218 | 3.530.068.252 |
| ຫັກ: ຄ່າຫລຸ້ຍຫ້ຽນສະສົມ | (317.920.343) | (255.274.734) | (501.243.169) | (1.001.409.813) | (2.075.848.059) |
| **ມູນຄ່າ, ສຸດທິ** | **307.313.365** | **264.567.447** | **203.516.976** | **678.822.405** | **1.454.220.193** |
| **ທ້າຍປີວັນທີ 31 ທັນວາ 2020** | | | | | |
| ຍອດຍົກມາ, ສຸດທິ | 307.313.365 | 264.567.447 | 203.516.976 | 678.822.405 | 1.454.220.193 |
| ເພີ່ມຂຶ້ນ | - | 25.969.166 | 90.133.001 | - | 116.102.167 |
| ຄ່າຫລຸ້ຍຫ້ຽນ | (103.318.856) | (82.454.806) | (100.505.997) | (246.661.653) | (532.941.312) |
| **ມູນຄ່າ, ສຸດທິ** | **203.994.509** | **208.081.807** | **193.143.980** | **432.160.752** | **1.037.381.048** |
| **ໃນວັນທີ 31 ທັນວາ 2020** | | | | | |
| ຕົ້ນທຶນ | 625.233.708 | 545.811.347 | 794.893.146 | 1.680.232.218 | 3.646.170.419 |
| ຫັກ: ຄ່າຫລຸ້ຍຫ້ຽນສະສົມ | (421.239.199) | (337.729.540) | (601.749.166) | (1.248.071.466) | (2.608.789.371) |
| **ມູນຄ່າ, ສຸດທິ** | **203.994.509** | **208.081.807** | **193.143,980** | **432.160.752** | **1.037.381.048** |

## 10. ຊັບສິນບໍ່ມີຕົວຕົນ, ສຸດທິ

| | 2021<br>ກີບ | 2020<br>ກີບ |
|---|---|---|
| ຍອດຍົກມາໃນວັນທີ 1 ມັງກອນ | 60.019.000 | - |
| ເພີ່ມຂຶ້ນ | 169.451.000 | 60.019.000 |
| ຫັກ: ຄ່າຫຼຸ້ຍຫ້ຽນ | (23.689.302) | - |
| **ມູນຄ່າສຸດທິໃນວັນທີ 31 ທັນວາ** | **205.780.698** | **60.019.000** |
| ຕົ້ນທຶນ | 271.963.727 | 102.512.727 |
| ຫັກ: ຄ່າຫຼຸ້ຍຫ້ຽນ | (66.183.029) | (42.493.727) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ** | **205.780.698** | **60.019.000** |

## 11. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

| | 2021<br>ກີບ | 2020<br>ກີບ |
|---|---|---|
| ໜີ້ຕ້ອງສົ່ງການຄ້າ | 2.727.309.000 | 2.179.740.000 |
| ຄ່າໃຊ້ຈ່າຍຄ້າງຈ່າຍ | 1.451.698.670 | 1.624.132.234 |
| ໜີ້ຕ້ອງສົ່ງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ 20) | 313.206.000 | 190.075.000 |
| ໜີ້ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ 20) | 38.750.000 | 28.136.000 |
| ໜີ້ຕ້ອງສົ່ງອາກອນ | 49.788.674 | 52.852.813 |
| **ລວມ** | **4.580.752.344** | **4.074.936.047** |

## 12. ເງິນກູ້ຢືມ

| | 2021<br>ກີບ | 2020<br>ກີບ |
|---|---|---|
| ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ | 11.936.400.000 | - |
| ເງິນກູ້ຢືມທີ່ເພີ່ມ | 4.083.200.000 | 14.433.600.000 |
| ຊຳລະເງິນກູ້ຢືມຄືນ | - | (2.928.600.000) |
| ຂາດທຶນຈາກການຕີມູນຄ່າການແລກປ່ຽນ | 1.874.800.000 | 431.400.000 |
| ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ | **17.894.400.000** | **11.936.400.000** |

ໃນເດືອນ ກຸມພາ 2020 ບໍລິສັດໄດ້ເຊັນສັນຍາກູ້ຢືມກັບສະຖາບັນການເງິນໃນຈຳນວນລວມ 3 ລ້ານໂດລາສະຫະລັດ ໃນອັດຕາດອກເບ້ຍ 1.2% ຕໍ່ປີ ແລະ ໄລຍະເວລາການຊຳລະຄືນ ຂອງການກູ້ຢືມແມ່ນ 3 ປີເລີ່ມແຕ່ມື້ຖອນຂອງແຕ່ລະງວດ.

ໃນວັນທີ 31 ທັນວາ 2021, ຍອດມູນຄ່າການຖອນທັງໝົດແມ່ນ 1,6 ລ້ານໂດລ່າສະຫະລັດ (ເທົ່າກັບ 17,8 ຕື້ກີບ) ແລະ ໄດ້ຖືກຈັດສັນເຂົ້າເປັນໜີ້ສິນບໍ່ໝຸນວຽນ.

ຍອດເງິນກູ້ຢືມແມ່ນໄດ້ຮັບການຄ້ຳປະກັນໂດຍຜູ້ຖືຫຸ້ນລາຍໃຫຍ່ຄື ບໍລິສັດ ມະຫາທຸນ ໂຮນດິ້ງ ຈຳກັດ.

## 13. ທຶນຈົດທະບຽນ

| | ມູນຄ່າຕໍ່ໃບຮຸ້ນ (ກີບ) | 2021 | | 2020 | |
|---|---|---|---|---|---|
| | | ຈຳນວນຮຸ້ນ | ມູນຄ່າ (ກີບ) | ຈຳນວນຮຸ້ນ | ມູນຄ່າ (ກີບ) |
| **ຮຸ້ນທີ່ໄດ້ຮັບອະນຸມັດ** | | | | | |
| - ຮຸ້ນສາມັນ | 1.000 | - | - | 40.000.000 | 40.000.000.000 |
| - ຮຸ້ນສາມັນ | 100 | 400.000.000 | 40.000.000.000 | - | - |
| **ຮຸ້ນທີ່ອອກ ແລະ ຖອກ ແລ້ວ ຕົ້ນງວດ** | | | | | |
| - ຮຸ້ນສາມັນ | 1.000 | - | - | 40.000.000 | 40.000.000.000 |
| - ຫຼຸດມູນຄ່າຕໍ່ໃບຮຸ້ນຈາກ 1.000 ກີບ ມາເປັນ 100 ກີບ | 100 | 400.000.000 | 40.000.000.000 | - | - |
| **ຍອດເຫຼືອທ້າຍງວດ** | | | | | |
| **ຮຸ້ນສາມັນ** | **1.000** | **-** | **-** | **40.000.000** | **40.000.000.000** |
| **ຮຸ້ນສາມັນ** | **100** | **400.000.000** | **40.000.000.000** | **-** | **-** |

ໃນວັນທີ 4 ທັນວາ 2020, ໃນກອງປະຊຸມຜູ້ຖືຮຸ້ນສາມັນທົ່ວໄປ ຄັ້ງທີ 1, ຜູ້ຖືຮຸ້ນໄດ້ຜ່ານມະຕິຕົກລົງເພື່ອອະນຸມັດການປ່ຽນແປງ ມູນຄ່າໃນໃບຮຸ້ນ ຂອງບໍລິສັດ ຈາກລາຄາ 1.000 ກີບ ມາເປັນ 100 ກີບຕໍ່ຮຸ້ນ,

ບໍລິສັດໄດ້ຈົດທະບຽນປ່ຽນແປງຈຳນວນ ແລະ ລາຄາຮຸ້ນກັບກະຊວງອຸດສາຫະກຳ ແລະ ການຄ້າແລ້ວ ໃນວັນທີ 24 ມີຖຸນາ 2021.

ຮຸ້ນສາມັນໄດ້ຖືກປ່ຽນຈາກ 40,000,000 ຮຸ້ນ ມາເປັນ 400,000,000 ຮຸ້ນ.

## 14. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວ່າດ້ວຍກິດຈະການ ສປປ ລາວ ຕາມມາດຕາ 156 ເຊິ່ງກຳນົດການຈັດສັນ ກຳໄລເປັນຄັງສຳຮອງຕາມກົດໝາຍຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ ຈົນກວ່າຈະບັນລຸ 50% ຂອງທຶນຮຸ້ນທີ່ໄດ້ຮັບ ອະນຸຍາດ.

## 15. ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນຂອງຮຸ້ນສາມັນ ທີ່ອອກໃນ ລະຫວ່າງປີ, ປັບປຸງຕາມຜົນກະທົບຈາກການປ່ຽນແປງຂອງມູນຄ່າກຳນົດຂອງຮຸ້ນ ເພື່ອປຽບທຽບດັ່ງຕໍ່ໄປນີ້:

| | 2021 | 2020 | |
|---|---|---|---|
| | | ຫຼັງການປ່ຽນມູນ ຄ່າກຳນົດ | ກ່ອນການປ່ຽນ ມູນຄ່າກຳນົດ |
| ກຳໄລສຸດທິທີ່ເປັນຂອງຜູ້ຖືຮຸ້ນສາມັນ (ກີບ) | 7.591.597.869 | 7.744.783.175 | 7.744.783.175 |
| ສະເລ່ຍຕາມຈຳນວນຂອງຮຸ້ນສາມັນທີ່ອອກ (ຮຸ້ນ) | 400.000.000 | 400.000.000 | 40.000.000 |
| ກຳໄລພື້ນຖານຕໍ່ຮຸ້ນ (ກີບ) | 18.98 | 19.36 | 193.62 |

## 16. ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2019 ໃນວັນທີ 29 ເມສາ 2020, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2019 ໃນມູນຄ່າ 100 ກີບຕໍ່ຮຸ້ນ, ລວມມູນຄ່າທັງໝົດ 4.000 ລ້ານກີບ ແລະ ຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 808.458.495 ກີບ.

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2020 ໃນວັນທີ 27 ເມສາ 2021, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2020 ໃນມູນຄ່າ 155 ກີບຕໍ່ຮຸ້ນ, ລວມມູນຄ່າ 6.200 ລ້ານກີບ ແລະ ຈັດສັນກຳໄລສຸດທິ ເພື່ອສຳຮອງຕາມກົດໝາຍຈຳນວນເງິນ 774.478.318 ກີບ.

## 17. ລາຍຮັບອື່ນໆ

ລາຍຮັບອື່ນໆປະກອບມີດັ່ງຕໍ່ໄປນີ້:

| | 2021<br>ກີບ | 2020<br>ກີບ |
|---|---|---|
| ຄ່າປັບໄໝ | 1.073.589.183 | 883.308.009 |
| ລາຍຮັບອື່ນໆ | 240.117.175 | 305.320.687 |
| **ລວມ** | **1.313.706.358** | **1.188.628.696** |

## 18. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

| | 2021<br>ກີບ | 2020<br>ກີບ |
|---|---|---|
| ລາຍຈ່າຍພະນັກງານ | 8.429.963.871 | 7.626.431.028 |
| ຄ່າຕອບແທນຜູ້ບໍລິຫານ | 805.000.000 | 829.630.856 |
| ລາຍຈ່າຍສາທາລະນຸປະໂພກ | 635.603.652 | 538.462.328 |
| ຂາດທຶນສຸດທິຈາກການຂາຍຊັບສິນລໍຖ້າການຂາຍ | 949.090.695 | 1.179.382.249 |
| ຄ່າຫຼ້ຍຫ້ຽນ | 519.152.905 | 532.941.312 |
| ລາຍຈ່າຍອື່ນໆ | 2.305.362.234 | 1.911.409.505 |
| **ລວມ** | **13.644.173.357** | **12.618.257.278** |

## 19. ອາກອນກຳໄລ

ບໍລິສັດໄດ້ຮັບສິດພາຍໃຕ້ກົດໝາຍວ່າດ້ວຍສ່ວຍສາອາກອນຂອງ ສປປ ລາວ ດ້ວຍການຫຼຸດອັດຕາພາສີກຳໄລ 5% ຈາກອັດຕາ ປົກກະຕິເປັນເວລາ 4 ປີ ນັບແຕ່ມື້ລົງທະບຽນເຂົ້າຕະຫຼາດຫຼັກຊັບລາວ (ວັນລົງທະບຽນ 13 ມີຖຸນາ 2018).

ອີງຕາມກົດໝາຍວ່າດ້ວຍພາສີ ເລກທີ 259 ນັບແຕ່ວັນທີ 1 ມັງກອນ 2020 ເປັນຕົ້ນໄປ, ບໍລິສັດໄດ້ຄິດໄລ່ອາກອນກຳໄລຂອງ ລາຍຮັບອາກອນສຸດທິໃນອັດຕາ 13% ພາຍຫຼັງທີ່ພິຈາລະນາລາຍຮັບ ແລະ ລາຍຈ່າຍທີ່ບໍ່ຫັກລົບແມ່ນຖືກຕ້ອງຕາມກົດໝາຍວ່າ ດ້ວຍສ່ວຍສາອາກອນຂອງລາວ.

ຢຸ ສປປ ລາວ, ການຄືນພາສີລາຍຮັບແມ່ນໄດ້ຮັບການກວດກາຄືນຢ່າງເປັນປົກກະຕິໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ນອກນີ້ ບັນຫາພາສີ ທີ່ຍົກອອກມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ຕີລາຄາຢ່າງຕັ້ງໜ້າຈາກຝ່າຍຕ່າງໆ.

ດັ່ງນັ້ນ, ການທົບທວນຄືນອາດຈະເຮັດໃຫ້ມີການຊຳລະພາສີເພີ່ມເຕີມ ຫຼື ການສົ່ງເງິນຄືນແມ່ນມີຄວາມຈຳເປັນທີ່ອາດຈະມີຄວາມສຳ ຄັນ ເຊິ່ງຈະສົ່ງຜົນໃຫ້ມີການດັດແກ້ບັນຊີອາກອນລາຍໄດ້ໃນປີທີ່ໄດ້ທົບທວນຄືນ ຂອງເຈົ້າໜ້າທີ່ສ່ວຍສາອາກອນ.

ສຳລັບປີສິ້ນສຸດວັນທີ 31 ທັນວາ 2021, ບໍລິສັດໄດ້ຮັບຮູ້ລາຍຈ່າຍອາກອນລາຍໄດ້ໃນໃບລາຍງານຜົນລາຍຮັບ 1.299 ລ້ານກີບ (2020: 1.124 ລ້ານກີບ)

## 20. ລາຍການກັບພາກສ່ວນທີ່ກ່ຽວຂ້ອງ

| ຊື່ບັນຊີ/ຊື່ບໍລິສັດ | ສາຍພົວພັນ | 2021<br>ກີບ | 2020<br>ກີບ |
|---|---|---|---|
| **ໜີ້ຕ້ອງສົ່ງໃນທຸລະກິດ** | | | |
| ເຈບີ ຮອນດ້າ | (1) | 208.660.000 | 99.375.000 |
| ເຈບີ ຮອນດ້າ ໂນນສະຫວ່າງ | (1) | 104.546.000 | 79.604.000 |
| ເຈບີ ຮອນດ້າ ທ່າງ່ອນ | (1) | - | 11.096.000 |
| | | **313.206.000** | **190.075.000** |

## 20. ລາຍການກັບພາກສ່ວນທີ່ກຽວຂ້ອງ (ຕໍ່)

| ຊື່ບັນຊີ/ຊື່ບໍລິສັດ | ສາຍພົວພັນ | 2021<br>ກີບ | 2020<br>ກີບ |
|---|---|---|---|
| **ໜີ້ຕ້ອງສົ່ງອື່ນໆ** | | | |
| ເຈ້ຍ ຮອນດ້າ | (1) | 21.250.000 | 13.020.000 |
| ເຈ້ຍ ຮອນດ້າ ໂນນສະຫວ່າງ | (1) | 17.500.000 | 9.410.000 |
| ເຈ້ຍ ຮອນດ້າ ທ່າງ່ອນ | (1) | - | 5.706.000 |
| | | **38.750.000** | **28.136.000** |
| ລາຍຈ່າຍຄ້ຳປະກັນ | | | |
| ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ | ຜູ້ຖືຮຸ້ນ | - | 367.549.304 |
| | | | **367.549.304** |

| ຊື່ບັນຊີ/ຊື່ບໍລິສັດ | ສາຍພົວພັນ | 2021<br>ກີບ | 2020<br>ກີບ |
|---|---|---|---|
| **ຊື້ຊັບສິນເພື່ອການເຊົ່າ** | | | |
| ເຈ້ຍ ຮອນດ້າ | (1) | 3.006.647.000 | 3.357.246.000 |
| ເຈ້ຍ ຮອນດ້າ ໂນນສະຫວ່າງ | (1) | 2.685.163.000 | 2.168.491.000 |
| ເຈ້ຍ ຮອນດ້າ ທ່າງ່ອນ | (1) | 332.538.000 | 800.688.000 |
| | | **6.024.348.000** | **6.326.425.000** |
| **ລາຍຈ່າຍນາຍໜ້າ** | | | |
| ເຈ້ຍ ຮອນດ້າ | (1) | 164.250.000 | 207.250.000 |
| ເຈ້ຍ ຮອນດ້າ ໂນນສະຫວ່າງ | (1) | 148.750.000 | 136.950.000 |
| ເຈ້ຍ ຮອນດ້າ ທ່າງ່ອນ | (1) | 18.750.000 | 53.400.000 |
| | | **331.750.000** | **397.600.000** |
| **ລາຍຈ່າຍອື່ນໆ** | | | |
| ເຈ້ຍ ຮອນດ້າ | (1) | 58.198.000 | 26.832.000 |
| ເຈ້ຍ ຮອນດ້າ ໂນນສະຫວ່າງ | (1) | 53.830.000 | 14.861.500 |
| ເຈ້ຍ ຮອນດ້າ ທ່າງ່ອນ | (1) | 7.020.000 | 19.072.100 |
| | | **119.048.000** | **60.765.600** |

## 20. ລາຍການກັບພາກສ່ວນທີ່ກຽວຂ້ອງ (ຕໍ່)

ທຸລະກຳສຳລັບປີປະກອບດ້ວຍດັ່ງຕໍ່ໄປນີ້.

| | ລາຍພົວພັນ | 2021<br>ກີບ | 2020<br>ກີບ |
|---|---|---|---|
| **ລາຍຈ່າຍດອກເບ້ຍ** | | | |
| ທ່ານ ນາງ ອິນທະວິໄລ ອຸດົມ | ຜູ້ຖືຮຸ້ນ ແລະ ຮອງ ປະທານ ສະພາບໍລິຫານ | - | 122.228.021 |
| ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ | ຜູ້ຖືຮຸ້ນ | - | 723.288.207 |
| | | | **845.516.228** |
| **ລາຍຈ່າຍຄ້ຳປະກັນ** | | | |
| ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ | ຜູ້ຖືຮຸ້ນ | 1.793.954.174 | 367.549.304 |
| | | **1.793.954.174** | **367.549.304** |

(1) ຜູ້ອຳນວຍການບໍລິສັດແມ່ນຜູ້ຖືຮຸ້ນຂອງມະຫະທຶນ.

ຄ່າຕອບແທນຂອງຜູ້ບໍລິຫານ ສຳລັບປີສິ້ນສຸດວັນທີ 31 ທັນວາ, ປະກອບມີດັ່ງນີ້:

| ຊື່ບັນຊີ/ຊື່ບໍລິສັດ | 2021<br>ກີບ | 2020<br>ກີບ |
|---|---|---|
| ຜົນປະໂຫຍດໄລຍະສັ້ນ | 805.000.000 | 829.630.856 |

## 21. ພາລະຜູກພັນ

### ກ. ພາລະຜູກພັນຈາກການລົງທຶນ

ໃນວັນທີ 31 ທັນວາ 2021, ບໍລິສັດບໍ່ມີພາລະຜູກພັນກ່ຽວຂ້ອງກັບຊອບແວຄອມພິວເຕີທີ່ຢູ່ໃນລະຫວ່າງການຕິດຕັ້ງ (2020: 96,02 ລ້ານ).

## 21. ພາລະຜູກພັນ (ຕໍ່)

### ຂ. ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານ

ບໍລິສັດ ມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີ່ຫ້ອງການ

ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

| | 2021<br>ກີບ | 2020<br>ກີບ |
|---|---|---|
| ພາຍໃນ 1 ປີ | 126.981.858 | 150.037.955 |
| ເກີນ 1 ປີ ແຕ່ບໍ່ເກີນ 5 ປີ | 1.340.322.412 | 1.381.246.738 |
| ເກີນ 5 ປີ | 31.006.070 | 362.514.661 |
| | **1.498.310.340** | **1.893.799.354** |

## 22. ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງບົດລາຍງານຖານະການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກໃນຂໍ້ມູນການເງິນຂອງ ບໍລິສັດ.

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

# ຄຳແນະນຳກ່ຽວກັບການລົງຄະແນນສຽງ

## Instruction for vote

1. ຜູ້ເຂົ້າຮ່ວມປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ, ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ຜູ້ມອບໝາຍສິດ ໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນສຽງໃນແຕ່ລະວາລະ ມຫທຊ ຈະບັນທຶກການລົງຄະແນນສຽງໃນເວລາ ລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ.

   The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, MHTL will record such voted at the time of the registration and the proxy will not be required to vote.

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈະເປັນຕ້ອງລົງຄະແນນສຽງໃດໆ).

   Only the shareholders who DO NOT AGREE with the matters proposed by the meeting are invited to vote ( meaning that for those who agree with such appointment are not necessary to make any vote.)

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນຕ້ອງໄດ້ລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ມຫຊທ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.

   To vote, kindly fill in the distributed ballot in which you must specify clearly about your name and surname, and the total number of MHTL shares you are holding and mark a cross in the Disapprove box.

4. ຫຼັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ

   After you have clearly casted your vote, kingly raise your hand with the ballot, so the organizers can take the ballot and count the votes.

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

5. ທ່ານຈະໄດ້ຮັບແຈ້ງກ່ຽວກັບການນັບຄະແນນໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.

   You will be informed about the voting result right in the meeting with one share equals on vote.

6. ການລົງຄະແນນສຽງທີ່ບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ມຫຊທ ທັງໝົດໃນທີ່ປະຊຸມ

   The Disapproval votes will become effective only if such votes account for more than half of the total number of MHTL attending the meeting.

ໝາຍເຫດ/Remark:

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.

   Any attendees who failed to make registration will not be eligible to votes.

2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

   All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

## ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ

## Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມທທຊ), ຜູ້ຖືຮຸ້ນ ແລະ ຜູ້ຕ່າງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນາມານຳເອົາ ໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະໃບມອບສິດ(ສຳລັບຜູ້ຕາງໜ້າ) ມາ ພ້ອມເອກະສານທີ່ສາມາດນຳໃຊ້ຢັ້ງຢືນຕົນເອງຕາມແຕ່ລະກໍລະນີດັ່ງນີ້:

For convenience in registration process to attend the Annual General Shareholders' Meeting for the Year 2021 of Mahathuen Leasing Public Company (MHTL), shareholders or the proxies who will attend the Meeting, are required to bring the Invitation to the Meeting, the Letter for attending the meeting issued by the Lao Securities Exchange (LSX) and the Proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ /Individual attendee

   ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

   Shall present on of the following documents of their own at the time of registration

   1.1 ບັດປະຈຳຕົວ/ Identification card

   1.2 ສຳມະໂນຄົວ/ Family book

   1.3 ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/ Passport (for foreign investors)

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ/ Entity attendees

   ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິ່ງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາລົງທະບຽນ:

   Shall present one of the documents as given in the 1 above plus one of the following documents at the time of registration:

   2.1 ໃບອະນຸຍາດລົງທຶນ/ Investment license

   2.2 ໃບທະບຽນວິສະຫະກິດ/ Certificate of Enterprise Registration

   2.3 ໃບທະບຽນອາກອນສະບັບຫຼ້າສຸດ/ Recent Tax Certificate

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດ ມາພ້ອມຕື່ມອີກ

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງປະເທດແມ່ນອະນຸຍາດໃຫ້ສຳລັບພາສາອັງກິດ ຫຼື ພາສາໄທເທົ່ານັ້ນ. ມຫທຊ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມການກຳນົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English and Thai. MHTL has the right to reject any documents contradicting this provision.

**MAHATHUEN LEASING PUBLIC COMPANY**

628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR

TEL 021 418062 - 418066

# ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ
# CV of Board of Directors

| | |
|---|---|
| 1. ທ່ານ ຊາຄຣິດ ນັກສອນ<br>Mr. Chakrit Naksorn | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/Date of birth : 26 November 1961<br>ສັນຊາດ/Nationality : ໄທ<br>ພາສາ/Language : ໄທ, ລາວ, ອັງກິດ/Thai, Lao and English<br>ຕຳແໜ່ງ/Position : ປະທານ ສະພາບໍລິຫານ MHTL/Chairman<br>ວັນທີຮັບຕຳແໜ່ງ/Date of appointed : 10 August 2017<br>**ປະຫວັດການສຶກສາ/Education:**<br>ປີ 1987 : Bachelor's degree B.S. Industrial Engineering, Manila University, Philippines<br>**ປະຫວັດການເຮັດວຽກ/Experience:**<br>ປີ 1995-1998 : ເປັນທີ່ປຶກສາ, ບໍລິສັດ ລັດດາວ ຄອມມູນິ ເຄຊັ່ນ ຈຳກັດ, ເຈົ້າຂອງທຸລະກິດ<br>ປີ 2013-ປະຈຸບັນ : ເປັນທີ່ປຶກສາ, ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ, ຜູ້ສ້າງຕັ້ງ Consultant, Mahathun Holding Co., Ltd.<br>ປີ 2017-ປະຈຸບັນ : ປະທານສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Chairman, MHTL |
| 2. ທ່ານນາງ ອິນທະວິໄລ ອຸດົມ<br>Mrs. Inthavilay Oudom | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/Date of birth : 27 September 1961<br>ສັນຊາດ/Nationality : ລາວ/Lao<br>ພາສາ/Language : ໄທ, ອັງກິດ/Thai and English<br>ຕຳແໜ່ງ/Position : ຮອງປະທານ ສະພາບໍລິຫານ MHTL/Vice Chairman<br>ວັນທີຮັບຕຳແໜ່ງ/Date of appointed : 10 August 2017<br>**ປະຫວັດການສຶກສາ/Education:**<br>ປີ : Bachelor's degree<br>**ປະຫວັດການເຮັດວຽກ/Experience**<br>ປີ 1981 – 1998 : ປະກອບທຸລະກິດ ຮ້ານຂາຍເສື້ອຜ້າ/Proprietor of Clothes shop<br>ປີ 1998 – 2000 : ປະກອບທຸລະກິດ ບໍລິສັດ ດາລາຄອນຊຸມເມີ້/ Dala consumer<br>ປີ 2000 - ປະຈຸບັນ : ບໍລິສັດ ເຈບີ ຂາເຂົ້າ-ຂາອອກ ຈຳກັດ, ເຈົ້າຂອງທຸລະກິດ JB Trading Sole Co., Ltd.<br>ປີ 2012 - ປະຈຸບັນ : ທຸລະກິດ ບໍລິສັດ ເຈບີ ຮອນດ້າ ສ່ວນບຸກຄົນ, ເຈົ້າຂອງທຸລະກິດ JB Honda Sole Co., Ltd.<br>ປີປີ 2016 - ປະຈຸບັນ : ປະກອບທຸລະກິດ ບໍລິສັດ ທີ່ເອີສອາ ລາວ ຈຳກັດ, TSR Lao Co., Ltd.<br>ປີ 2017-ປະຈຸບັນ : ຮອງປະທານສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Vice Chairman, MHTL |

| | |
|---|---|
| 3. ທ່ານ ມານົບ ຕຣິລິດວິໄລ<br>Mr. Manop Tririthvilay | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/date of birth : 12 April 1965<br>ສັນຊາດ/Nationality : ໄທ/Thai<br>ພາສາ/Language : ໄທ,ລາວ, ອັງກິດ/ Thai, Lao and English<br>ຕຳແໜ່ງ/Position : ຜູ້ອຳນວຍການໃຫຍ່ ແລະ ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ/CEO of MHTL<br>ວັນທີຮັບຕຳແໜ່ງ/Date of appointed: 10 August 2017<br>**ປະຫວັດການສຶກສາ:**<br>ປີ 1987 : Bachelor of Business Administration (B.B.A), Bangkok, Thailand Major Information System, Institute of Technology and Vocational Education<br>ປີ 1993 : Master degree in Applied Statistics, Major Computer Science, National Institute of Development Administration (NIDA)Bangkok, Thailand<br>**ປະຫວັດການເຮັດວຽກ/ Experience**<br>ປີ 1985 – 1989 : ວິຊາການຜູ້ກວດສອບພາຍໃນ, ທະນາຄານກະສິກອນ ມະຫາຊົນ ຈຳກັດ, ປະເທດໄທ/Internal Audit, Kasikorn Bank Public Co.,Ltd<br>ປີ 1989 – 1991 : ວິຊາການຜູ້ກວດສອບພາຍໃນ, ທະນາຄານແຫ່ງປະເທດໄທ Internal Audit, Bank of Thailand<br>ປີ 1991 – 1995 : ຜູ້ຊ່ວຍຜູ້ຈັດການ, ບໍລິສັດ ທະນະພົນ ການເງິນ ແລະ ຫຼັກຊັບ ມະຫາຊົນ ຈຳກັດ, ປະເທດໄທ<br>Assistant section manager, Thanapon Finance and Securities PCL.<br>ປີ 1995 – 2008 : ຮອງຜູ້ອຳນວຍການ, ບໍລິສັດ ບີທີ ເວີລີສ໌ ຈຳກັດ, ປະເທດໄທ<br>Executive Vice President BT Worldlease Co., Ltd. ປະເທດໄທ<br>ປີ 2008 – 2015 : ຜູ້ອຳນວຍການຝ່າຍປະຕິບັດການ, ບໍລິສັດ ຊູຊຸກິ ເຊົ່າສິນເຊື່ອ ອິນເຕີເນັດເຊີນເນอ (ໄທແລນ) ຈຳກັດ, ປະເທດໄທ<br>COO, Suzuki Leasing International (Thailand) Co., Ltd.<br>ປີ 2016-ປະຈຸບັນ : ຜູ້ອຳນວຍການໃຫຍ່, ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>CEO, MHTL |
| 4.ທ່ານນ. ປຣາດຖະໜາ ນັກສອນ<br>Mrs. Prathana Naksorn | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/Date of birth : 13 February 1968<br>ສັນຊາດ/Nationality : ໄທ/Thai<br>ພາສາ/Language : ໄທ, ລາວ, ອັງກິດ/Thai, Lao and English<br>ຕຳແໜ່ງ/Position : ສະມາຊິກສະພາບໍລິຫານ ບໍລິສັດ ເຊົ່າສິນເຊື່ອ ມະຫາຊົນ Member of Board of Directors, MHTL<br>ວັນທີຮັບຕຳແໜ່ງ/Date of appointed : 10 August 2017 |

| | |
|---|---|
| | **ປະຫວັດການສຶກສາ/Education:**<br>ປະລິນຍາຕຣີ: Bachelor's degree of business administration, University of the Thai Chamber of Commerce<br>**ປະຫວັດການເຮັດວຽກ/Experience**<br>ປີ 1995 – 1998 : ປະກອບທຸລະກິດ ໃຫ້ຄຳປຶກສາ, ລັດດາວ ຄອມມູນິເຄຊັ່ນ ຈຳກັດ<br>ປີ 2013 - ປະຈຸບັນ : ປະກອບທຸລະກິດ, ໃຫ້ຄຳປຶກສາ, ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ Consultant, Mahathun Holding Co., Ltd.<br>ປີ 2017-ປະຈຸບັນ : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Member of Board of Directors, MHTL |
| 5. ທ່ານ ນ. ສຸທິດາ ນັກສອ<br>Mrs. Sutida Naksorn | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/Date of birth : 02 September 1960<br>ສັນຊາດ/Nationality : ໄທ/Thai<br>ພາສາ/:Language : ອັງກິດ/English<br>ຕຳແໜ່ງ/Position : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Member of Board of Directors, MHTL<br>ວັນທີຮັບຕຳແໜ່ງ/Date of appointed : 5 March 2018<br>**ປະຫວັດການສຶກສາ/Education:**<br>ປີ 1981 : Bachelor's degree of Accounting, Chiang Mai University, Thailand<br>**ປະຫວັດການເຮັດວຽກ/Experience**<br>ປີ 1982 – 1990 : ພະນັກງານບໍລິຫານບຸກຄະລາກອນ, ບໍລິສັດ ການໄຟຟ້າຝ່າຍຜະລິດ ແຫ່ງປະເທດໄທ.<br>ປີ 2000 - ປະຈຸບັນ : ປະກອບທຸລະກິດ ອະສັງຫາລິມະຊັບ<br>ປີ 2018 -ປະຈຸບັນ : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Member of Board of Directors, MHTL |
| 6. ທ່ານ ກຽງໄກ ນິດສະຍັນ<br>Mr. Kriengkrai Nissyan | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/ Date of birth : 14 March 1967<br>ສັນຊາດ/ Nationality : ໄທ/Thai<br>ພາສາ/ Language : ອັງກິດ/English ,ໄທ/Thai<br>ຕຳແໜ່ງ/ Position : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Member of Board of Directors, MHTL<br>ວັນທີຮັບຕຳແໜ່ງ/ Date of appointed : 10 August 2017<br>**ປະຫວັດການສຶກສາ/Education:**<br>ປີ 1989 : Bachelor of Engineer in Computer Engineering, KingMongkut Institute of Technology Lardkabang (KMITL), ປະເທດໄທ<br>ປີ 1993 : Master of Science in Applied Statistics, Computer Science Major, National Institute of Development Administration (NIDA), ປະເທດໄທ<br>**ປະຫວັດການເຮັດວຽກ/Experience** |

| | |
|---|---|
| | ปี 1989 – 1990 : Project Leader, Kian Gwan Commercial Co.,Ltd (NCR Thailand)<br>ปี 1990 – 1993 : System Engineer Supervisor Kian Gwan Commercial Co.,Ltd (NCR Thailand)<br>ปี 1993 – 1993 : System Engineer Supervisor, Shinawatra Computer and Communications Public Co.,Ltd<br>ปี 1993 – 1995 : Technical Support Manager, Advance Information Technology Public Co., Ltd<br>ปี 1995 – 2001 : Technical Support Director, Advanced Information Technology Public Co., Ltd<br>ปี 2001 – 2002 : Technical Support Manager, Lucent Technologies Inc<br>ปี 2002 – 2005 : Channel Director. Lucent Technologies Inc<br>ปี 2005 – 2006 : Country Manager. Marconi Communications(Thailand)Ltd<br>ปี 2005 – 2006 : Senior Business Development Manager – Broadband Networks. Ericsson (Thailand) Ltd<br>ปี 2006 - ปะจุบัน : Senior Vice President, Business Development Advanced Information Technology PCL.<br>Director Mahathun Holding Co., Ltd<br>ปี 2017-ปะจุบัน : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>Member of Board of Directors, MHTL |
| 7. ท่าน อินยู จิละปะพาภาน<br>Mr. Winyou Jeeraprapakan | **ຊີວະປະຫວັດຫຍໍ້/CV**<br>ວັນ,ເດືອນ,ປີເກີດ/Date of birth : 12 Jan 1977<br>ສັນຊາດ/Nationality : ไท/Thai<br>ພາສາ/Language : ลาว, อังกีด, อัดเซย/ Lao, English, Russian<br>ตำแหน่ง/Position: ສະມາຊິກສະພາບໍລິຫານ (ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ/Member of Board of Directors (Independent)<br>ວັນທີແຕ່ງຕັ້ງ/Date of Appointed: 29 May 2020<br>**ປະຫວັດການສຶກສາ/Education:**<br>• Master degree – Economics (NIDA)<br>• Bachelor degree – Science (Khonkaen University)<br>**ປະຫວັດການເຮັດວຽກ/Exprerince:**<br>• 2018 – Present – Vice President, Tanakit Infinity Plus Co., Ltd. Asset and Debt management company<br>• 2003 – Present – Managing Director, Ubonvibool Part., Ltd. The Authorized Distribution of Maxxis International Co., Ltd.<br>• 2001 – Present – Managing Director, Car Clinic Part., Ltd.<br>ปี 2020-ปะจุบัน : ສະມາຊິກສະພາບໍລິຫານ (ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>Member of Board of Directors (Independent), MHTL |

| | |
|---|---|
| 8. ທ່ານ ນັນທະພັດ ງາມປລັ່ງ<br>Mr. Nantapat Ngamplung | **ຊີວະປະຫວັດຫຍໍ້/CV**<br>ວັນ,ເດືອນ,ປີເກີດ/Date of birth : 21 July 1981<br>ສັນຊາດ/Nationality : ໄທ/Thai<br>ພາສາ/Language : ໄທ, ອັງກິດ/ Thai, English<br>ຕຳແໜ່ງ/Position: ສະມາຊິກສະພາບໍລິຫານ(ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ/ Member of Board of Directors (Independent)<br>ວັນທີແຕ່ງຕັ້ງ/Date of Appointed: 10 August 2017<br>**ປະຫວັດການສຶກສາ/ Education:**<br>ປີ 2003 : ປະລິຍາຕຣີ ບັນຊີ, ມະຫາວິທະຍາໄລກະເສດສາດ, ປະເທດໄທ<br>Bachelor's Degree of Accounting, Kasetsart University, Thailand<br>**ປະຫວັດການເຮັດວຽກ/Experience:**<br>ປີ 2003 – 2004 : Internal audit, Italian-Thai Development PLC.<br>ປີ 2004 – 2011 : Auditor, Assistant manager, BDO Co., Ltd.<br>ປີ 2012 - ປະຈຸບັນ : Auditor manager, Professional auditing Service Co.,Ltd<br>ປີ 2017-ປະຈຸບັນ : ສະມາຊິກສະພາບໍລິຫານ (ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>Member of Board of Directors (Independent), MHTL |
| 9. ທ່ານ ທີລະເມດ ວຸດທິພັດພິບູນ<br>Mr. Theeramate Vuttipadhpibul | **ຊີວະປະຫວັດຫຍໍ້/CV**<br>ວັນ,ເດືອນ,ປີເກີດ/Date of birth: 20 September 1967<br>ສັນຊາດ/Nationality: ໄທ/Thai<br>ພາສາ/Language: ໄທ, ອັງກິດ/ Thai, English<br>ຕຳແໜ່ງ/Position: ສະມາຊິກສະພາບໍລິຫານ(ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ /Member of Board of Directors (Independent)<br>ວັນທີແຕ່ງຕັ້ງ/Date of Appointed: 10 August 2017<br>**ປະຫວັດການສຶກສາ/Education:**<br>ປີ 1989 : ປະລິນຍາຕຣີ ບັນຊີ, ມະຫາວິທະຍາໄລ ຈຸລາລົງກອນ<br>Bachelor's degree of Accounting, Chulalongkorn University<br>ປີ 1997 : ປະລິນຍາໂທ ການບໍລິຫານທຸລະກິດ, ມະຫາວິທະຍາໄລທຳມະສາດ<br>Master's degree of business administration, Thammasat University<br>**ປະຫວັດການເຮັດວຽກ/Experience:**<br>ປີ 1989 – 1992 : Senior Auditor, SCG-Na Co.,LTD (Anthur Anderson Group)<br>ປີ 1992 – 1994 : Chief Accountant, Siam Syntech Construction PCL<br>ປີ 1994 – 1997 : Manager, UTV Cable Network PCL ( Television )<br>ປີ 1997 – 1998 : Senior Manager, Cineplex Co.,Ltd |

| | |
|---|---|
| | ปี 1998 – 2003: Financial Controller and Office Manager, Asia Pacific Potash Co.,Ltd<br>ปี 2003 – 2007: Manager, Boots Retail Thailand Co.,Ltd<br>ปี 2007 – 2012 : Senior Manager, California WOW Xperience PCL(CAWOW)<br>ปี 2013 – 2014 : Senior Manager. WE Fitness Co.,Ltd (Related Company of Major Group PCL)<br>ปี 2014 – 2015 : Head of Accounting and Finance. Ticon Management Co., Ltd.<br>ปี 2015 – 2015 : CFO, Kriz Co., Ltd. (Former subsidiary of AIT PCL)<br>ปี 2015 - ปะจุบัน: Executive Vice President Business, Advance Information Technology PCL<br>ปี 2017-ปะจุบัน : ສະມາຊິກສະພາບໍລິຫານ (ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>Member of Board of Directors (Independent), MHTL |

**MAHATHUEN LEASING PUBLIC COMPANY**
628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR
TEL 021 418062 - 418066

# Map of meeting venue

- **Landmark Mekong Riverside Hotel, Thatkhao Village, Sisattanak District, Vientiane, Lao PDR**
- **Tel: 021 266 888**

